LIBRARIES
UNIVERSITY OF WISCONSIN–MADISON

# Peace talks (Royal Lao Government and Neo Lao Hak Xat). 1972-12

[s.l.]: [s.n.], 1972-12

https://digital.library.wisc.edu/1711.dl/JGE6ZSFWB5V6X8K

This material may be protected by copyright law (Title 17, US Code).

For information on re-use see:
http://digital.library.wisc.edu/1711.dl/Copyright

The libraries provide public access to a wide range of material, including online exhibits, digitized collections, archival finding aids, our catalog, online articles, and a growing range of materials in many media.

When possible, we provide rights information in catalog records, finding aids, and other metadata that accompanies collections or items. However, it is always the user's obligation to evaluate copyright and rights issues in light of their own use.

728 State Street | Madison, Wisconsin 53706 | library.wisc.edu

8ème séance

5.12.72
5 DEC 1972

ບົດຄຳຕິດຄຳເຫັນ

ຂອງ ທ່ານ ໂຊດ ເພັດລາສີ, ຮອງຫົວໜ້າຄະນະ, ຜູ້ວ່າການແທນ ຫົວໜ້າຄະນະ ຜູ້ແທນ ບັນດາ ກຳລັງຮັກຊາດ, ໃນວາລະປະຊຸມ ເທື່ອທີ ໘ (ວັນທີ ໕/໑໒/໗໒).

---

ບັນດາທ່ານ,

ໃນວາລະປະຊຸມ ເທື່ອແລ້ວນີ້, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ກໍໄດ້ໃຫ້ຄຳເຫັນຢ່າງ ລະອຽດ ແລະຈະແຈ້ງພໍສົມຄວນແລ້ວ ຕໍ່ຂໍ້ສະເໜີ ທີ່ຄະນະຜູ້ແທນຝ່າຍວຽງຈັນໄດ້ວາງອອກ ໃນ ວາລະປະຊຸມເທື່ອທີ ໗. ເບິ່ງລວມແລ້ວ, ຂໍ້ສະເໜີ ຂອງພວກທ່ານ ໃນດ້ານພື້ນຖານ ແມ່ນແຕກຕ່າງ ກັນຫຼາຍ ກັບເນື້ອໃນ ຂອງວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ ຄືດັ່ງພວກຂ້າພະເຈົ້າ ໄດ້ເວົ້າມາແລ້ວ ໃນວາລະປະຊຸມເທື່ອກ່ອນ. ໃນຕົວຈິງແລ້ວ, ກໍແມ່ນພວກທ່ານ ປະຕິເສດວິທີການການ ເມືອງ ໕ ຂໍ້ ຂອງພວກຂ້າພະເຈົ້າ ເຊິ່ງຝ່າຍພວກທ່ານກໍໄດ້ຮັບເອົາ ເປັນພື້ນຖານປຶກສາຫາລືກັນແລ້ວ. ໃນຄຳເວົ້າ, ພວກທ່ານເຮັດຄືວ່າ ຕົນມີຄວາມຈິງໃຈ ຢາກແກ້ໄຂບັນຫາລາວໂດຍໄວ, ແຕ່ເບິ່ງການ ກະທຳຕົວຈິງແລ້ວ, ຊໍ້າພັດກົງກັນຂ້າມ. ພວກທ່ານບໍ່ພຽງແຕ່ບໍ່ຍອມຮັບຮູ້ ຄວາມຈິງທີ່ໂປ່ໂລ່ອອກ ຢູ່ຕໍ່ ໜ້າຕາ ຂອງທຸກຄົນ ເຊິ່ງໃຜໆກໍເຫັນໄດ້ທັງນັ້ນ, ແຕ່ພວກທ່ານຍັງຫາວິທີບິດເບືອນ, ປີ້ນຂາວເປັນ ດຳ, ຫຼອກລວງ ແລະ ໜ່ວງໜ່ຽວການເຈລະຈາ ບໍ່ໃຫ້ຄືບໜ້າໄປໄດ້.

ໃນວາລະປະຊຸມເທື່ອນີ້, ພວກຂ້າພະເຈົ້າເຫັນມີຄວາມຈຳເປັນ ຕ້ອງຂະຫີບາງບາງຈຸດຕື່ມ ອີກ ເພື່ອຢືນຢັນຄືນໃໝ່ ກ່ຽວກັບສະພາບການຕົວຈິງຢູ່ລາວໃນປະຈຸບັນ, ເຮັດໃຫ້ຄະນະຜູ້ແທນທັງສອງ ຂອງພວກເຮົາ ເຫັນເປັນເອກະສັນກັນ ແລະ ມີພື້ນຖານບົນ ທີ່ຈະພ້ອມກັນ ຊອກຫາວິທີການແກ້ໄຂ ບັນຫາລາວ ຢ່າງເໝາະສົມ, ຖືກແທດກັບຕົວຈິງ ແລະ ຢ່າງໝັ້ນຄົງຖາວອນໄດ້.

ໃນວາລະປະຊຸມຕ່າງໆທີ່ຜ່ານມາ, ພວກຂ້າພະເຈົ້າກໍໄດ້ເວົ້າຢ່າງຈະແຈ້ງແລ້ວວ່າ ຕົ້ນເຫດ ຂອງສະພາບການເຄັ່ງຕຶງ, ເດືອດຮ້ອນຢູ່ລາວ ແມ່ນການແຊກແຊງຮຸກຮານ ຂອງອາເມລິກາ. ເປັນ ທີ່ຊາບກັນທົ່ວໄປແລ້ວວ່າ, ໃນເກືອບ ໒໐ ປີມານີ້ ຈັກກະພັດອາເມລິກາ ໄດ້ດຳເນີນການແຊກແຊງ ຮຸກຮານລາວ ນັບມື້ນັບຮ້າຍແຮງ. ສະເພາະຢ່າງຍິ່ງ ໃນ ໔ ປີຫຼັງນີ້, ໂດຍປະຕິບັດຕາມທິດສະດີ ນິກສັນ ທີ່ແມ່ນໃສ່ເອົາຄົນລາວຂ້າຄົນລາວ, ເອົາຄົນອິນດູຈີນຂ້າຄົນອິນດູຈີນ, ເອົາຄົນອາຊີຂ້າຄົນອາຊີ, ຈັກກະພັດອາເມລິກາ ໄດ້ຍູ້ສົງຄາມພິເສດ ຂອງພວກເຂົາຢູ່ລາວ ຂຶ້ນສູ່ລະດັບສູງທີ່ສຸດ ຢ່າງບໍ່ເຄີຍມີມາ ແຕ່ກ່ອນ. ຈັກກະພັດອາເມລິກາ ໄດ້ຖອກເທລູກລະເບີດລົງໃສ່ ດິນແດນລາວທັງເວັນ ແລະ ຄືນ ຄິດ ສະເລ່ຍແລ້ວ, ມື້ລະ ໓.໐໐໐ ໂຕນ, ເຮັດໃຫ້ເຮືອນຊານບ້ານຊ່ອງ ໄຮ່ນາຮົ້ວສວນ ຂອງປະຊາຊົນ, ໂຮງຮຽນ, ໂຮງໝໍ, ວັດວາອາຮາມ ຖືກທຳລາຍ ເພ່ເພຢ່າງນັບບໍ່ຖ້ວນ, ປະຊາຊົນສາມັນ, ເປັນ ຕົ້ນແມ່ຍິງ, ເດັກນ້ອຍ, ຜູ້ເຖົ້າໄດ້ຖືກລົ້ມຕາຍດາຍຈາກ ແລະ ຕົກທຸກໄດ້ຍາກຢ່າງແສນສາຫັດທີ່ສຸດ. ກອງທະຫານໄທ ຈຳນວນນັບມື້ນັບຫຼາຍ ແລະ ກອງທະຫານຫຸ່ນໄຊ່ງ່ອນ ທີ່ພວກມັນໄດ້ນຳເອົາເຂົ້າມາ ລາວ ສົມທົບກັບກອງທະຫານຝ່າຍຂວາ ແລະ ກອງກຳລັງພິເສດ ເຊິ່ງທັງໝົດເຫຼົ່ານີ້ ຢູ່ພາຍໃຕ້ການ ບັງຄັບບັນຊາໂດຍກົງ ຂອງອາເມລິກາ ແລະ ພາຍໃຕ້ການຄຸ້ມກັນ ຂອງກອງທັບອາກາດ ອາເມລິກາ

ໄດ້ດຳເນີນການບຸກໂຈມຕີບຽດຮີດ ເຂົ້າເຂດປົດປ່ອຍ ຢ່າງລຽນຕິດ ແຕ່ເໜືອຮອດໃຕ້ ດ້ວຍຂະໜາດຕ່າງໆກັນ. ເມື່ອໄປຮອດບ່ອນໃດ, ພວກເຂົາໄດ້ເຂັ່ນຂ້າຮາວີປະຊາຊົນ, ຈູດເລົ້າເຂົ້າ ເຜົາຫຼັງເຮືອນ, ທຳລາຍໄຮ່ນາຮົ້ວສວນ ສັດສາວາສິ່ງ ແລະ ໃຊ້ອຳນາດປາງປືນ ບັງຄັບເອົາປະຊາຊົນໄປຕ້ອນໂຮມຢູ່ໃນຄ້າຍຄຸມຂັງທີ່ເອີ້ນວ່າ "ເຂດອົບພະຍົບ", "ບ້ານສາມັກຄີ", "ເຂດພັດທະນາ" ເຮັດໃຫ້ປະຊາຊົນ ທີ່ບໍ່ມີຄວາມຜິດຫຍັງເຫຼົ່ານັ້ນ ຕ້ອງມີຊີວິດທຸກຍາກລຳບາກ ຢ່າງແສນສາຫັດ ແລະ ເຈັບເປັນລົ້ມຕາຍ ເປັນຈຳນວນຫຼວງຫຼາຍ ຍ້ອນຂາດອາຫານການກິນ ແລະ ຂາດການປິ່ນປົວ. ສ່ວນພວກຊາວໜຸ່ມກໍໄດ້ຖືກບັງຄັບໄປເປັນທະຫານ ອັນໄດ້ເຮັດໃຫ້ພວກເຂົາເຈົ້າ ລົ້ມຕາຍໃນສະໜາມຮົບຢ່າງໄຮ້ປະໂຫຍດ.

ໃນການດຳເນີນສົງຄາມນີ້, ສະຖານທູດອາເມລິກາ, ອົງການ ຢູເສດ, ຢູສິດ ແລະ ກົມສືບລາຊະການລັບ ສູນກາງອາເມລິກາ, ໄດ້ເປັນຕົວແທນ ໃຫ້ທຳນຽບຂາວ ແລະ ທຳນຽບຫ້າແຈ ຢູ່ວໍຊິງຕັນ, ບັງຄັບບັນຊາສົງຄາມຮຸກຮານ ຂອງອາເມລິກາຢູ່ລາວໂດຍກົງ. ກ່ຽວກັບເລື່ອງນີ້, ອົງການກຳອຳນາດອາເມລິກາເອງ, ບັນດາໜັງສືພິມ ແລະ ສຳນັກຂ່າວສານ ຕ່າງຕາເວັນຕົກ ກໍລ້ວນແຕ່ໄດ້ເປີດເຜີຍ ອອກຢ່າງຈະແຈ້ງແລ້ວ. ໃນວັນທີ ໒໑/໗/໗໒ ກະໂຕສຳນັກຖະແຫຼງຂ່າວຢູສິດ ຂອງອາເມລິກາ ຢູ່ວຽງຈັນ ກໍໄດ້ເວົ້າວ່າ "ກອດລີ, ທູດອາເມລິກາ ໄດ້ເປັນຜູ້ບັນຊາສົງຄາມຢູ່ລາວ, ກອດລີເອງເປັນຜູ້ຕັດສິນ ຈະໃຫ້ເຮືອບິນຍຸດທະສາດ ບີ-໕໒ ຖິ້ມລະເບີດຫຼືບໍ່ ? ແລະ ຖ້າເຫັນຄວນແລ້ວ ຈະຖິ້ມໃສ່ບ່ອນໃດ ?" ໃນໂທລະເລກ ຂອງກະຊວງປ້ອງກັນປະເທດ ອາເມລິກາ ທີ່ສົ່ງມາໃຫ້ ເອກອັກຄະລາຊະທູດ ອາເມລິກາປະຈຳລາວ ໃນວັນທີ ໒/໑໑/໑໙໖໔ ກໍໄດ້ບອກໃຫ້ທູດອາເມລິກາ ສັ່ງໃຫ້ອັນທີ່ເອີ້ນວ່າ "ລັດຖະບານລາວ" ເລີ່ມໃຊ້ເຮືອບິນ ທີ-໒໘ ຂອງລາວ ໄປຖິ້ມລະເບີດ ແລະ ເວົ້າວ່າ "ອາເມລິກາຈະໃຫ້ໜ່ວຍ "ຢັງກີທີມ" ຂອງອາເມລິກາ ທີ່ໄດ້ປະຕິບັດການຖິ້ມລະເບີດ ມາແຕ່ເດືອນ ໕/໖໔ ແລ້ວນັ້ນ ໄປຊ່ວຍຖິ້ມລະເບີດ ໃສ່ບ່ອນໃດ ທີ່ຫຍຸ້ງຍາກ". ຕາມຂ່າວທີ່ສົ່ງໄປຈາກວຽງຈັນ ໃນວັນທີ ໒/໕/໑໙໗໒ ນັ້ນ, ຂ່າວສານ ອາແອບເປ ຂອງຝຣັ່ງກໍໄດ້ເປີດເຜີຍວ່າ "ໃນທ້າຍອາທິດແລ້ວນີ້, ກອດລີ ທູດອາເມລິກາ ພ້ອມກັບເຈົ້າໜ້າທີ່ອາເມລິກາຫຼວງຄົນ ພວມຢູ່ປາກເຊ ເພື່ອວາງແຜນການ ບຸກໂຈມຕີຢຶດເອົາ ປາກຊ່ອງ, ເລົ່າງາມ, ສາລະວັນ ແລະອັດຕະປື". ໜັງສືພິມ ໄປສະນີໂລກ ຂອງອາເມລິກາ ສະບັບລົງວັນທີ ໒໗/໑໐/໗໑ ກໍໄດ້ເວົ້າວ່າ "ຊີໄອເອ" ໄດ້ຄວບຄຸມ ກອງທະຫານປົດລັບທັງໝົດ, ທັງເປັນທີ່ປຶກສາ ໃຫ້ແກ່ກອງບັນຊາການສູງສຸດ ຂອງລັດຖະບານ ລາວ (ໝາຍເຖິງ ອຳນາດການປົກຄອງວຽງຈັນ).

ບັນດາໂທດກຳຮຸກຮານ ຂອງຈັກກະພັດອາເມລິກາ ຢູ່ລາວເຮົາໃນເກືອບ ໒໐ ປີມານີ້, ບໍ່ພຽງແຕ່ໄດ້ຖືກກ່າວປະນາມ ແລະ ລົງໂທດຢູ່ລາວເທົ່ານັ້ນ, ແຕ່ຍັງໄດ້ຖືກກ່າວປະນາມ ແລະ ຕັດສິນລົງໂທດຢູ່ໃນໂລກ ຢ່າງເຄັ່ງຄັດທີ່ສຸດ, ເຊັ່ນ ໃນຄຳຕັດສິນ ຂອງສານແບກຕະລັງລຸດແຊນ ເຊິ່ງແມ່ນສານສາກົນ ຕັດສິນອາເມລິກາ ຜູ້ເປັນອາຊະຍາກອນ ສົງຄາມຮຸກຮານອິນດູຈີນ ທີ່ໂຮມປະຊຸມກັນຢູ່ເມືອງ ໂຮຊະກິນ (ປະເທດ ດານມາກ) ໃນທ້າຍເດືອນ ໑໑/໖໗ ນັ້ນ, ກໍມີຕອນໜຶ່ງວ່າ "ປະຊາຊົນລາວ ໄດ້ຕົກຢູ່ໃນສະພາບສົງຄາມ ກໍຍ້ອນວ່າ ອາເມລິກາຂະຫຍາຍສົງຄາມຮຸກຮານ ເຂົ້າຕີແຜ່ນລາວໂດຍກົງ", ເຮືອບິນຂອງອາເມລິກາ ໄດ້ຍິງທຳລາຍຢ່າງຊ້າງແຮງ ໃສ່ປະຊາຊົນລາວ, ສ້າງ

ຄວາມເສັຽຫາຍ ລົ້ນຕາຍຢ່າງຫຼວງຫຼາຍ ໃຫ້ເຂົາເຈົ້າ". ໃນຖະແຫຼງການ ຂອງຄະນະກຳມະການ ສາກົນ ສືບສວນໂທດກຳ ຂອງອາເມລິກາຢູ່ອິນດູຈີນ ທີ່ໂຮມປະຊຸມຢູ່ນະຄອນ ອົດສະໂລ (ເມືອງຫຼວງ ຂອງປະເທດ ນອກແວ) ເມື່ອທ້າຍເດືອນ ໖/໑໙໗໑ ທີ່ແລ້ວ, ກໍ່ໄດ້ຕອບເວົ້າວ່າ"... ຄະນະກຳມະການ ສືບສວນສາກົນ ສາມາດສະຫຼຸບໄດ້ຢ່າງຖືກຕ້ອງວ່າ ສົງຄາມຂອງອາເມລິກາ ຢູ່ອິນດູຈີນ ແມ່ນການທຳລາຍ ເຊື້ອຊາດ".

ພາຍໃຕ້ການຄອບຄອງ ຂອງອາເມລິກາ, ເຂດກວດກາຂອງ ຝ່າຍຂວາວຽງຈັນ ໄດ້ກາຍເປັນຫົວເມືອງຂື້ນແບບໃຫມ່ ຂອງອາເມລິກາຢ່າງສິ້ນເຊີງ. ເມື່ອເບິ່ງຜິວນອກ ຄ້າວ່າມີຄວາມຈະເລີນຮຸ່ງເຮືອງ, ແຕ່ເບື້ອງແທ້ ແມ່ນຄວາມສີວິໄລແບບປອມແປງ. ມີແຕ່ຄົນຈຳນວນຫນັ້ງຫນຶ່ງ ຜູ້ຍອມເປັນລູກມືໃຫ້ຈັກກະພັດອາເມລິກາ ເທົ່ານັ້ນ ທີ່ໄດ້ຮັບຄວາມສຸກ ແລະ ລ້ຳລວຍຈາກການຊ່ວຍເຫຼືອຂອງ ອາເມລິກາ; ສ່ວນຊີວິດການເປັນຢູ່ ຂອງຂ້າລາຊະການ, ທະຫານຕຳຫຼວດ ແລະ ປະຊາຊົນທົ່ວໄປ ຈຳນວນຫຼວງຫຼາຍນັ້ນ ພັດນັບມື້ນັບຕົກຕ່ຳ ຝືດເຄືອງ, ຫາເຊົ້າກິນຄ່ຳຢ່າງແສນທຸກທໍລະມານ; ພວກເຂົາເຈົ້າຖືກປາບປາມນາບຂູ່ ປັບໃຫມໃສ່ໂທດ, ບໍ່ມີສິດມີສຽງ, ອານາຄົດກໍ່ມືດມົນທີ່ສຸດ. ເສດຖະກິດໃນເຂດຄອບຄຸມຂອງຝ່າຍຂວາ ວຽງຈັນ ໄດ້ຂື້ນກັບອາເມລິກາ ແລະ ບໍລິວານຂອງເຂົາ ຄືປະເທດໄທຢ່າງສິ້ນເຊີງ. ວິທີດຳເນີນຊີວິດແບບເນົ່າເຫມັນ ແລະ ຊົ່ວຊ້າ ຂອງອາເມລິກາ ໄດ້ແຜ່ຂະຫຍາຍຢ່າງກວ້າງຂວາງ ແຕ່ຕົວເມືອງຮອດ ຊົນນະບົດ ເຮັດໃຫ້ຮີດຄອງປະເພນີ, ຄຸນຄ່າສິນທຳອັນດີງາມ ຂອງຊາດເຮົາຖືກເຊື່ອມໂຊມ.

ພຽງແຕ່ເອົາຫຼັກຖານບາງຢ່າງ ມາພິສູດເບິ່ງ ກໍ່ຍິ່ງເຫັນໄດ້ຢ່າງຈະແຈ້ງວ່າ ແມ່ນຈັກກະພັດອາເມລິກາ ເປັນຜູ້ຮຸກຮານລາວ. ພວກເຂົາໄດ້ທຳລາຍສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ແລະ ຢຽບຢ່ຳ ເອກະລາດ, ອະທິປະໄຕ, ຄວາມເປັນກາງ ແລະ ພື້ນແຜ່ນດິນ ອັນຄົບຖ້ວນຂອງລາວ ຢ່າງຮ້າຍແຮງທີ່ສຸດ. ແຕ່ປານນັ້ນ ໃນວາລະປະຊຸມຫຼາຍຄັ້ງ ທີ່ຜ່ານມາ, ຄະນະຜູ້ແທນ ຝ່າຍຂວາວຽງຈັນ ກໍ່ໄດ້ອອກແຮງປະຕິເສດ ແລະ ປົກປິດ ໃຫ້ແກ່ການຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວດັ່ງກ່າວ. ດັ່ງນັ້ນ, ຖ້າຢາກແກ້ໄຂບັນຫາລາວ, ກໍ່ມີແຕ່ ເສັ້ນທາງດຽວຄື: ອາເມລິກາຕ້ອງຢຸດເຊົາ ທຸກການແຊກແຊງຮຸກຮານ ຂອງເຂົາຢູ່ລາວ, ກ່ອນອື່ນ ຢຸດເຊົາການຖິ້ມລະເບີດ ໃນທົ່ວດິນແດນລາວ, ຕ້ອງເຄົາລົບ ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ, ເຄົາລົບ ເອກະລາດ, ອະທິປະໄຕ, ຄວາມເປັນກາງ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງລາວ. ອຳນາດການປົກຄອງວຽງຈັນ ກໍ່ຕ້ອງຮັບຮູ້ຄວາມຈິງ ກ່ຽວກັບການຮຸກຮານ ຂອງຈັກກະພັດອາເມລິກາ ຢູ່ລາວ ແລະ ຕ້ອງປະລະນະໂຍບາຍເດີນຕາມອາເມລິກາ. ບັນຫາພາຍໃນຂອງລາວ ຕ້ອງແມ່ນຝ່າຍລາວທີ່ກ່ຽວຂ້ອງ ແກ້ໄຂນຳກັນ ໂດຍອີງໃສ່ສະພາບການຕົວຈິງຢູ່ລາວ ໃນປະຈຸບັນ ແລະ ບໍ່ມີການແຊກແຊງຂອງອາເມລິກາ.

ກ່ຽວກັບອຳນາດການປົກຄອງວຽງຈັນ, ພວກຂ້າພະເຈົ້າກໍ່ໄດ້ໃຫ້ຄຳອະທິບາຍຢ່າງຈະແຈ້ງສົມຄວນແລ້ວວ່າ ອັນນັ້ນ ບໍ່ແມ່ນລັດຖະບານປະສົມຊົ່ວຄາວແຫ່ງຊາດ ໓ ຝ່າຍ ເພາະລັດຖະບານດັ່ງກ່າວ ໄດ້ຖືກພວກຂວາຈັດ ລູກມືອາເມລິກາ ໂຄ່ນລົ້ມໄປແລ້ວ ດ້ວຍການລັດຖະປະຫານວັນທີ ໑໙/໔/໖໔; ແລະ ຜ່ານການດັດແປງ ໕ ເທື່ອ ອຳນາດການປົກຄອງດັ່ງກ່າວ ກໍ່ໄດ້ປ່ຽນທາດເປັນເຄື່ອງມື ນັບມື້ນັບປະຕິການ ເພື່ອຮັບໃຊ້ສົງຄາມຮຸກຮານ ຂອງອາເມລິກາ, ໄດ້ສ້າງໂທດກຳອັນຫນັກຫນ່ວງຕໍ່ປະຊາຊົນລາວ

ແລະບໍ່ເປັນຕົວແທນ ໃຫ້ໃຜໄດ້ ນອກຈາກເປັນ ຕົວແທນໃຫ້ກຸ່ມ ນິຍົມອາເມລິກາເທົ່ານັ້ນ. ໃນຕົວຈິງ, ໃນ ໕ ປີກ່ອນ ຫຼັງຈາກ ຈັກກະພັດອາເມລິກາ ແລະລູກມື ໄດ້ໂຄ່ນລົ້ມລັດຖະບານປະສົມ ແຫ່ງຊາດ ໓ ຝ່າຍ ກໍ່ແມ່ນ ໕ ປີກ່ອນ ທີ່ຈັກກະພັດອາເມລິກາ ໄດ້ເພີ່ມ[redacted]ທະວີ ສົງຄາມຮຸກຮານລາວ ຢ່າງເປີດເຜີຍ ແລະ ຮ້າຍແຮງທີ່ສຸດ ແລະກໍ່ແມ່ນ ໕ ປີກ່ອນ ທີ່ອຳນາດການປົກຄອງວຽງຈັນ ໄດ້ກາຍເປັນເຄື່ອງມື ຮັບໃຊ້ສົງຄາມຮຸກຮານ ຂອງອາເມລິກາຢູ່ລາວ ຢ່າງເອົາການເອົາງານທີ່ສຸດ. ເມື່ອເບິ່ງທາງດ້ານຮູບ ການຈັດຕັ້ງ, ອົງປະກອບ ແລະ ນະໂຍບາຍການເມືອງຂອງມັນ ກໍ່ບໍ່ແມ່ນລັດຖະບານປະສົມແຫ່ງ ຊາດ ໓ ຝ່າຍຈັກດີ້. ເມື່ອເປັນແນວນັ້ນ, ເຮັດແນວໃດ ພວກທ່ານຍັງຈະອ້າງຕົນວ່າ ເປັນຕົວແທນ ໃຫ້ລັດຖະບານປະສົມແຫ່ງຊາດ ໓ ຝ່າຍໄດ້. ອີກອັນໜຶ່ງ ທີ່ຢັ້ງຢືນຢ່າງຈະແຈ້ງວ່າ ອຳນາດການປົກ ຄອງວຽງຈັນປະຈຸບັນ ບໍ່ແມ່ນລັດຖະບານປະສົມແຫ່ງຊາດ ໓ ຝ່າຍນັ້ນ, ກໍ່ຄື ໃນວາລະປະຊຸມເມື່ອວັນ ທີ່ ໒໕/໑໑/໗໒ ນີ້, ພວກທ່ານໄດ້ເວົ້າວ່າ ຖ້າບໍ່ຢາກເອີ້ນລັດຖະບານປະສົມແຫ່ງຊາດ ໓ ຝ່າຍ ກໍ່ ໃຫ້ເອີ້ນ ລັດຖະບານຊື່ໆ ກໍ່ໄດ້. ດັ່ງນັ້ນ, [redacted]ພວກທ່ານເອງກໍ່ຮັບຮູ້ຢູ່ວ່າ ມັນບໍ່ແມ່ນ ລັດຖະບານປະ ສົມແຫ່ງຊາດ ໓ ຝ່າຍ ມັນບໍ່ມີຄວາມເປັນຈິງ, ມັນດັ່ງແມ່ນເລື່ອງປັ້ນແຕ່ງຂຶ້ນ ແລະເອີ້ນກັນຊື່ໆ. ຖ້າ ແມ່ນເລື່ອງຈິງແລ້ວ ບໍ່ທ່ອນຈະປ່ຽນແປງໄດ້, ແລະ ບໍ່ທ່ອນຈະເອີ້ນແນວໃດກໍ່ໄດ້. ແຕ່ປານນັ້ນ, ພວກ ທ່ານ ກໍ່ຍັງກຸມເອີ້ນມັນວ່າ ແມ່ນລັດຖະບານປະສົມແຫ່ງຊາດ ໓ ຝ່າຍ, ແລະ ພວກທ່ານກໍ່ຍັງຊຸຊີ ພອງ ໃຫ້ກຳລັງຮັກຊາດ ເອົາຕົວເຂົ້າມາຮ່ວມ ໃນກົງຈັກປົກຄອງວຽງຈັນ ເຄື່ອງມືຮຸກຮານ ຂອງຈັກກະພັດ ອາເມລິກາດັ່ງກ່າວ. ອັນນັ້ນ, ເປັນໄປບໍ່ໄດ້ ຢ່າງເດັດຂາດ ຄືດັ່ງພວກຂ້າພະເຈົ້າ ໄດ້ເວົ້າມາ ຫຼາຍເທື່ອແລ້ວ. ນັ້ນແມ່ນ ພວກທ່ານມີເຈດຕະນາ ຢາກເຈລະຈາ ໃນທ່າແຮງ, ຢາກໜີບໃຫ້ ຝ່າຍ ບັນດາກຳລັງຮັກຊາດ ຕ້ອງຮັບເອົາເງື່ອນໄຂ ອັນບໍ່ເປັນທຳ ຂອງພວກທ່ານ. ພວກທ່ານຢາກສວຍ ໃຊ້ ການເຈລະຈາ ເພື່ອຍາດເອົາ ສິ່ງທີ່ພວກທ່ານ ບໍ່ສາມາດຍາດເອົາໄດ້ ໃນສະໜາມຮົບ. ແຕ່ ຄວາມໄຝ່ຝັນແບບລົມໆແລ້ງໆ ອັນປາສະຈາກມູນຖານ ດັ່ງກ່າວນັ້ນ ຈະບໍ່ບັງເກີດຜົນຫຍັງ ໃຫ້ແກ່ພວກ ທ່ານເລີຍ. ເມື່ອເບິ່ງທົ່ວໄປແລ້ວ ກໍ່ເຫັນໄດ້ຢ່າງຈະແຈ້ງວ່າ ຄະນະຜູ້ແທນ ຝ່າຍລາວວຽງຈັນ ໄດ້ ດັ້ງແກ້ງປະຕິເສດ ສະພາບການຕົວຈິງ ທຸກຢ່າງ, ອັນເປັນອຸປະສັກ ຢ່າງໃຫຍ່ໃຫ້ແກ່ການ ແກ້ໄຂ ບັນຫາ ບ້ານເມືອງຂອງເຮົາ, ໂດຍສະເພາະແມ່ນ ມັນໄດ້ເປັນສິ່ງກີດຂວາງ ບໍ່ໃຫ້ກອງປະຊຸມ ຂອງ ພວກເຮົາຄືບໜ້າໄປໄດ້.

ດ້ວຍເຫດນີ້, ຄະນະຜູ້ແທນບັນດາກຳລັງຮັກຊາດ ຈຶ່ງຂໍສະເໜີໃຫ້ຄະນະຜູ້ແທນ ຝ່າຍລາວ ວຽງຈັນ ຈົ່ງຈິງໃຈຍິນຍອມຮັບຮູ້ບັນດາຈຸດພິເສດ ແຫ່ງສະພາບການຕົວຈິງຂອງບ້ານເມືອງ ເຮົາໃນ ປະຈຸບັນ, ແລ້ວຕອບຢ່າງຈັກແຈ່ງ ກ່ຽວກັບບັນຫາຕ່າງໆ ໃນວິທີການ ໆ ເມືອງ ໕ ຂໍ້ຂອງບັນດາກຳ ລັງຮັກຊາດ ທີ່ພວກຂ້າພະເຈົ້າໄດ້ອະທິບາຍລະອຽດ ໃນວາລະປະຊຸມຄັ້ງວັນທີ ໑໗/໑໐/໗໒ ນັ້ນ.

ການທີ່ຄະນະຜູ້ແທນຝ່າຍລາວວຽງຈັນ ໄດ້ສະເໜີບັນຫາ ເປີກສາຫາລື ບັນດາຂໍ້ສະເໜີ ໃນວິທີການ ການເມືອງ ໕ ຂໍ້ ຂອງຄະນະຜູ້ແທນ ບັນດາກຳລັງຮັກຊາດ ໃນວາລະປະຊຸມ ເທື່ອທີ່ ແລ້ວນີ້, ຖ້າເລື່ອງນັ້ນຫາກເປັນຄວາມປະສົງ ຂອງພວກທ່ານແທ້ ກໍ່ເປັນການດີ, ແຕ່ພວກຂ້າພະເຈົ້າ ກໍ່ປະຫຼາດໃຈ ໃນການທີ່ຝ່າຍລາວວຽງຈັນ ຢາກພິຈາລະນາ ແຕ່ບັນຫາການທະຫານ ໂດຍແຍກອອກຈາກ ບັນຫາການເມືອງ; ທອງໃຫ້ພິຈາລະນາການຢຸດຍິງ, ຖອນກອງທະຫານຂອງຕ່າງປະເທດ, ແຕ່ຊ້ຳພັດ

ບໍ່ແຕ່ຕ້ອງ ເຖິງການພິຈາລະນາ ການສ້າງຕັ້ງ ສະພາ ປະສົມການເມືອງ ແລະ ລັດຖະບານ ປະສົມ ແຫ່ງຊາດຊຸດໃຫມ່ ເຊິ່ງ ຝ່າຍກຳລັງຮັກຊາດ ໄດ້ສະເຫນີ ແລະອະທິບາຍ ຢ່າງກະຈ່າງແຈ້ງ ຫລາຍເທື່ອ ແລ້ວ, ພ້ອມທັງໄດ້ຊີ້ແຈງ ເຫດຜົນອັນເຫມາະສົມ ແລະບັນດາພື້ນຖານ ອັນສົມເຫດສົມຜົນ ໃຫ້ແກ່ການ ສ້າງຕັ້ງອົງການ ທັງສອງດັ່ງກ່າວ. ອົງການທັງສອງນີ້ ເປັນອົງການຈັດຕັ້ງການເມືອງ ມັນພົວພັນ ແລະ ອຸ້ມຊູ້ຫນູນ ເຊິ່ງກັນແລະກັນ ເພື່ອຮັບປະກັນ ຮັກສາສັນຕິພາບ ແລະປະຕິບັດ ຄວາມຖືກຕ້ອງ ປອງດອງ ຊາດ ໃນເງື່ອນໄຂ ປະຫວັດສາດ ທີ່ບ້ານເມືອງ ແລະຊາດເຮົາ ຖືກສົງຄາມຮຸກຮານ ແລະຖືກແບ່ງແຍກ ຢ່າງຮ້າຍແຮງ ໃນປະຈຸບັນນີ້.

ນີ້ຄວາມຈຳເປັນ ທີ່ຈະຕ້ອງຊີ້ອອກວ່າ ວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ ເປັນລະບົບອັນດຽວ ທີ່ລວມມີ ສອງບັນຫາ ຄື ການທະຫານ ແລະການເມືອງ ທີ່ບໍ່ອາດຈະແຍກ ອອກຈາກ ກັນໄດ້, ບໍ່ອາດຈະ ພິຈາລະນາພຽງແຕ່ບັນຫານີ້, ແລ້ວບໍ່ພິຈາລະນາບັນຫາອື່ນ; ບໍ່ອາດຈະແກ້ໄຂ ພຽງ ແຕ່ບັນຫາຢຸດເຊົາການຮຸກຮານ ຂອງຈັກກະພັດອາເມລິກາ, ຢຸດເຊົາສົງຄາມ, ຟື້ນຟູອະທິປະໄຕ ຂອງ ຊາດເທົ່ານັ້ນ, ແຕ່ພັດບໍ່ແກ້ໄຂບັນຫາ ສ້າງຄວາມຖືກຕ້ອງປອງດອງ, ແລະເອກະພາບແຫ່ງຊາດ. ເປັນຕົ້ນ ແມ່ນບັນຫາຈັດຕັ້ງ ສະພາ ປະສົມການເມືອງ ແລະລັດຖະບານປະສົມແຫ່ງຊາດ ຊົ່ວຄາວຊຸດໃຫມ່ ເຊິ່ງເປັນ ອົງການຈັດຕັ້ງອັນຈຳເປັນ ເພື່ອປະຕິບັດບັນດາ ບັນຫາ ທີ່ໄດ້ຕົກລົງ ລະຫວ່າງຝ່າຍທີ່ກ່ຽວຂ້ອງ, ກ່າວເຖິງ ສ້າງຄວາມຖືກຕ້ອງປອງດອງ ແລະເອກະພາບແຫ່ງຊາດ ຢ່າງຫມັ້ນຄົງ ຖາວອນ.

ປະເທດເຮົານີ້ ສອງເຂດ, ສອງອຳນາດການປົກຄອງ, ສາມກຳລັງການເມືອງ ແລະກຳລັງປະ ກອບອາວຸດ, ເພາະສະນັ້ນ ແກ້ໄຂບັນຫາການເມືອງ ໃຫ້ຖືກກັບສະພາບການຕົວຈິງ, ແມ່ນຈຳເປັນທີ່ສຸດ ເພື່ອສ້າງພື້ນຖານ ອັນສະດວກ ໃຫ້ແກ່ການແກ້ໄຂການຮຸກຮານ ຂອງອາເມລິກາ, ໃນນັ້ນ ມີບັນຫາການ ທະຫານໄປພ້ອມ. ກ່ຽວກັບວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ ເຊິ່ງພວກຂ້າພະເຈົ້າ ໄດ້ຍົກຂຶ້ນ ແລະອະທິບາຍ ໃນວາລະປະຊຸມຕ່າງໆ ທີ່ຜ່ານມານັ້ນ, ຖ້າຝ່າຍວຽງຈັນ ຫາກຍັງບໍ່ທັນ ພິຈາ ລະນາ ຢ່າງລະອຽດ ຖີ່ຖ້ວນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ ຂໍກ່າວໂດຍຫຍໍ້ ກ່ຽວ ກັບບັນດາ ບັນຫາ ອັນພື້ນຖານ ຂອງ ວິທີການການເມືອງ ໕ ຂໍ້ ດັ່ງນີ້ :

ອາເມລິກາ ໄດ້ທຳລາຍ ສັນຍາເຈນີວ ກ່ຽວກັບລາວ, ໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດ ທັງສອງຊຸດ ແລະດຳເນີນການແຊກແຊງ ຮຸກຮານລາວ ດ້ວຍທຸກຮູບການ, ກໍ່ສົງຄາມທຳລາຍ ປະເທດເຮົາ ແລະຝ່າຍລາວວຽງຈັນ ໄດ້ເຮັດຕາມຄຳສັ່ງ ແລະການຫນີບອັດ ຂອງອາເມລິກາ ແລ້ວເຮັດໃຫ້ ອຳນາດ ການປົກຄອງວຽງຈັນ ກາຍເປັນເຄື່ອງມືຮັບໃຊ້ ທຸກກົນອຸບາຍ ແລະແຜນການຮຸກຮານ ຂອງອາເມລິກາ. ເພາະສະນັ້ນ, ເພື່ອແກ້ໄຂ ບັນຫາລາວ ຝ່າຍລາວວຽງຈັນ ຕ້ອງຕັ້ງຫນ້າ ຕອບສະຫນອງ ບັນຫາຕ່າງໆ ອັນຮີບດ່ວນ ດັ່ງລຸ່ມນີ້ :

໑/- ອາເມລິກາ ຕ້ອງຢຸດເຊົາ ສົງຄາມຮຸກຮານລາວ, ຢຸດເຊົາການຖິ້ມລະເບີດ, ຢຸດເຊົາ ທຸກການເຄື່ອນໄຫວ ທາງທະຫານ ແລະການກ່ຽວພັນທາງທະຫານ ຂອງອາເມລິກາຢູ່ລາວ; ຕ້ອງຖອນທີ່ ປຶກສາ, ພະນັກງານທະຫານ ຂອງອາເມລິກາ ແລະ ບັນດາປະເທດລໍລິວານຂອງ ອາເມລິກາ, ກອງ ທະຫານຫຼວງ ແລະ ທະຫານນອກລະບຽບ ຂອງໄທພ້ອມທັງອາວຸດ ອຸປະກອນສົງຄາມອື່ນໆ ຂອງ

ອາເມລິກາ ອອກຈາກລາວໃຫ້ໝົດ; ຕ້ອງລົບລ້າງທຸກການຈັດຕັ້ງ ການທະຫານ ແລະ ເຄິ່ງທະຫານ ຂອງອາເມລິກາ ແລະ ຂອງໄທຢູ່ລາວ, ຍຸບເລີກກອງກຳລັງພິເສດ ເຊິ່ງແມ່ນອາເມລິກາເປັນຜູ້ຈັດຕັ້ງ ລ້ຽງເກືອ ແລະ ບັນຊານັ້ນ ໃນທັນທີ; ຕ້ອງລົບລ້າງທຸກຖານທັບ, ທຸກພື້ນຖານການທະຫານ ຂອງອາເມລິກາ ແລະ ຂອງໄທຢູ່ດິນລາວ; ຕ້ອງຢຸດເຊົາ ການໃຊ້ຖານທັບ ແລະ ທຸກໆກຳລັງຂອງອາເມລິກາ ຢູ່ປະເທດໄທ ແລະ ກອງທະຫານໄທ ເພື່ອແຊກແຊງຮຸກຮານລາວ; ອາເມລິກາຕ້ອງຮັບຜິດຊອບຢ່າງສິ້ນເຊີງ ຄຽງກັບຄວາມເສັຍຫາຍ ແລະ ການນ້ຳເພທັງໝົດ ຍ້ອນສົງຄາມຮຸກຮານ ຂອງອາເມລິກາທີ່ໄດ້ກໍ່ຂຶ້ນຢູ່ລາວໃນຫຼາຍປີມານີ້.

ອັນນີ້ແມ່ນ ເນື້ອໃນຕົ້ນຕໍ ແລະ ຫຼັກໝັ້ນລາງລະອຽດ ຂອງພວກຂ້າພະເຈົ້າ ກ່ຽວກັບ ບັນຫາການທະຫານ ທີ່ໄດ້ສະເໜີຕໍ່ແຕ່ຕົ້ນມາແລ້ວ, ຝ່າຍພວກທ່ານ ມີຄວາມເຫັນແນວໃດ ?

໒/- ເພື່ອຮັກສາ ສັນຕິພາບ ແລະ ກ້າວເຖິງຂັ້ນ ປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ໃນເວລາລໍຖ້າໃຫ້ມີການຈັດຕັ້ງ ການເລືອກຕັ້ງ ທົ່ວໄປຢ່າງເສລີພາບ ປະຊາທິປະໄຕແທ້ຈິງ ເພື່ອເລືອກຕັ້ງສະພາ ແລະ ສ້າງຕັ້ງ ລັດຖະບານປະສົມແຫ່ງຊາດ ເປັນທາງການຂຶ້ນນັ້ນ, ສະເພາະໜ້ານີ້ ເພື່ອບໍລິຫານວຽກງານຂອງບ້ານເມືອງ ບັນດາຝ່າຍທີ່ກ່ຽວຂ້ອງ ຕ້ອງຕົກລົງກັນສ້າງຕັ້ງ ສະພາປະສົມການເມືອງ ແລະ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ຊຸດໃໝ່ຂຶ້ນ ໂດຍມີໂຄງຮ່າງການຈັດຕັ້ງ, ພາກສ່ວນປະກອບ ແລະ ໜ້າທີ່ດັ່ງ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ ໄດ້ວາງອອກ ໃນວາລະປະຊຸມຄັ້ງວັນທີ ໑໗--໑໐--໗໒ ນັ້ນ, ຝ່າຍພວກທ່ານ ມີຄວາມເຫັນແນວໃດ ?

ອັນນັ້ນ, ແມ່ນ ໒ ບັນຫາພື້ນຖານ ໃນ ໒ ດ້ານ ການທະຫານ ແລະ ການປົກຄອງການເມືອງ ຂອງບັນຫາລາວ, ພວກເຮົາ ຈຳເປັນຕ້ອງພ້ອມກັນຄົ້ນຄວ້າ ແລ້ວພ້ອມກັນແກ້ໄຂ. ມັນເປັນທຳມະດາຢູ່ແລ້ວ, ເພື່ອສ້າງເງື່ອນໄຂອັນສະດວກໃຫ້ແກ່ ບັນດາຝ່າຍ ປະຕິບັດສັນຍາຕ່າງໆ ທີ່ຈະໄດ້ຕົກລົງກັນ, ຝ່າຍບັນດາກຳລັງຮັກຊາດ ກໍໄດ້ວາງບັນດາຫຼັກການ ຂອງບັນຫາຢຸດເຊົາ ການຍິງເລວກັນ ອອກຢ່າງລະອຽດ ໃນຂໍ້ທີ ໕ ຂອງວິທີການການເມືອງ ໕ ຂໍ້ຂອງຕົນ. ບັນຫານີ້ ກໍຈະໄດ້ຮັບການແກ້ໄຂໄດ້ໄວ ໃນເມື່ອ ໒ ບັນຫາອັນຮີບດ່ວນດັ່ງກ່າວຂ້າງເທິງນີ້ ຫາກໄດ້ຮັບການຕອບສະໜອງຢ່າງຕັ້ງໜ້າ ຈາກຝ່າຍສາວຽງຈັນ. ພວກຂ້າພະເຈົ້າຂໍສະເໜີ ໃຫ້ຄະນະຜູ້ແທນຝ່າຍສາວຽງຈັນ ຈົ່ງຄົ້ນຄວ້າ ຢ່າງລະອຽດຖີ່ຖ້ວນອີກ ກ່ຽວກັບວິທີການການເມືອງ ໕ ຂໍ້ ຂອງພວກຂ້າພະເຈົ້າ, ແລ້ວຕອບດ້ວຍຄວາມຕັ້ງໜ້າ, ດ້ວຍທ່າທີເຈຕະນາດີ, ບໍ່ສົງຄິດລ້ຽວ, ບໍ່ຫຼົບຫຼີກ ຫຼື ຕັ້ງໃຈບິດເບືອນ ບັນດາຄວາມເປັນຈິງ ແຫ່ງປະຫວັດສາດ ຂອງລາວ, ບໍ່ດັ່ງໃຈປະຕິເສດ ສະພາບການຕົວຈິງຢູ່ລາວ ໃນປະຈຸບັນ ທີ່ພວກຂ້າພະເຈົ້າ ໄດ້ອະທິບາຍມາຫຼາຍເທື່ອແລ້ວ, ເພາະວ່າ ອັນນັ້ນ ແມ່ນພື້ນຖານ ພາວະວິໄສ ເພື່ອພິຈາລະນາ ແລະ ແກ້ໄຂບັນຫາຕ່າງໆ ຂອງບ້ານເມືອງ. ຕົ້ນຕໍແມ່ນແນໃສ່ ຟື້ນຟູສັນຕິພາບ, ສ້າງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ບົນພື້ນຖານການ ເຄົາລົບນັບຖື ບັນດາສິດພື້ນຖານແຫ່ງຊາດ ແລະ ການຮັບປະກັນສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ.

ບັນດາທ່ານ,

ສິ່ງທີ່ ພວກຂ້າພະເຈົ້າ ເວົ້າມານີ້, ແມ່ນເນື້ອໃນໃຈຄວາມ ຂອງວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ, ແມ່ນສະພາບການຕົວຈິງ ຂອງບ້ານເມືອງເຮົາ ແລະ ກໍ່ແມ່ນວິທີອັນເໝາະສົມທີ່ສຸດ ສຳລັບແກ້ໄຂ ສະພາບການ ຂອງລາວ ໃນປະຈຸບັນ. ອັນນີ້, ແມ່ນຫລັກໝັ້ນ ແລະ ນ້ຳໃສໃຈຈິງ ຂອງບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ. ຖ້າພວກທ່ານ ຫາກມີຄວາມຫວັງດີ ຢາກພ້ອມກັນກັບ ພວກຂ້າພະເຈົ້າ ແກ້ໄຂບັນຫາ ບ້ານເມືອງແທ້, ພວກທ່ານ ກໍ່ຄວນຮັບຮູ້ຄວາມຈິງ ດັ່ງກ່າວ ແລະ ຄວນປະລະ ຄວາມໃຝ່ຝັນ ທີ່ຢາກເຈລະຈາ ໃນທ່າແຮງ, ປະລະ ທ່າທີອັນບໍ່ສະເໝີພາບ, ເປັນຕົ້ນ ແມ່ນ ຕ້ອງປະລະການ ທີ່ພວກທ່ານ ຊຸຊີ ເອົາຊື່ ແລະຖານະ ຂອງລັດຖະບານປະສົມ ແຫ່ງຊາດ ມ ຝ່າຍ ມາເຈລະຈາ ກັບ ພວກຂ້າພະເຈົ້າ, ພ້ອມນັ້ນ ກໍ່ຮັບຮູ້ ຊື່ ແລະ ຖານະ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ຢ່າງຖືກຕ້ອງ, ແກ້ໄຂທຸກຢ່າງ ທີ່ພວກທ່ານກໍ່ຂຶ້ນ ໃນກອງປະຊຸມ ແຕ່ຝ່າຍດຽວ ຢ່າງບໍ່ຖືກຕ້ອງ ຕາມລະບຽບການ ເຊິ່ງ ພວກຂ້າພະເຈົ້າ ໄດ້ທັກທ້ວງ ມາຫລາຍເທື່ອແລ້ວ. ທັງນີ້ ກໍ່ເພື່ອເປັນການ ຊຸກຍູ້ ໃຫ້ກອງປະຊຸມ ຂອງພວກເຮົາ ເຂົ້າໄປຫາເນື້ອໃນ ອັນແທ້ຈິງ ຂອງມັນ, ແລະ ສ້າງບັນຍາກາດ ອັນສົດໃສ ໃຫ້ແກ່ກອງປະຊຸມ ຂອງພວກເຮົາ ເຮັດໃຫ້ມັນ ຄືບໜ້າໄປ ໂດຍສະດວກດີ, ຈົນກ້າວເຖິງ ຂັ້ນຕົກລົງກັນໄດ້ ເພື່ອຟື້ນຟູ ສັນຕິພາບ ແລະ ສ້າງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ຄືນໃໝ່, ຕອບສະໜອງ ຄວາມມຸ່ງມາດ ປາຖະໜາ ອັນແຮງກ້າ ແລະ ຄວາມຄອງຄອຍ ຂອງປະຊາຊົນເຮົາ ທົ່ວຊາດ ./.

---

9ème séance

12.12.72

# ບົດປະກອບຄຳເຫັນ

12 DEC 1972

ຂອງ ທ່ານ ພັນ ນິປະເສີດ, ຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່ຽວກັບ ສ້າງ ຂໍ້ຕົກລົງ ລະຫວ່າງສອງຝ່າຍ, ກ່າວໃນວາລະປະຊຸມ ເທື່ອທີ ໙,
(ໃນວັນທີ ໑໒/໑໒/໑໙໗໒)

Dec. 12, 72

ບັນດາທ່ານ,

ໃນບັນດາ ວາລະປະຊຸມກ່ອນນັ້ນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ ໄດ້ສະເໜີ ສະພາບການລະອຽດ ຕົວຈິງ ທຸກດ້ານ ຂອງປະເທດຊາດ ແລະວິທີການ ແກ້ໄຂທັງໝົດ ກ່ຽວກັບ ບັນຫາລາວ. ພ້ອມກັບນັ້ນ, ພວກຂ້າພະເຈົ້າ ກໍໄດ້ສັງເກດ ພິຈາລະນາ ບັນດາຄຳເຫັນ ແລະຂໍ້ສະເໜີ ຂອງຝ່າຍວຽງຈັນ ດ້ວຍທ່າທີ ອັນເຄັ່ງຄັດ. ເທື່ອນີ້, ພວກຂ້າພະເຈົ້າ ຢືນຢັນຄືນ ບັນດາເຫດການ ຕົວຈິງ ທີ່ມີໃນປະຈຸບັນ, ບັນດາຈຸດ ທີ່ສອງຝ່າຍ ໄດ້ເປັນເອກະສັນກັນ ເອົາມາເປັນພື້ນຖານ ໃຫ້ແກ່ການຕົກລົງກັນ ເພື່ອ ຢຸດເຊົາສົງຄາມ, ສ້າງສັນຕິພາບ ໃນ ພະລາຊະອານາຈັກລາວເຮົາ ຄືນໃໝ່ ໃຫ້ໄດ້.

ຕະຫລອດ ໄລຍະກວ່າ ๑/๔ ຂອງສະຕະວັດນີ້, ປະຊາຊົນລາວເຮົາ ໄດ້ດຳເນີນການຕໍ່ສູ້ ຕ້ານການຮຸກຮານ ອັນຍາວນານ ແລະລຳບາກ, ແຕ່ ກໍພິລະອາດຫານທີ່ສຸດ ເຊິ່ງແນໃສ່ ຍາດເອົາ [redacted] ເອກະລາດ, ອິດສະຫລະພາບ ມາໃຫ້ປະເທດຊາດ.

ໃນການຕໍ່ຕ້ານ ເທື່ອທີໜຶ່ງ, ຊາດເຮົາ ໄດ້ພ້ອມກັບ ບັນດາປະຊາຊາດ ຫວຽດນາມ ແລະ ຂະແມອ້າຍນ້ອງ ຍາດເອົາໄຊຊະນະ ຢ່າງມີລັກສະນະ ປະຫວັດສາດ ໃນການເຊັນສັນຍາເຈນີວ ປີ ໑໙໕໔ ກ່ຽວກັບອິນດູຈີນ, ຮັບຮູ້ ເອກະລາດ, ອະທິປະໄຕ, ເອກະພາບ, ພື້ນແຜ່ນດິນ ອັນຄົບຖ້ວນ ຂອງລາວ ກໍຄື ຂອງຫວຽດນາມ ແລະກຳພູຊາ. ບົນພື້ນຖານ ບັນດາໄຊຊະນະດັ່ງກ່າວ, ດ້ວຍບຸນເຊື້ອ ສາມັກຄີ ປ້ອງກັນຊາດ ຂອງປະຊາຊົນລາວເຮົາ ແລະເຈດຕະນາດີ ຂອງແນວລາວຮັກຊາດ, ບັນດາ ຝ່າຍ ທີ່ກ່ຽວຂ້ອງ ໄດ້ເຊັນ ບັນດາສັນຍາ ວຽງຈັນປີ ໑໙໕໗ ແລະຈັດຕັ້ງ ລັດຖະບານປະສົມແຫ່ງຊາດ ເທື່ອທີໜຶ່ງ ເພື່ອປະຕິບັດ ຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ, ກໍ່ສ້າງປະເທດຊາດ ໃຫ້ມີ ສັນຕິພາບ, ເອກະ ລາດ, ຄວາມເປັນກາງ, ປະຊາທິປະໄຕ ແລະເອກະພາບ. ແຕ່ ບໍ່ເຖິງເທົ່າໃດ ຈັກກະພັດອາເມລິກາ ໄດ້ຍຸແຍ່ງພວກລຸກມື ໃຫ້ໂຄ່ນລົ້ມ ລັດຖະບານປະສົມ, ທຳລາຍຄວາມຖືກຕ້ອງປອງດອງຊາດ ແລະກໍ່ສົງຄາມຄືນໃໝ່, ແນໃສ່ເຮັດໃຫ້ ປະເທດເຮົາ ກາຍເປັນຫົວເມືອງຂຶ້ນແບບໃໝ່ ແລະຖານທັບຂອງພວກເຂົາ. ປະຊາຊົນເຮົາ ຈຳຕ້ອງໄດ້ລຸກຂຶ້ນກຳອາວຸດ ສືບຕໍ່ການຕໍ່ຕ້ານອາເມລິກາ ເພື່ອກູ້ຊາດ.

ເນື່ອງຈາກ ຖືກປະລາໄຊ ຢ່າງໜັກໜ່ວງ ທາງດ້ານການທະຫານ ແລະດ້ານການເມືອງ, ຕໍ່ໜ້າໄພອັນຕະລາຍແຫ່ງການ ລົ້ມລະລາຍ ຂອງພວກລຸກມື ຄື ກຸ່ມກະບົດຊາດ ພູມີ ໜໍສະຫວັນ, ຈັກກະພັດອາເມລິກາ ຈຳຕ້ອງໄດ້ ເຊັນສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ, ຮັບຮູ້ ແລະໃຫ້ຄຳໝັ້ນສັນຍາ ອີກ ເທື່ອໜຶ່ງວ່າ ຈະເຄົາລົບ ອະທິປະໄຕ, ເອກະລາດ, ເອກະພາບ ແລະພື້ນແຜ່ນດິນ ອັນຄົບຖ້ວນ ຂອງປະເທດເຮົາ, ປະກາດຖະແຫລງວ່າ ຈະບໍ່ແຊກແຊງໂດຍກົງ ຫລື ໂດຍທາງອ້ອມ ເຂົ້າກິດການ ພາຍໃນ ຂອງລາວ, ແລະໃຫ້ຄຳໝັ້ນສັນຍາວ່າ ຈະບໍ່ເຮັດສິ່ງໃດ ທີ່ມີເປັນເສຍຫາຍເຖິງ ສັນຕິພາບ ແລະ ຄວາມເປັນກາງ ຂອງປະເທດເຮົາ.

ກ່ຽວກັບ ດ້ານພາຍໃນ, ບົນພື້ນຖານ ບັນດາສັນຍາ ຊູລິກ ແລະທົ່ງໄຫຫີນ, ລັດຖະບານປະສົມແຫ່ງຊາດສາມຝ່າຍຊົ່ວຄາວ ໄດ້ຈັດຕັ້ງຂຶ້ນ, ມີໂຄງການ ດຳເນີນງານ ແລະຫລັກການເຮັດວຽກ ເປັນເອກະສັນສາມຝ່າຍ, ນັ້ນສະແດງໃຫ້ເຫັນ ອີກເທື່ອໜຶ່ງ ຄວາມປອງດອງຊາດ ໂດຍມີພື້ນຖານ ອັນໜັກແໜ້ນໜາ, ແນໃສ່ ກໍ່ສ້າງປະເທດຊາດໃຫ້ມີ ສັນຕິພາບ, ເອກະລາດ ແລະອິດສະຫລະພາບ.

ນັ້ນແມ່ນໄຊຊະນະທີ່ມີຄວາມໝາຍປະຫວັດສາດຂອງຊາດເຮົາກໍຄືຂອງປະຊາຊົນ ທີ່ຮັກຫອມສັນຕິພາບ ແລະຄວາມເປັນທຳຢູ່ໃນໂລກ, ມັນເປັນຂີດໝາຍແຫ່ງການປະລາໄຊອັນໜັກໜ່ວງ ບາດກ້າວໜຶ່ງຂອງນະໂຍບາຍແຊກແຊງ ແລະຮຸກຮານຂອງອາເມລິກາຕໍ່ປະເທດຊາດລາວເຮົາ.

ແຕ່, ໂດຍຖືວ່າ ລັດຖະບານປະສົມແຫ່ງຊາດ ໓ ຝ່າຍຢູ່ລາວເປັນອຸປະສັກຕໍ່ນະໂຍບາຍລ່າເມືອງຂຶ້ນແບບໃໝ່ຂອງເຂົາ, ດັ່ງນັ້ນ ຈັກກະພັດອາເມລິກາຈຶ່ງລົບລ້າງລາຍເຊັນຂອງຕົນ, ໂຄ່ນລົ້ມລັດຖະບານປະສົມ, ກໍ່ສົງຄາມ ແລະເພີ່ມທະວີສົງຄາມຮຸກຮານ ຫວັງເຮັດໃຫ້ປະເທດເຮົາກາຍເປັນສະໜາມຮົບ ສົມທົບກັບສະໜາມຮົບຫວຽດນາມ ແລະ ກຳພູຊາໃນສົງຄາມຮຸກຮານຂອງເຂົາໃນທົ່ວອິນດູຈີນ. ຍ້ອນແນວນັ້ນ, ປະຊາຊົນລາວເຮົາຈຳຕ້ອງກຳອາວຸດລຸກຂຶ້ນຕ້ານ ຈັກກະພັດອາເມລິກາ ເພື່ອກູ້ຊາດຢ່າງເດັດດ່ຽວ.

ນັບແຕ່ສັນຍາເຈນີວປີ ໑໙໖໒ ມາເຖິງປະຈຸບັນນີ້, ການຕໍ່ຕ້ານອັນພິລະອາດຫານ ຂອງປະຊາຊົນເຮົາ ຕ້ານອາເມລິກາຜູ້ຮຸກຮານ ແລະລູກມືຜູ້ຂາຍຊາດ ຍາດໄດ້ບັນດາໄຊຊະນະນັບມື້ນັບໃຫຍ່ຫລວງ. ເວົ້າລວມແລ້ວ, ປະເທດຊາດຂອງພວກເຮົາໃນປະຈຸບັນມີບາງຈຸດພິເສດຕົ້ນຕໍດັ່ງນີ້:

<u>ໜຶ່ງ</u> - ອາເມລິກາ ແລະບັນດາປະເທດທີ່ຂຶ້ນກັບຝ່າຍອາເມລິກາ, ພິເສດແມ່ນໄທ ແລະ ຫຸ່ນໄຊງ່ອນ, ໄດ້ທຳລາຍສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວຢ່າງເປັນລະບົບ, ເພີ່ມທະວີການແຊກແຊງຮຸກຮານລາວຢ່າງຮອບດ້ານ, "ສົງຄາມພິເສດເພີ່ມທະວີ" ຂອງອາເມລິກາໄດ້ຂະຫຍາຍໄປເຖິງຍອດສູງສຸດ. ໂດຍໃຊ້ກອງທະຫານຝ່າຍວຽງຈັນ ໖ ໝື່ນຄົນ, ໃນນັ້ນມີກຳລັງພິເສດ ໒ ໝື່ນຄົນ ເຊິ່ງແມ່ນອາເມລິກາຈັດຕັ້ງ, ລ້ຽງເກືອ, ປະກອບອາວຸດ ແລະບັງຄັບບັນຊາໂດຍກົງ, ທະຫານໄທ ໓໐ ກອງພັນ ແລະ ບາງຄັ້ງກໍມີກອງທະຫານຫຸ່ນໄຊງ່ອນຕັ້ງຫລາຍໝື່ນຄົນ, ມີກຳລັງກອງທັບອາກາດອັນໃຫຍ່ຫລວງ ຂອງອາເມລິກາ ນັບທັງຍົນຍຸດທະສາດທີ່ຕັ້ງຢູ່ກວາມ ແລະໄທສົມທົບນັ້ນ, ອາເມລິກາ ແລະລູກມືໄດ້ເປີດການເຄື່ອນທັບບຸກເຂົ້າທຳລາຍຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ ຕໍ່ເຂດທີ່ບັນດາກຳລັງຮັກຊາດກວດກາ, ໄດ້ກໍ່ຄວາມລົ້ມຕາຍເສຍຫາຍໃຫ້ແກ່ປະຊາຊົນເຮົາບໍ່ຈັກວ່າເທົ່າໃດ, ໃນເຂດທີ່ຝ່າຍວຽງຈັນກວດການັ້ນ ພວກເຂົາກໍດຳເນີນການເຄື່ອນທັບກວາດລ້າງຢ່າງລຽນຕິດ ເພື່ອປາບໃຫ້ສະຫງົບ ແລະ ເຮັດໃຫ້ເຂດນີ້ກາຍເປັນຫົວເມືອງຂຶ້ນແບບໃໝ່ຂອງອາເມລິກາ.

ມັນເປັນອັນຈະແຈ້ງວ່າ ກະໂດຈັກກະພັດອາເມລິກາເອງ ເປັນຜູ້ຢຽບຢ່ຳທຳລາຍອະທິປະໄຕ, ເອກະລາດ, ເອກະພາບ ແລະຜືນແຜ່ນດິນອັນຄົບຖ້ວນຂອງພະລາຊະອານາຈັກລາວຢ່າງບັງອາດ ເປີດເປນ. ການແຊກແຊງຮຸກຮານຂອງ ຈັກກະພັດອາເມລິກາແມ່ນຕົ້ນເຫດແຫ່ງຄວາມທຸກທໍລະມານທຸກຢ່າງຂອງປະຊາຊົນເຮົາ ແລະ ແມ່ນຕົ້ນເຫດແຫ່ງສະພາບການ ທີ່ເປັນອັນຕະລາຍຮ້າຍແຮງທີ່ສຸດຢູ່ປະເທດເຮົາໃນປະຈຸບັນ.

<u>ສອງ</u> - ລັດຖະບານປະສົມແຫ່ງຊາດສາມຝ່າຍທີ່ໄດ້ຈັດຕັ້ງຂຶ້ນ ບົນພື້ນຖານຂອງບັນດາສັນຍາ ຊູລິກ ແລະ ທົ່ງໄຫຫີນນັ້ນ ໄດ້ຖືກອາເມລິກາ ແລະ ພວກລູກມືໂຄ່ນລົ້ມ ແລະ ທຳລາຍຢ່າງສິ້ນເຊີງ

ບັນທັງດ້ານຮ່າງປະກອບ, ແນວທາງນະໂຍບາຍ ແລະຫຼັກການເຮັດວຽກ. ບັນດາສັນຍາດັ່ງກ່າວຂ້າງບົນ ໄດ້ຖືກຢຽບຢ່ຳຢ່າງສິ້ນເຊີງ. ບໍ່ພຽງແຕ່ລັດຖະບານປະສົມ ເຊິ່ງປະກອບດ້ວຍຜູ້ແທນຂອງ ໓ ຝ່າຍ ການເມືອງໄດ້ຖືກໂຄ່ນລົ້ມເທົ່ານັ້ນ, ຮູບການສາມຝ່າຍຢູ່ໃນວິທີການເມືອງ ຢູ່ປະເທດເຮົາໃນສະໄໝນັ້ນກໍ່ບໍ່ຍັງອີກ. ສະເດັດເຈົ້າສຸວັນນະພູມາເອງ ໄດ້ແຍກຕົວອອກຈາກກຳລັງເປັນກາງອັນແທ້ຈິງ ແລ້ວເອົາກຳລັງທີ່ຕົນເອົາໄປນຳນັ້ນເຂົ້າຮ່ວມກັບຝ່າຍຂວາວຽງຈັນ ແລະຕັ້ງຊື່ໃຫ້ຕົນເອງວ່າ ເປັນຜູ້ນຳລວມທັງສອງຝ່າຍນີ້. ຫຼັງຈາກດັດແປງເຖິງ ໕ ຄັ້ງ, ດ້ວຍການສັບຊ້ອນຂອງອາເມລິກາ ອຳນາດການປົກຄອງວຽງຈັນໃນປະຈຸບັນນີ້, ຄວາມຈິງມັນໄດ້ກາຍເປັນອຳນາດການປົກຄອງ ທີ່ນິຍົມອາເມລິກາ, ຮັບໃຊ້ນະໂຍບາຍຮຸກຮານຂອງອາເມລິກາ, ປົກປິດໂທດກຳຂອງອາເມລິກາທີ່ມີຕໍ່ປະຊາຊົນເຮົາ. ອຳນາດການປົກຄອງນັ້ນພຽງແຕ່ກວດກາໄດ້ ໑/໕ ຂອງດິນແດນລາວ ແລະ ຂຶ້ນກັບອາເມລິກາຢ່າງສິ້ນເຊີງໃນທຸກດ້ານ. ອຳນາດການປົກຄອງນັ້ນ ແມ່ນຜິດກົດໝາຍ ຈຶ່ງບໍ່ມີສິດເປັນຕົວແທນໃຫ້ປວງປະຊາຊົນລາວໄດ້. ມັນພຽງແຕ່ເປັນເຄື່ອງມືຮຸກຮານຂອງອາເມລິກາ ແລະ ເປັນຕົວແທນໃຫ້ບັນດາກຸ່ມກຳອຳນາດຢູ່ວຽງຈັນນີ້ເທົ່ານັ້ນ.

<u>ສາມ</u> – ບັນດາກຳລັງຮັກຊາດທີ່ໄດ້ເຝິກຝົນຫຼໍ່ຫຼອມໃນການຕໍ່ຕ້ານອາເມລິກາ ເພື່ອກູ້ຊາດຢ່າງດຸເດືອດ ແລະ ພິລະອາດຫານທີ່ສຸດນັ້ນ ໄດ້ເຕີບໃຫຍ່ຂະຫຍາຍຕົວທຸກດ້ານກ່ອນປີ ໑໙໖໔, ໄດ້ຍາດເອົາບັນດາໄຊຊະນະອັນໃຫຍ່ຫຼວງ, ຮອບດ້ານ ແລະໜັກແໜ້ນທີ່ສຸດ, ປະຈຸບັນນີ້ ພວມກວດກາ ໔/໕ ຂອງດິນແດນທົ່ວປະເທດ ແລະພວມຢູ່ໃນທ່າມີໄຊ, ທາງເປັນເຈົ້າການໃນທຸກສະໜາມຮົບທົ່ວປະເທດ. ຈຸດທີ່ຄວນເອົາໃຈໃສ່ແມ່ນ ໃນເວລາກຳລັງຂອງສະເດັດເຈົ້າສຸວັນນະພູມາ ຖືກຝ່າຍຂວາກືນກິນນັ້ນ, ກຳລັງເປັນກາງຮັກຊາດໄດ້ຮ່ວມສຳພັນຢ່າງແໜ້ນໜາກັບແນວລາວຮັກຊາດ, ໄດ້ຜ່ານພົ້ນທຸກການທົດສອບ, ຢືນໝັ້ນໃນຫຼັກໝັ້ນຮັກຊາດ ແລະ ໄດ້ເຕີບໃຫຍ່ເຂັ້ມແຂງຢ່າງໄວວາ, ໄດ້ກາຍເປັນກຳລັງການເມືອງທີ່ປະກອບສ່ວນຢ່າງເໝາະສົມເຂົ້າໃນໄຊຊະນະລວມຂອງຊາດ. ກຳລັງນັ້ນ ຕ້ອງມີປາກສຽງ ແລະ ມີຖານະອັນເໝາະສົມໃນທຸກວິທີການແກ້ໄຂບັນຫາລາວ.

ສີ່ – ຍ້ອນບັນດາກຳລັງຮັກຊາດໄດ້ຮັບໄຊຊະນະ ແລະຈັກກະພັດອາເມລິກາໄດ້ຖືກປະລາໄຊຢ່າງລຽນຕິດ ແລະ ນັບມື້ນັບໜັກໜ່ວງ, ສະນັ້ນ, ໃນຕົວຈິງ ຢູ່ພາຍໃນປະເທດເຮົາຈຶ່ງເກີດມີ ແລະຄ້ຳລົງຄົງຕົວເປັນ ໒ ເຂດ, ໒ ອຳນາດການປົກຄອງ, ໓ ກຳລັງການເມືອງ ແລະ ໒ ຝ່າຍປະກອບອາວຸດທີ່ເປັນປໍລະປັກກັນ ເຊິ່ງແກ່ຍາວເປັນເວລາຕັ້ງ ໑໐ ປີມານີ້. ອັນນັ້ນ, ແມ່ນຜົນຂອງນະໂຍບາຍແຊກແຊງ ແລະ ຮຸກຮານຂອງລັດທິຈັກກະພັດນິຍົມອາເມລິກາ ທີ່ມີຕໍ່ປະເທດຊາດເຮົາ, ແລະນັ້ນກໍ່ແມ່ນຜົນອັນໃຫຍ່ຫຼວງ ຂອງການຕໍ່ສູ້ອັນເປັນທຳ ຂອງປະຊາຊົນ ບັນດາຊົນຊາດເຮົາ ຕ້ານຈັກກະພັດອາເມລິກາ ແລະພວກລູກມືຂາຍຊາດ. ປະຈຸບັນນີ້, ຝ່າຍໜຶ່ງແມ່ນ ແນວລາວຮັກຊາດ ແລະບັນດາກຳລັງເປັນກາງຮັກຊາດກວດກາ ໔/໕ ຂອງດິນແດນທົ່ວປະເທດ ແລະອີກຝ່າຍໜຶ່ງແມ່ນ ຝ່າຍວຽງຈັນ ທີ່ກວດກາພຽງແຕ່ ໑/໕ ຂອງດິນແດນເທົ່ານັ້ນ. ເຖິງວ່າ ຖືກທຳລາຍຈາກສັດຕູ, ເຂດກວດກາ ຂອງບັນດາກຳລັງຮັກຊາດ ກໍໄດ້ຮັບການກໍ່ສ້າງ ແລະປັບປຸງ ໃນທຸກດ້ານ ຢ່າງບໍ່ຢຸດຢັ້ງ. ຢູ່ໃນເຂດນີ້ ປະຊາຊົນ ບັນດາຊົນຊາດ ລ້ວນແຕ່ມີຊີວິດຢູ່ ດ້ວຍຄວາມສາມັກຄີ, ສະເໝີພາບ, ຮ່ວມແຮງກັນ ຊຸກຍູ້ການຕໍ່ສູ້ ແລະການຜະລິດຜົນ. ຊີວິດການເປັນຢູ່ ທາງດ້ານວັດຖຸ ແລະຈິດໃຈ ຂອງປະຊາຊົນ ບັນດາຊົນຊາດ ໄດ້ຮັບການແກ້ໄຂ ໃຫ້ດີຂຶ້ນເລື້ອຍມາ. ການກໍ່ສ້າງເສດຖະກິດ ແລະຂະຫຍາຍວັດທະນະທຳ ກໍໄດ້ເປີດກວ້າງ ເປັນຢ່າງດີ. ເຂດກວດກາຂອງບັນດາກຳລັງຮັກຊາດລາວ ໄດ້ກາຍເປັນ ຮູບພາບ ອັນສວຍສົດງົດງາມ ຂອງປະເທດລາວ ເອກະລາດ,

ປະຊາທິປະໄຕ, ເປັນກາງ, ເອກະພາບ ແລະວັດທະນາຖາວອນ ອັນແທ້ຈິງ ໃນຕໍ່ໄປ.

ສະພາບການດັ່ງກ່າວ ຂ້າງບົນ ແມ່ນ ບ່ອນອີງຕົ້ນຕໍ ຂອງວິທີການແກ້ໄຂ ກ່ຽວກັບບັນຫາລາວ. ຄວາມເປັນຈິງ ປະຫວັດສາດດັ່ງກ່າວ ບໍ່ມີຜູ້ໃດຈະສາມາດ ໃສ່ຮ້າຍປ້າຍສີ ພິກປີ້ນໄດ້, ມີແຕ່ຄົນໂງ່ຈ້າ ຈຶ່ງຮ້າວ ເອົາໃບບົວ ປົກຊ້າງ ແລະ ເອົາຝ່າມື ໄປບັງຕາເວັນ.

ຕໍ່ໜ້າຄວາມເປັນຈິງ ປະຫວັດສາດອັນແຈ່ງກ້າດັ່ງກ່າວ, ຄະນະຜູ້ແທນຝ່າຍວຽງຈັນ ຊົ່ວພັດ ຊອກວິທີພິກປີ້ນ. ເຖິງຢ່າງນັ້ນກໍ່ຕາມ, ດ້ວຍເຈດຕະນາດີ ເພື່ອ ສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ແລະດ້ວຍທ່າທີ ອົດທົນ ປົ່ງບ້າງເອົາຄຳ, ເພື່ອຊອກວິທີການແກ້ໄຂບັນຫາລາວ, ຕອບສະໜອງ ຄວາມຄອງຄອຍ ຂອງປະຊາຊົນທັງປວງ, ຫລັງຈາກ ຟັງບັນດາຄວາມເຫັນ ຂອງຄະນະຜູ້ແທນ ຝ່າຍວຽງຈັນ ໃນບັນດາ ວາລະປະຊຸມ ທີ່ຜ່ານມາ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ ໄດ້ຊອກເຫັນ ບາງຈຸດ ທີ່ເປັນເອກະພາບ ລະຫວ່າງສອງຝ່າຍ ດັ່ງຕໍ່ໄປນີ້ :

<u>ໜຶ່ງ</u>: ທັງສອງຝ່າຍ ລ້ວນແຕ່ໄດ້ຢືນຢັນຕື່ມອີກ ເທື່ອໜຶ່ງວ່າ <u>ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ທີ່ໄດ້ຮັບຮູ້ ເອກະລາດ, ອະທິປະໄຕ, ຄວາມເປັນກາງ, ເອກະພາບ ແລະຜືນແຜ່ນດິນອັນຄົບຖ້ວນ ຂອງລາວ ແມ່ນພື້ນຖານອັນຖືກຕ້ອງທີ່ສຸດ ເພື່ອແກ້ໄຂບັນຫາລາວ, ສອດຄ່ອງກັບສິດປະໂຫຍດອັນພື້ນຖານ ແລະຄວາມມຸ່ງມາດປາຖະໜາ ອັນເລິກເຊິ່ງ ຂອງຊາດ ແລະຂອງປະຊາຊົນ ບັນດາເຜົ່າລາວ, ສອດຄ່ອງ ກັບສິດປະໂຫຍດຂອງລາວ ແລະຄວາມສະຫງົບ ຂອງບັນດາປະເທດໃນອິນດູຈີນ, ໃນອາຊີ ອາຄະເນ ແລະ ໃນໂລກ.</u>

ສອງຝ່າຍ ໄດ້ຢືນຢັນອີກເທື່ອໜຶ່ງ ຄຸນຄ່າການເມືອງ ແລະກົດໝາຍ ຂອງສັນຍາເຈນີວ ດັ່ງກ່າວຂ້າງບົນ. ຍ້ອນແນວນັ້ນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ ສະເໜີໃຫ້ ຄະນະຜູ້ແທນ ຝ່າຍວຽງຈັນ ຈົ່ງພ້ອມກັບ ພວກຂ້າພະເຈົ້າ ຮຽກຮ້ອງ ບັນດາປະເທດທີ່ເຂົ້າຮ່ວມ ກອງປະຊຸມເຈນີວປີ ໑໙໕໔–໑໙໖໒ ກ່ຽວກັບລາວ ກໍຄື ບັນດາປະເທດອື່ນໆ ຢູ່ໃນໂລກ ຈົ່ງເຄົາລົບນັບຖື ແລະປະຕິບັດຕາມທຸກມາດຕາ ຂອງສັນຍາດັ່ງກ່າວ ຢ່າງເຖິງຖອງ, ເດັດຂາດບໍ່ໃຫ້ມີ ການເຄື່ອນໄຫວໃດໆ ທີ່ກົງກັນຂ້າມກັບ ບັນດາຫລັກການ ທີ່ໄດ້ບົ່ງໄວ້ ໃນສັນຍານັ້ນ ແລະເຄົາລົບນັບຖື ສິດຕັດສິນດ້ວຍຕົນເອງ ຂອງປະຊາຊົນ ລາວຢ່າງເຖິງຖອງ, ເດັດຂາດບໍ່ແຊກແຊງໂດຍກົງ ຫລື ໂດຍທາງອ້ອມເຂົ້າ ກິດການພາຍໃນຂອງລາວ.

<u>ສອງ</u>: ທັງສອງຝ່າຍ ລ້ວນແຕ່ໄດ້ຢືນຢັນວ່າ <u>ບັນດາລະບຽບການກ່ຽວກັບສິດເສລີພາບ ປະຊາທິປະໄຕຂອງປະຊາຊົນ, ກ່ຽວກັບການເລືອກຕັ້ງທົ່ວໄປຢ່າງເສລີ ປະຊາທິປະໄຕ ແລະບັນດາຂໍ້ເພີ່ມເຕີມ ເຂົ້າໃນ ລັດຖະທຳມະນູນ ຂອງພະລາຊະອານາຈັກ ຄືທີ່ໄດ້ບົ່ງໄວ້ ໃນບັນດາສັນຍາວຽງຈັນປີ ໑໙໗໓ ລະຫວ່າງ ບັນດາກຳລັງຮັກຊາດຝ່າຍປະເທດລາວ ກັບລັດຖະບານ ພະລາຊະອານາຈັກລາວ ຍັງຄົງຮັກສາ ຄຸນຄ່າການເມືອງ ແລະ ກົດໝາຍໄວ້ຢູ່.</u>

ນັ້ນ ແມ່ນບັນດາຜົນສຳເລັດການເມືອງ ແລະກົດໝາຍສຳຄັນ, ແມ່ນບັນດາບົດຮຽນອັນປະເສີດ ໃນປະຫວັດສາດ ຂອງຊາດເຮົາ ທີ່ເຄີຍມີມູນເຊື້ອສາມັກຄີປອງດອງກັນ ມາແຕ່ໂບຮານນະການ. ເພາະສະນັ້ນ, ຈຳຕ້ອງປົກປັກຮັກສາ ແລະຂະຫຍາຍເພີ່ມເຕີມນັ້ນ ໃຫ້ສອດຄ່ອງກັບ ສະພາບການຕົວຈິງ ຂອງປະເທດຊາດ ໃນປະຈຸບັນ ເພື່ອສ້າງເງື່ອນໄຂ ປະຕິບັດ ຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ, ພ້ອມກັບປະກອບ ເພື່ອແຮງ ກໍ່ສ້າງປະເທດຊາດ ໃຫ້ໄປຕາມເສັ້ນທາງ ສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

ຫຼັງຈາກປິ່ນປົວສະພາບການ ແລະ ພ້ອມກັບອັບຂອງບັນດາຂໍ້ຄວາມດັ່ງກ່າວຂ້າງບົນ, ຕໍ່ໜ້າສະພາບການຕົວຈິງຂອງພະລາຊະອານາຈັກລາວ ໃນປະຈຸບັນທີ່ພວມດຳເນີນຄົງຕົວເປັນສອງເຂດ, ສອງອຳນາດການປົກຄອງ ແລະ ສອງກຳລັງການເມືອງ ແລະ ກຳລັງປະກອບອາວຸດ, ເພື່ອຢຸດເຊົາສົງຄາມ, ສ້າງສັນຕິພາບຄືນໃໝ່, ສ້າງເງື່ອນໄຂເພື່ອປະຕິບັດສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ, ວັດທະນາຖາວອນ, ບັນດາກຳລັງຮັກຊາດລາວ ຍົກເອົາບັນດາບັນຫາທີ່ຮີບດ່ວນອອກ ໂດຍມີຄວາມເອົາໃຈໃສ່ຢ່າງເໝາະສົມເຖິງບັນດາຂໍ້ສະເໜີ ຂອງຝ່າຍວຽງຈັນ ແນໃສ່ຊຸກຍູ້ວິທີການແກ້ໄຂບັນຫາລາວໂດຍສັນຕິວິທີດັ່ງລຸ່ມນີ້:

໑)- ຢຸດເຊົາການສູ້ຮົບ, ຟື້ນຟູສັນຕິພາບຢູ່ລາວຄືນໃໝ່, ປະກອບດ້ວຍ:

ກ)- ລັດຖະບານອາເມລິກາຕ້ອງຢຸດເຊົາການຖິ້ມລະເບີດ ພ້ອມກັບທຸກການເຄື່ອນໄຫວທາງການທະຫານອື່ນໆ ຂອງອາເມລິກາ ແລະ ບັນດາປະເທດທີ່ຂຶ້ນກັບຝ່າຍອາເມລິກາຢູ່ບົນດິນແດນລາວ ຢ່າງສິ້ນເຊີງ ແລະ ຕະຫຼອດການ, ເລີກລ້າງທຸກຖານທັບ, ທຸກທີ່ຕັ້ງ ແລະ ພື້ນຖານທາງທະຫານຂອງອາເມລິກາຢູ່ດິນແດນລາວ, ລົບລ້າງກອງທະຫານພິເສດ ເຊິ່ງແມ່ນອາເມລິກາຈັດຕັ້ງ, ອົບຮົມ, ປະກອບອາວຸດ, ລ້ຽງເກືອ ແລະ ບັນຊາໂດຍກົງ. ລັດຖະບານອາເມລິກາຕ້ອງຫາບແບກການໃຊ້ຈ່າຍ ເພື່ອປົວແປງບາດແຜສົງຄາມທີ່ອາເມລິກາເປັນຜູ້ກໍ່ຂຶ້ນ.

ຂ)- ບັນດາກຳລັງປະກອບອາວຸດຢູ່ລາວຕ້ອງຢຸດເຊົາທຸກການເຄື່ອນໄຫວທາງການທະຫານທີ່ເປັນປໍລະປັກກັນຢູ່ໜ້າດິນ ແລະ ເທິງອາກາດ, ປະຕິບັດການຢຸດຍິງກັນທີ່ຢ່າງສິ້ນເຊີງ ແລະ ພ້ອມໆກັນຢູ່ໃນທົ່ວດິນແດນລາວ.

ຫຼັງຈາກປະຕິບັດການຢຸດເຊົາການສູ້ຮົບ ແລະການເຄື່ອນໄຫວທີ່ເປັນປໍລະປັກກັນ:

ກ)- ທີ່ປຶກສາ, ພະນັກງານທະຫານ, ກອງທະຫານປະຈຳການ ແລະນອກປະຈຳການຂອງຕ່າງປະເທດ ຕ້ອງຖອນອອກຈາກລາວໃຫ້ໝົດຢ່າງຖືກຕ້ອງຕາມບັນດາຂໍ້ກຳນົດໃນສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ ແລະ ບັນດາລະບຽບການທີ່ຝ່າຍຕ່າງໆ ໄດ້ຕົກລົງກັນພາຍໃນ ໙໐ ວັນ ນັບແຕ່ເວລາໄດ້ເຊັນຂໍ້ຕົກລົງສະບັບນີ້.

ຂ)- ຫ້າມຂາດທຸກການເຄື່ອນໄຫວລ່ວງລ້ຳ ຫຼືບຽດເບືອດເຂດທີ່ຝ່າຍກົງກັນຂ້າມຄວບຄຸມຊົ່ວຄາວ ແລະ ຫ້າມຂາດທຸກການເຄື່ອນທັບກວາດລ້າງ, ທຸກການເຄື່ອນໄຫວໜີບຮັດ, ປາບປາມ, ຈັບກຸມ, ຈຳແນກແກ້ແຄ້ນຕໍ່ຜູ້ຄົນ ທີ່ໄດ້ຮ່ວມມືກັບຝ່າຍອື່ນໃນສະໄໝສົງຄາມ.

ຄ)- ຫ້າມຂາດບໍ່ໃຫ້ນຳເອົາກອງທະຫານປະຈຳການ ແລະ ນອກປະຈຳການ, ບັນດາທີ່ປຶກສາ ແລະ ພະນັກງານທະຫານກໍຄືອາວຸດຍຸດທະພັນ ແລະພາຫະນະສົງຄາມ ບໍ່ວ່າຂອງຕ່າງປະເທດໃດໆ ແລະ ຢູ່ພາຍໃຕ້ຮູບການໃດໆ ເຂົ້າມາລາວ; ຢຸດເຊົາທຸກການຊ່ວຍເຫຼືອທາງດ້ານການທະຫານໃຫ້ຝ່າຍໃດຝ່າຍໜຶ່ງເປັນສະເພາະຢູ່ໃນລາວ. ໃນກໍລະນີທີ່ຈຳເປັນຕ້ອງປ່ຽນອາວຸດຍຸດທະພັນ, ພາຫະນະສົງຄາມທີ່ຖືກເປ່ເພເສຍຫາຍນັ້ນ ຈະແມ່ນບັນດາຝ່າຍເປັນຜູ້ປຶກສາຕົກລົງກັນ ແລະ ໂດຍແມ່ນລັດຖະບານປະສົມເປັນຜູ້ຮອງຂໍ ແລະ ແບ່ງປັນ.

ງ)- ບັນດາຝ່າຍທີ່ກ່ຽວຂ້ອງຈະສົ່ງມອບບັນດາທະຫານ ແລະ ປະຊາຊົນສາມັນຂອງຝ່າຍອື່ນ ບໍ່ວ່າແມ່ນສັນຊາດໃດທີ່ຖືກຈັບ ແລະ ຖືກຄຸມຂັງໃນສະໄໝສົງຄາມຄືນໃຫ້ກັນທັງໝົດ, ຕາມລະບຽບການ

ທີ່ຝ່າຍຕ່າງໆ ໄດ້ຕົກລົງກັນ. ການແລກປ່ຽນນີ້ ຈະເລີ່ມຕົ້ນ ແລະສິ້ນສຸດລົງ ພ້ອມກັນກັບ ການຖອນກອງທະຫານ ແລະພະນັກງານ ທະຫານ ຂອງຕ່າງປະເທດ ອອກຈາກລາວໃຫ້ຫມົດ.

໒)- ໃນເວລາລໍຖ້າ ການດຳເນີນການເລືອກຕັ້ງທົ່ວໄປ ແບບເສລີ ປະຊາທິປະໄຕ ຢ່າງແທ້ຈິງ ເພື່ອເລືອກຕັ້ງ ລັດຖະສະພາ ແລະຈັດຕັ້ງລັດຖະບານປະສົມແຫ່ງຊາດ ເປັນທາງການນັ້ນ, ສອງຝ່າຍຕົກລົງກັນ ສ້າງຕັ້ງ ສະພາ ປະສົມການເມືອງ ແລະລັດຖະບານປະສົມ ແຫ່ງຊາດຊົ່ວຄາວຊຸດໃຫມ່ຂຶ້ນ ໂດຍທັນທີ ເພື່ອປະຕິບັດ ບັນດາຂໍ້ຄວາມ ທີ່ໄດ້ຕົກລົງກັນ ແລະຈັດການບໍລິຫານວຽກງານ ຂອງປະເທດຊາດ, ປະຕິບັດ ຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ. ອົງການທັງສອງດັ່ງກ່າວ ຕ້ອງໄດ້ຈັດຕັ້ງຂຶ້ນໃຫ້ແລ້ວ ຢ່າງຊ້າທີ່ສຸດພາຍໃນ ໓໐ ວັນ ຫລັງຈາກໄດ້ເຊັນຂໍ້ຕົກລົງສະບັບນີ້.

ສະພາປະສົມການເມືອງ ແມ່ນອົງການສູງສຸດ ຂອງຄວາມຖືກຕ້ອງປອງດອງຊາດ, ເຊິ່ງປະກອບດ້ວຍຜູ້ແທນ ຂອງສອງຝ່າຍ ແລະຜູ້ແທນບັນດາກຳລັງເປັນກາງຮັກຊາດ, ຜູ້ແທນພະບໍລົມມະວົງສານຸວົງ, ຜູ້ຊົງຄຸນວຸດທິ ທີ່ເຫັນດີເຫັນພ້ອມນຳ ສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ໂດຍມີອັດຕາສ່ວນເທົ່າທຽມກັນ. ອົງການນີ້ ມີຫນ້າທີ່ປະກອບຄຳເຫັນ, ຊຸກຍູ້ ແລະຊ່ວຍເຫລືອ ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃຫມ່ ປະຕິບັດບັນດາຂໍ້ຄວາມທີ່ ໄດ້ຕົກລົງກັນ ລະຫວ່າງຝ່າຍຕ່າງໆ, ແລະສືບຕໍ່ເຈລະຈາ ແກ້ໄຂບັນດາບັນຫາ ທີ່ຍັງຄົງຄ້າງ ເຊິ່ງພົວພັນເຖິງສອງຝ່າຍ, ນັບທັງການພົວພັນ ລະຫວ່າງສອງເຂດ, ຮັບປະກັນສິດສະເຫມີພາບ ລະຫວ່າງບັນດາຊົນຊາດ ແລະສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ, ນະໂຍບາຍຕ່າງປະເທດ ສັນຕິພາບເປັນກາງ, ແກ້ໄຂບັນຫາການຊ່ວຍເຫລືອ ຂອງຕ່າງປະເທດ ແລະກຽມການດຳເນີນການເລືອກຕັ້ງທົ່ວໄປ ເພື່ອສ້າງຕັ້ງ ລັດຖະສະພາ ແລະຈັດຕັ້ງ ລັດຖະບານປະສົມ ແຫ່ງຊາດ ເປັນທາງການ ເຊິ່ງຈະເປັນຕົວແທນ ທີ່ແທ້ຈິງ ຂອງປະຊາຊົນ ບັນດາຊົນຊາດລາວ. ສະພາປະສົມການເມືອງນີ້ ມີຄະນະປະຈຳ ທີ່ປະກອບດ້ວຍ ຜູ້ແທນຂອງທັງສອງຝ່າຍ, (ຝ່າຍ ແນວລາວຮັກຊາດ, ຝ່າຍວຽງຈັນ), ແລະຜູ້ແທນ ຂອງບັນດາກຳລັງເປັນກາງຮັກຊາດ ແລະຜູ້ແທນ ພະບໍລົມມະວົງສານຸວົງ, ຜູ້ຊົງຄຸນວຸດທິ ທີ່ເຫັນດີນຳ ສັນຕິພາບ, ເປັນກາງ, ເອກະລາດ ແລະປະຊາທິປະໄຕ, ໂດຍມີອັດຕາສ່ວນເທົ່າທຽມກັນ.

ລັດຖະບານປະສົມ ແຫ່ງຊາດຊົ່ວຄາວຊຸດໃຫມ່ ຈັດຕັ້ງຂຶ້ນ ຕາມລະບຽບການພິເສດ, ໂດຍໄດ້ຮັບ ພະປະລະມາພິໄທແຕ່ງຕັ້ງຈາກ ພະມະຫາກະສັດ, ເຮັດວຽກຕາມຫລັກການ ເປັນເອກະສັນ ລະຫວ່າງຝ່າຍຕ່າງໆ, ມີຮ່າງປະກອບອັນເຫມາະສົມ ແລະມີຫນ້າທີ່ປະຕິບັດບັນດາຂໍ້ຄວາມ ທີ່ໄດ້ເຊັນກັນ ລະຫວ່າງຝ່າຍຕ່າງໆ ແລະໂຄງການດຳເນີນງານ ທີ່ໄດ້ວາງອອກໃນປີ ໑໙໖໒. ລັດຖະບານດັ່ງກ່າວ ປະກອບດ້ວຍ ອັດຕາສ່ວນ ເທົ່າທຽມກັນ ດັ່ງນີ້ :

- ແນວ ລາວ ຮັກ ຊາດ ,
- ບັນດາກຳລັງເປັນກາງຮັກຊາດ ແລະຜູ້ຊົງຄຸນວຸດທິ ທີ່ເຫັນດີນຳ ສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ.
- ແລະ ຝ່າຍ ວຽງ ຈັນ.

ໃນເວລາ ທີ່ຍັງບໍ່ທັນມີ ລັດຖະສະພາ ແລະລັດຖະບານປະສົມແຫ່ງຊາດ ເປັນທາງການເທື່ອນັ້ນ, ແຕ່ລະຝ່າຍ ເປັນຜູ້ຄຸ້ມຄອງ ເຂດທີ່ຕົນກວດກາຊົ່ວຄາວ, ປະຕິບັດ ທຸກສິດເສລີພາບ ປະຊາທິປະໄຕ ອັນກວ້າງຂວາງ ຕໍ່ປະຊາຊົນ ແລະປະຕິບັດ ນະໂຍບາຍ ການເມືອງຕ່າງປະເທດ ເອກະລາດ, ສັນຕິພາບ ເປັນກາງ. ແຕ່ລະຝ່າຍ ນຳໃຊ້ຄວາມສາມາດຂອງຕົນ ແລະການຊ່ວຍເຫລືອຂອງທາງນອກ ເພື່ອປົວແປງ

ບາດແຜ ຂອງສົງຄາມ, ກໍ່ສ້າງ ແລະຂະຫຍາຍເສດຖະກິດ ແລະວັດທະນະທຳ, ແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ດີຂຶ້ນ.

ບັນດາຝ່າຍ ທີ່ກ່ຽວຂ້ອງຕົກລົງກັນ ເຮັດໃຫ້ຕົວເມືອງວຽງຈັນ ກາຍເປັນເຂດ ເປັນກາງ ເພື່ອຮັບປະກັນ ຄວາມປອດໄພ ໃຫ້ບ່ອນຕັ້ງ ລັດຖະບານປະສົມ ແລະສະພາປະສົມການເມືອງ, ຕ້ານທຸກການທຳລາຍ ຫລື ການ ຫນີບເຕັງ ບໍ່ວ່າ ຈະມາຈາກ ກຳລັງໃດ ຢູ່ພາຍໃນ ຫລື ພາຍນອກປະເທດ, ເພື່ອໃຫ້ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃຫມ່ ແລະສະພາປະສົມການເມືອງ ມີການເຄື່ອນໄຫວ ຢ່າງມີຜົນສັກສິດ.

ນ)- ບັນດາຝ່າຍ ໃຫ້ຄຳຫມັ້ນສັນຍາ ຮັບປະກັນ ແລະປະຕິບັດຢ່າງຄົບຖ້ວນ ແລະເຖິງຖອງ ບັນດາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ ເຊັ່ນ: ເສລີພາບ ໃນການອອກສະຫມັກຮັບເລືອກຕັ້ງ ແລະເລືອກຕັ້ງ, ເສລີພາບ ໃນການປາກເວົ້າ, ພິມຈຳຫນ່າຍ, ໃນການຈັດຕັ້ງ, ໂຮມຊຸມນຸມ, ຕັ້ງພູມລຳເນົາ, ໃນການໄປມາ ຄ້າຂາຍ ແລະກຳມະສິດ ຊັບສິນບັດສ່ວນຕົວ ແລະອື່ນໆ, ແລະລົບລ້າງ ທຸກຂໍ້ບັງຄັບ, ທຸກລະບຽບການ ແລະທຸກການຈັດຕັ້ງ ທີ່ຜິດກັບສິດເສລີພາບ ປະຊາທິປະໄຕດັ່ງກ່າວ, ທັງນີ້ກໍ່ເພື່ອໃຫ້ ພົນລະເມືອງລາວທຸກຄົນ ມີເງື່ອນໄຂ ສະດວກດີ ເພື່ອທຸ່ມເທ ຄວາມສາມາດ ແລະເຫື່ອແຮງ ຂອງຕົນ ໃຫ້ແກ່ປະເທດຊາດ.

ບັນດາຝ່າຍ ໃຫ້ຄຳຫມັ້ນສັນຍາວ່າ ບໍ່ໃຫ້ມີການປະພຶດ ຈຳແນກແກ້ແຄ້ນ ຕໍ່ບັນດາຜູ້ຄົນ ທີ່ໄດ້ຮ່ວມມືກັບຝ່າຍອື່ນ ໃນສະໄຫມສົງຄາມ, ຝ່າຍວຽງຈັນ ຕ້ອງຍຸບເລີກ ບັນດາເຂດເຕົ້າໂຮມປະຊາຊົນ ທີ່ເອີ້ນວ່າ "ເຂດອົບພະຍົບຫລົບໄພ" ໂດຍທັນທີ ແລະມອບສິດ ເປັນອິດສະຫລະ ຄືນໃຫ້ປະຊາຊົນ ທີ່ຖືກບັງຄັບໄປເຕົ້າໂຮມ, ຊ່ວຍເຫລືອເຂົາເຈົ້າ ໃຫ້ກັບຄືນບ້ານເດີມ ເພື່ອທຳມາຫາກິນ ແລະໃຊ້ຄ່າເສຍຫາຍ ທຸກຢ່າງ ໃຫ້ແກ່ເຂົາເຈົ້າ.

ອົງການທັງສອງດັ່ງກ່າວ ທີ່ສ້າງຕັ້ງຂຶ້ນນັ້ນ, ມີການພົວພັນ ຊ່ວຍຊູເຊິ່ງກັນແລະກັນ ນັ້ນເປັນບາດກ້າວພື້ນຖານອັນຫນຶ່ງ ເພື່ອສ້າງຮ່າງປະກອບປະສົມ ທີ່ມີຄວາມສັກສິດ ໃຫ້ແກ່ການປົກປັກຮັກສາ ສັນຕິພາບ ແລະຄວາມຖືກຕ້ອງປອງດອງຊາດ ຢູ່ໃນປະເທດເຮົາ ໄວ້ໄດ້ຢ່າງແທ້ຈິງ.

ກ່ຽວກັບ ລັດຖະບານປະສົມແຫ່ງຊາດຊົ່ວຄາວນັ້ນ, ພວກເຮົາ ໄດ້ມີແບບຢ່າງມາກ່ອນແລ້ວ, ແຕ່ ກ່ຽວກັບ ສະພາປະສົມການເມືອງເທື່ອນີ້ ພວກເຮົາ ຫາກໍ່ຈັດຕັ້ງໃຫມ່. ແຕ່ ອັນນີ້ແມ່ນທິວຄິດປະດິດສ້າງໃຫມ່ອັນຫນຶ່ງ ຂອງຝ່າຍບັນດາກຳລັງຮັກຊາດ ທີ່ຖອດມາຈາກ ບັນດາບົດຮຽນປະຫວັດສາດ ຂອງການຮ່ວມລາວ ໃນສອງເທື່ອກ່ອນ, ແນໃສ່ສ້າງເງື່ອນໄຂ ໃຫ້ແຕ່ລະຝ່າຍ ສືບຕໍ່ປຶກສາຫາລື ແກ້ໄຂກ່ຽວກັບບັນດາບັນຫາທີ່ມີການພົວພັນ ລະຫວ່າງຝ່າຍຕ່າງໆ ຢ່າງເພິ່ງພໍໃຈ, ແລະສ້າງບ່ອນອີງ ເພື່ອໃຫ້ ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃຫມ່ ປະຕິບັດໄດ້ ໂຄງການດຳເນີນງານ ແລະບັນດາຫນ້າທີ່ວຽກງານອັນຫນັກຫນ່ວງ ໃນສະເພາະຫນ້າ. ຍ້ອນແນວນັ້ນ ຈິ່ງສ້າງຄວາມສາມາດຕົວຈິງ ເພື່ອໄປເຖິງການປະຕິບັດຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ ຢ່າງແທ້ຈິງໄດ້ ແລະຕອບສະຫນອງ ຄວາມມຸ່ງມາດ ປາຖະຫນາ ຂອງປວງປະຊາຊົນເຮົາ.

ບັນດາທ່ານ ,

ດ້ວຍສະຕິຮັບຜິດຊອບ ຢ່າງເລິກເຊິ່ງ ເຖິງສິດປະໂຫຍດ ອັນສູງສົ່ງ ຂອງປະເທດຊາດ ແລະ ຂອງປະຊາຊົນ, ດ້ວຍເຈດຕະນາດີ ເພື່ອ ສັນຕິພາບ ແລະຄວາມຖືກຕ້ອງປອງດອງຊາດ ຢ່າງແທ້ຈິງ, ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ ວາງບັນດາຂໍ້ສະເໜີຕົວຈິງທີ່ສຸດ ແລະສົມເຫດສົມຜົນ ດັ່ງກ່າວ ຂ້າງບົນອອກ.

ພວກຂ້າພະເຈົ້າ ຫວັງວ່າ ຄະນະຜູ້ແທນ ຝ່າຍວຽງຈັນ ຈະຕອບສະໜອງ ຢ່າງຕັ້ງໜ້າ ບັນດາຂໍ້ສະເໜີ ທີ່ມີລັກສະນະ ກ້າວໜ້າດັ່ງກ່າວ ຂ້າງບົນ ຂອງພວກຂ້າພະເຈົ້າ ແລະໄປເຖິງບ່ອນຕົກລົງ ກັນໂດຍໄວ ກ່ຽວກັບ ບັນດາບັນຫາ ອັນຮີບດ່ວນທີ່ສຸດ, ເປີດຊ່ອງທາງ ໃຫ້ແກ່ວິທີການ ແກ້ໄຂບັນຫາລາວ ທັງໝົດ. ຕົກລົງ ບັນດາຂໍ້ຄວາມດັ່ງກ່າວ ໄປພ້ອມໆ ກັນກັບ ການສືບຕໍ່ ປຶກສາຫາລື ບັນດາບັນຫາ ອື່ນໆ, <u>ແຕ່ລະຝ່າຍ ຈະອອກຄຳສັ່ງ ຢຸດຍິງ ໂດຍທັນທີ ໃຫ້ບັນດາກຳລັງທັງໝົດ ກັບຝ່າຍຕົນ ແລະຈັດຕັ້ງ ຄະນະກຳມະການ ປະສົມຢຸດຍິງ ດ້ວຍການຊ່ວຍເຫຼືອ ຂອງຄະນະກຳມາທິການກວດກາ ແລະຄວບຄຸມ ສາກົນ ທີ່ໄດ້ຈັດຕັ້ງຂຶ້ນ ໂດຍສັນຍາເຊີແນວປີ ໑໙໕໔ ໃນຂອບເຂດ ສິດອຳນາດ ແລະໜ້າທີ່ ທີ່ໄດ້ບົ່ງ ໄວ້ ໃນອານຸສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ, ເພື່ອຢຸດເຊົາສົງຄາມ ອັນນອງເລືອດ ໂດຍແມ່ນ ຈັກກະພັດອາເມລິກາ ໄດ້ກໍ່ຂຶ້ນ, ຟື້ນຟູ ສັນຕິພາບ</u> ເຊິ່ງແມ່ນ ຄວາມມຸ່ງມາດ ປາຖະໜາລອນ ຂອງ ປວງປະຊາຊົນລາວເຮົາ ແລະຂອງມວນມະນຸດທີ່ກ້າວໜ້າ.

ບົນພື້ນຖານ ຢືນຢັນ ສະພາບການ ແລະຂໍ້ສະເໜີ ວິທີການດັ່ງກ່າວຂ້າງບົນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ ຂໍນຳເອົາ ຮ່າງ ຂໍ້ຕົກລົງ ລະຫວ່າງ ຄະນະຜູ້ແທນພວກເຮົາທັງສອງ ອອກ ເພື່ອໃຫ້ ກອງປະຊຸມດຳເນີນ ການປຶກສາຫາລືຕໍ່ໄປ, ແລະຫວັງວ່າ ກອງປະຊຸມ ຈະສຳເລັດຜົນ ເປັນ ຢ່າງດີ.

---

10e séance
19. 12. 72
19 DEC 1972

# ບົດປະກອບຄຳເຫັນ

ຂອງ ທ່ານ ພູນ ສີປະເສີດ, ຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະປະຊຸມ ເທື່ອທີ ໑໐, (ໃນວັນທີ ໑໙/໑໒/໑໙໗໒).

---

ບັນດາທ່ານ,

ໂດຍຍຶດໝັ້ນ ໃນສິດປະໂຫຍດ ອັນສູງສົ່ງ ຂອງປະເທດຊາດ ແລະ ປະຊາຊົນ, ແລະ ດ້ວຍ ເຈດຕະນາດີ ໃນການແກ້ໄຂ ບັນຫາລາວ ໂດຍສັນຕິວິທີ, ເພື່ອສ້າງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ໃນວາລະປະຊຸມ ຄັ້ງປະຖົມມະເລີກນັ້ນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ລາວ, ໄດ້ສະເໜີບາງ ເນື້ອໃນລະອຽດ ຂອງ ວິທີການການເມືອງ ໕ ຂໍ້ ກ່ຽວກັບ ການແກ້ໄຂບັນຫາ ລາວ. ນັ້ນ ແມ່ນວິທີການກວມລວມ, ເປັນລະບົບດຽວ ເຊິ່ງລວມມີ ທາງດ້ານການທະຫານ, ການ ເມືອງ, ກໍຄື ດ້ານພາຍໃນ ແລະ ຕ່າງປະເທດ ຂອງບັນຫາລາວ. ວິທີການການເມືອງ ໕ ຂໍ້ ດັ່ງ ກ່າວ ແມ່ນພື້ນຖານ ອັນຖືກຕ້ອງ ເພື່ອແກ້ໄຂ ບັນຫາລາວ ໃນປະຈຸບັນ. ໃນວາລະປະຊຸມ ຄັ້ງກ່ອນໆ ກໍເຊັ່ນດຽວກັບ ໃນວາລະປະຊຸມ ຄັ້ງທີ ໙ ແລ້ວນີ້, ພວກຂ້າພະເຈົ້າ ໄດ້ເຮັດໃຫ້ ຫຼັກໝັ້ນຂອງຕົນ ກະຈ່າງແຈ້ງຕື່ມອີກ ໂດຍໄດ້ສະເໜີ ຂໍ້ປີກຍ່ອຍ, ລະອຽດຕ່າງໆຕື່ມອີກ ກ່ຽວກັບ ບັນດາບັນຫາ ພື້ນ ຖານ ອັນຮີບດ່ວນທີ່ສຸດ ທີ່ວາງອອກ ສຳລັບປະເທດຊາດ ຂອງພວກເຮົາ, ແນໃສ່ ເຮັດໃຫ້ ສົງຄາມ ຮຸກຮານ ຂອງອາເມລິກາຢູ່ລາວ ສິ້ນສຸດລົງໂດຍໄວ ແລ້ວສ້າງ ສັນຕິພາບຄືນມາ, ດ້ານໜຶ່ງອີກ ກໍ ເພື່ອແກ້ໄຂ ບັນດາບັນຫາພາຍໃນ ລະຫວ່າງຝ່າຍລາວ, ເພື່ອກ້າວເຖິງ ສ້າງຄວາມຖືກຕ້ອງປອງດອງ ລະຫວ່າງຄົນລາວດ້ວຍກັນ. ຫຼັກໝັ້ນ ຂອງພວກຂ້າພະເຈົ້າ ດັ່ງກ່າວ ໄດ້ຮັບການຊົມເຊີຍ, ເຫັນດີ ເຫັນພ້ອມ ແລະ ສະໜັບສະໜູນ ຢ່າງແຮງກ້າ ຈາກທຸກຊັ້ນຄົນ ເພາະວ່າ ຫຼັກໝັ້ນນັ້ນ ມັນບໍ່ສະ ເພາະແຕ່ ສ່ອງແສງເຖິງ ສະພາບການທີ່ຈິງຢູ່ລາວ ຢ່າງຖືກຕ້ອງເທົ່ານັ້ນ, ແຕ່ຍັງຕອບສະໜອງ ກັບຄວາມມຸ່ງມາດປາຖະໜາ ອັນເລິກເຊິ່ງ ແລະ ແຮງກ້າ ຂອງປວງປະຊາຊົນເຮົາ ຄື ເອກະລາດ, ສັນຕິພາບ, ຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ.

ພວກຂ້າພະເຈົ້າ ມີຄວາມເສຍດາຍທີ່ສຸດ ທີ່ຝ່າຍພວກທ່ານ ບໍ່ຕອບສະໜອງ ຢ່າງຕັ້ງໜ້າ ແລະ ເຂັ້ມງວດ ຕໍ່ບັນດາຂໍ້ສະເໜີ ອັນຖືກຕ້ອງ ແລະ ເຕັມໄປດ້ວຍ ເຈດຕະນາດີ ຂອງພວກຂ້າພະເຈົ້າ ດັ່ງກ່າວ. ບໍ່ພຽງແຕ່ເທົ່ານັ້ນ, ຝ່າຍພວກທ່ານ ຍັງໄດ້ໃຊ້ ເວທີ ຂອງການເຈລະຈານີ້ ເພື່ອໂຄສະນາ ພິກປີ້ນ ໃສ່ຮ້າຍປ້າຍສີ ການຕໍ່ສູ້ກູ້ຊາດ ຕ້ານອາເມລິກາ ອັນສະຫວ່າງແຈ້ງ ແລະ ເປັນທຳ ຂອງບັນດາ ກຳລັງຮັກຊາດລາວ, ຕັ້ງແກ້ງ ໃສ່ຮ້າຍປ້າຍສີ ປະເທດສາທາລະນະລັດ ປະຊາທິປະໄຕຫວຽດນາມ, ປົກປິດ ການຮຸກຮານ ທີ່ເຕັມໄປດ້ວຍ ໂທດກຳ ອັນນອງເລືອດ ຂອງ ອາເມລິກາ ຢູ່ລາວ.

ຜ່ານ ຄຳຖະແຫຼງ ຂອງທ່ານ ໂງ່ນ ຊະນະນິກອນ ໃນວາລະປະຊຸມ ຄັ້ງແລ້ວນີ້ ກໍຄື ຄຳ ຖະແຫຼງຕ່າງໆ ຂອງຝ່າຍພວກທ່ານ ໃນໄລຍະທີ່ຜ່ານມາ, ພວກທ່ານ ໄດ້ນຳເອົາ ຂໍ້ສະເໜີຕ່າງໆ ອັນດື້ດ້ານ, ໄຮ້ເຫດຜົນ ອອກມາ ເຮັດໃຫ້ການເຈລະຈາ ຢຸດຢູ່ກັບທີ່, ບໍ່ຄືບໜ້າໄປໄດ້ ແຕ່ປະການ ໃດ. ຫຼັກໝັ້ນ ອັນດື້ດ້ານ ຂອງຝ່າຍພວກທ່ານ ໄດ້ສະແດງອອກ ຢ່າງຈະແຈ້ງ ໃນສາມດ້ານ ດັ່ງນີ້:

<u>ດ້ານໜຶ່ງ: ອາເມລິກາ ແລະ ຝ່າຍພວກທ່ານ ບໍ່ມີເຈຕະນາດີ ໃນການເຈລະຈາ ກໍຄື ໃນການແກ້ໄຂ ບັນຫາລາວ ໂດຍສັນຕິວິທີ.</u>

ໃນຂະນະທີ່ ກອງປະຊຸມ ເຈລະຈາ ໄດ້ຖືກກ່ອງໜ່ວງ, ຍືດຍາວມາໄດ້ ໖ ເດືອນກວ່າ ເຊິ່ງບໍ່ໄດ້ຮັບຜົນ ຢ່າງຕັ້ງໜ້າ ແຕ່ປະການໃດນັ້ນ, ໂດຍໄດ້ຮັບການ ສົມຮູ້ຮ່ວມຄິດ ຈາກຝ່າຍພວກທ່ານ, ອາເມລິກາ ຊໍ້າພັດເພີ່ມທະວີ ຖິ້ມລະເບີດ ຍິງທຳລາຍ ພື້ນແຜ່ນດິນລາວ, ເພີ່ມທະວີ ການເຄື່ອນທັບ ບຸກໂຈມຕີບຸກຍຶດ ເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດລາວ ຢ່າງຂະໜານໃຫຍ່. ການເຄື່ອນໄຫວ ຂອງກອງທັບອາກາດ ອາເມລິກາຢູ່ລາວ ໃນ ໖-໗ ເດືອນ ມານີ້ ກໍໄດ້ເພີ່ມຂຶ້ນ ຢ່າງຮ້າຍແຮງ, ເປັນຕົ້ນແມ່ນ ຍົນ ເບ-໕໒ ແລະ ເບ-໕໖. ຕາມຕົວເລກ ທີ່ຍັງບໍ່ທັນຄົບຖ້ວນ ຈຳນວນ ຖ້ຽວບິນ ຖິ້ມລະເບີດ ຍິງທຳລາຍຢູ່ລາວ ຂອງຍົນ ເບ-໕໖ ຂອງອາເມລິກາ ໃນ ໗ ເດືອນແລ້ວນີ້ ໄດ້ເພີ່ມຂຶ້ນທົບ ໗ ເທົ່າ ເມື່ອປຽບໃສ່ ໗ ເດືອນຕົ້ນປີ ໑໙໗໒. ອາເມລິກາ ໄດ້ນຳເອົາ ກອງທະຫານເລວຮັບຈ້າງຂອງໄທ ເຂົ້າມາເພີ່ມໃນລາວເກືອບ ໑໐ ກອງພັນ, ອັນໄດ້ມີຈຳນວນ ທະຫານເລວຮັບຈ້າງຂອງໄທ ຢູ່ລາວ ໃນປະຈຸບັນ ຂຶ້ນເຖິງ ໗໒ ກອງພັນ ເຊິ່ງປະກອບດ້ວຍ ກອງທະຫານຮາບ ແລະ ກອງປືນໃຫຍ່, ໃຫ້ພວກນີ້ ສົມທົບກັບ ກອງທະຫານຝ່າຍຂວາ ໂດຍມີ ກອງທັບອາກາດ ອາເມລິກາ ຊ່ວຍໜູນ ໃຫ້ໂດຍກົງ ເປີດການເຄື່ອນທັບ ຢ່າງຂະໜານໃຫຍ່ ແຕ່ ໔໐ ເຖິງ ໕໐ ກອງພັນ ບຸກໂຈມຕີບຸກຍຶດ ຜົວເມືອງ ສາລະວັນ, ເມືອງ ປາກຊ່ອງ, ເມືອງ ພະລານ ແລະບໍລິເວນ ທົ່ງໄຫຫີນ-ຊຽງຂວາງ ເຊິ່ງແມ່ນ ເຂດທີ່ຢູ່ໃຕ້ການຄວບຄຸມ ຂອງບັນດາກຳລັງຮັກຊາດລາວ.

ໂດຍເດີນຕາມຮອຍ ຂອງພວກຫຸ່ນໄຊງ່ອນ ແລະ ພວກຫຸ່ນ ພະນົມເປັນ, ຝ່າຍວຽງຈັນ ໄດ້ຮ້ອງຂໍ ໃຫ້ອາເມລິກາ ເພີ່ມທະວີການຊ່ວຍເຫຼືອ ອາວຸດ ຍຸດທະພັນ ແລະ ພາຫະນະສົງຄາມ ຢ່າງຮີບດ່ວນ, ໃນນັ້ນມີທັງຍົນ ເຮລີກັອບເຕີ ແລະຍົນ ເຕ-໒໘. ຄຽງຄູ່ກັບການ ເຄື່ອນໄຫວ ທາງດ້ານການທະຫານ ດັ່ງກ່າວນັ້ນ, ຝ່າຍພວກທ່ານ ຍັງໄດ້ເພີ່ມທະວີ ການເຄື່ອນໄຫວ ທາງດ້ານການເມືອງ ແລະ ຕ່າງປະເທດ ຕ້ານກັບ ບັນດາກຳລັງຮັກຊາດລາວ. ພວກທ່ານ ໄດ້ແຕ່ງຄົນ ໄປທ້ອງຖິ່ນຕ່າງໆ ເພື່ອໂຄສະນາ ພິກປີ້ນ ຫລັກໝັ້ນ ອັນຖືກຕ້ອງ ຂອງບັນດາກຳລັງຮັກຊາດລາວ ທີ່ໄດ້ສະເໜີອອກ ໃນກອງປະຊຸມ ເຈລະຈາ ທີ່ຜ່ານມາ, ແນໃສ່ ກໍ່ຄວາມລະແວງສົງໄສ ແລະ ກະວົນກະວາຍ ໃນໝູ່ປະຊາຊົນ.

ບັນຫາໜຶ່ງອີກ ທີ່ໜັກໜ່ວງ ພໍສົມຄວນ ກໍຄື ໃນຂະນະທີ່ ພວມດຳເນີນການເຈລະຈາຢູ່ນັ້ນ, ໃນການ ຕອບຄຳສຳພາດ ນັກໜັງສືພິມຕ່າງປະເທດ ກໍຄື ໃນການປາໄສ ໂອ້ລົມກັບ ຂ້າລາຊະການ ແລະ ທະຫານ, ສະເດັດເຈົ້າ ສຸວັນນະພູມາ ໃນຖານະ ເປັນຫົວໜ້າ ຂອງຝ່າຍວຽງຈັນ ກໍໄດ້ປະກາດຢ່າງເປີດເຜີຍວ່າ ອາເມລິກາ ຈະບໍ່ປະຖິ້ມອິນດູຈີນ, ປະທານາທິບໍດີ ນິກຊັນ ຈະບໍ່ປະອິນດູຈີນ, ກອງທັບອາກາດ ອາເມລິກາ ຍັງຈະຢູ່ໄທຕໍ່ໄປອີກ ໔-໕ ປີ, ອາເມລິກາ ໄດ້ໃຫ້ຄຳໝັ້ນສັນຍາ ຈະສືບຕໍ່ຖິ້ມລະເບີດ ໃສ່ລາວ ແລະ ສືບຕໍ່ໃຫ້ການຊ່ວຍເຫຼືອ ທາງດ້ານການທະຫານແກ່ລາວ ໃນລະດັບປະຈຸບັນ ແລະ ອື່ນໆ. ພ້ອມກັນນັ້ນ, ສະເດັດເຈົ້າ ສຸວັນນະພູມາ ກໍໄດ້ມີຄຳເຫັນ ແລະ ຂໍ້ສະເໜີ ທີ່ດື້ດ້ານທີ່ສຸດ ຄືວ່າ ລັດຖະບານປະສົມ ຍັງດຳລົງຄົງຕົວຢູ່, ບໍ່ວາດຈະຈັດຕັ້ງ ສະພາປະສົມການເມືອງ,

ບໍ່ຮັບຮູ້ ການດຳລົງຄົງຕົວ ຂອງສອງເຂດ ໂດຍອ້າງວ່າ ເປັນການຍືນ ຕໍ່ລັດຖະທຳມະນູນ, ລາວອາດຈະສືບຕໍ່ ມີການຊ່ອຍເຫຼືອ ທາງດ້ານອາວຸດ ຍຸດທະພັນ ຈາກຕ່າງປະເທດ ແລະ ເວົ້າວ່າ ຕ້ອງມີການຢຸດຍິງເສຍກ່ອນ ຈຶ່ງຈະມີການປຶກສາຫາລື ວິທີການການເມືອງ ກັບແນວລາວຮັກຊາດ ແລະ ອື່ນໆ.

ຄຳເວົ້າ ຂອງສະເດັດ ເຈົ້າສຸວັນນະພູມາ ດັ່ງກ່າວນັ້ນ, ມັນບໍ່ແມ່ນຄຳເວົ້າອັນເປັນທຳມະດາ, ຕັ້ງມີເຈດຕະນາ ໃຊ້ກຳລັງຫນີບຂູ່ ບັນດາກຳລັງຮັກຊາດລາວ ໃນການເຈລະຈາ ຢ່າງບັງອາດ. ກະໂດສະເດັດເຈົ້າສຸວັນນະພູມາ ແລະຝ່າຍວຽງຈັນເອງ ໄດ້ອີງໃສ່ອາເມລິກາ, ໄດ້ນຳເອົາອາເມລິກາ ແລະພວກປະຕິການໄທ ເຂົ້າມາແຊກແຊງຮຸກຮານລາວ, ມາເຖິງດຽວນີ້ ຊ້ຳໄດ້ສະແດງອອກຢ່າງບໍ່ປິດບັງ ຈັກຫນ້ອຍ ໃນການອີງໃສ່ ອຳນາດກຳລັງ ຂອງອາເມລິກາ ເພື່ອບີບບັງຄັບ ບັນດາກຳລັງຮັກຊາດລາວ ຕ້ອງຍອມຮັບເອົາ ເງື່ອນໄຂຕ່າງໆ ລ່ວງຫນ້າ ເຊິ່ງແມ່ນ ວິທີການແບບຕ່ຳຕ້ອຍທີ່ສຸດທີ່ຝ່າຍວຽງຈັນ ສະເຫນີອອກມາ.

ຄຳປະກາດຕ່າງໆ ດັ່ງກ່າວຂອງ ສະເດັດເຈົ້າສຸວັນນະພູມານັ້ນ ໄດ້ເປີດເຜີຍອີກເທື່ອຫນຶ່ງ ເຖິງທາດແທ້ແຫ່ງເຈດຕະນາ ອັນດື້ດ້ານ ໃນການສືບຕໍ່ ສົງຄາມຮຸກຮານ ຂອງອາເມລິກາ ແລະບໍລິວານຕໍ່ລາວ ແລະຕໍ່ບັນດາປະເທດ ໃນອິນດູຈີນ, ພ້ອມກັນນັ້ນ ມັນກໍຊີ້ໃຫ້ເຫັນແຈ້ງຕື່ມວ່າ ຝ່າຍວຽງຈັນ ໄດ້ຂຶ້ນກັບອາເມລິກາ ຢ່າງສິ້ນເຊີງ.

ຈາກຄຳເວົ້າ ແລະ ການກະທຳ ທີ່ຂາດເຈດຕະນາດີ, ບໍ່ມີການກໍ່ສ້າງ ແລະ ບໍ່ມີຄວາມສະເຫມີພາບ ຂອງເພິ່ນດັ່ງກ່າວນັ້ນ, ສະເດັດເຈົ້າສຸວັນນະພູມາ ໄດ້ກໍ່ອຸປະສັກຂັດຂວາງ ກອງປະຊຸມເຈລະຈາ ຢູ່ວຽງຈັນປະຈຸບັນ ບໍ່ໃຫ້ຄືບຫນ້າໄປໄດ້. ດັ່ງນັ້ນ, ສະເດັດເຈົ້າ ສຸວັນນະພູມາ ແລະ ຝ່າຍວຽງຈັນ ຕ້ອງຮັບຜິດຊອບ ກ່ຽວກັບສະພາບການດັ່ງກ່າວນັ້ນ.

ແຕ່ມັນເປັນທຳມະດາຢູ່ວ່າ ການນາບຂູ່ ຂອງສະເດັດເຈົ້າສຸວັນນະພູມາ ແລະ ຝ່າຍວຽງຈັນນັ້ນ, ມັນບໍ່ສາມາດຈະຂົ່ມຂູ່ ແລະ ສັ່ນສະເທືອນ ນ້ຳໃຈຕໍ່ສູ້ ແລະຄວາມຕັດສິນໃຈ ຂອງບັນດາກຳລັງຮັກຊາດລາວ ໃນພາລະກິດ ຕໍ່ສູ້ອັນເປັນທຳຂອງຕົນ ແລະ ມັນແຮ່ງຢືນຢັນສັດຈະທຳຄື: ການຮຸກຮານ ແລະ ແຊກແຊງ ຂອງອາເມລິກາ ແມ່ນອຸປະສັກອັນໃຫຍ່ຫຼວງ ໃຫ້ແກ່ການ ແກ້ໄຂບັນຫາລາວ ໂດຍສັນຕິວິທີ. ດັ່ງນັ້ນ, ຖ້າບໍ່ກຳຈັດປັດເປົ່າ ອຸປະສັກດັ່ງກ່າວນັ້ນອອກ, ການແກ້ໄຂບັນຫາລາວ ໂດຍສັນຕິວິທີ ກໍບໍ່ອາດຈະບັນລຸຜົນສຳເລັດໄດ້ ຢ່າງແນ່ນອນ.

ບັນດາຄຳເວົ້າ ແລະ ການກະທຳດື້ດຶງຕ່າງໆ ຂອງອາເມລິກາ ແລະ ຝ່າຍພວກທ່ານນັ້ນ ໄດ້ສະແດງໃຫ້ເຫັນວ່າ ທາງປາກອາເມລິກາ ແລະ ຝ່າຍພວກທ່ານ ໄດ້ເວົ້າເຖິງການເຈລະຈາ ໂດຍສັນຕິວິທີ ແຕ່ ການກະທຳ ຊ້ຳພັດເພີ່ມທະວີສົງຄາມ, ອາເມລິກາ ຍັງບໍ່ທັນປະລະ ເຈດຕະນາຮຸກຮານລາວ ແບບລ່າເມືອງຂຶ້ນແບບໃຫມ່, ຍັງບໍ່ທັນຢາກແກ້ໄຂ ບັນຫາລາວໂດຍສັນຕິວິທີ, ແຕ່ຍັງຢາກສວຍໂອກາດໃຊ້ການເຈລະຈານີ້ ເພື່ອເປັນມ່ານຄວັນ ເພື່ອຫຼອກລວງ ສຽງວິພາກວິຈານ ຂອງປະຊາຊົນພາຍໃນ, ປະຊາຊົນໃນໂລກ ກໍຄື ປະຊາຊົນອາເມລິກາເອງ. ພ້ອມກັນນັ້ນ, ກໍສະແດງໃຫ້ເຫັນວ່າ ຝ່າຍພວກທ່ານ ບໍ່ມີອິດສະຫຼະ ໃນການກະທຳໃດໆ, ມີແຕ່ຂຶ້ນກັບອາເມລິກາ ຢ່າງສິ້ນເຊີງ, ເປັນກະບອກສຽງໂຄສະນາ ໃຫ້ອາເມລິກາ ແລະ ອີງໃສ່ອາເມລິກາ ຕ້ານກັບບັນດາກຳລັງຮັກຊາດ ແລະ

ປະຊາຊົນ. ບັນດາການກະທຳ ຂອງອາເມລິກາ ແລະ ຝ່າຍພວກທ່ານນັ້ນ ພຽງແຕ່ເຮັດໃຫ້ ສະພາບການ ຂອງປະເທດເຮົາ ທີ່ມີຄວາມເຄັ່ງຕຶງມາແລ້ວນັ້ນ ເພີ່ມຄວາມເຄັ່ງຕຶງຂຶ້ນຕື່ມ, ພຽງແຕ່ເຮັດໃຫ້ ບັນຍາກາດ ຂອງກອງປະຊຸມ ເຈລະຈາຊຸມນີ້, ແລະ ຂັດຂວາງ ບໍ່ໃຫ້ການເຈລະຈາຄືບໜ້າໄປໄດ້ເທົ່ານັ້ນ. ມັນເປັນທຳມະດາຢູ່ວ່າ, ໃນສະພາບການດັ່ງກ່າວນັ້ນ ບັນດາກຳລັງຮັກຊາດລາວ ບໍ່ມີເສັ້ນທາງອື່ນໃດ ນອກຈາກຕັດສິນໃຈ ທັບມ້າງທຸກຍາດກ້າວສ່ຽງໄພທາງທະຫານຄັ້ງໃໝ່ ຂອງອາເມລິກາ ແລະ ຂອງຝ່າຍພວກທ່ານ. ພ້ອມກັນນັ້ນ, ອາເມລິກາ ແລະ ຝ່າຍພວກທ່ານ ຕ້ອງເປັນຜູ້ຮັບຜິດຊອບ ທັງໝົດ ຕໍ່ຜົນຮ້າຍທຸກປະການ ທີ່ອາດຈະເກີດຂຶ້ນຕາມພາຍຫຼັງ.

<u>ດ້ານສອງ:</u> <u>ຝ່າຍພວກທ່ານຫວັງຢາກເຈລະຈາ ໃນທ່າເໜືອ, ມີກົນອຸບາຍຫວັງກົບບັນດາກຳລັງຮັກຊາດລາວ, ບີບບັງຄັບໃຫ້ພວກຂ້າພະເຈົ້າ ຕ້ອງຮັບເອົາ ລະບອບການເມືອງທີ່ຂຶ້ນກັບ ອາເມລິກາ ຂອງຝ່າຍພວກທ່ານ.</u>

ໃນບົດຄຳເຫັນ ຂອງພວກທ່ານ ຫຼາຍສະບັບ, ໂດຍອີງໃສ່ຄວາມທີ່ວ່າ "ປົກປັກຮັກສາລັດຖະທຳມະນູນ, ປົກປັກຮັກສາ ຄວາມເປັນອັນໜຶ່ງອັນດຽວ ຂອງປະເທດຊາດ" ມາເປັນສາກບັງໜ້າ, ພວກທ່ານໄດ້ປະຕິເສດ ການດຳລົງຄົງຕົວ ຂອງແຂວງເຂດ ທີ່ມີອຳນາດການປົກຄອງຕ່າງກັນ, ບີບບັງຄັບໃຫ້ພວກຂ້າພະເຈົ້າ ຕ້ອງຮັບຮູ້ ລັກສະນະຖືກກົດໝາຍ, ຖືກຕ້ອງຕາມ ລັດຖະທຳມະນູນ ຂອງອັນທີ່ເອີ້ນວ່າ ລັດຖະບານ ແລະ ສະພາ ຂອງຝ່າຍພວກທ່ານ, ທວງໃຫ້ ພວກຂ້າພະເຈົ້າຕ້ອງມາເຂົ້າກັບ ຝ່າຍພວກທ່ານ, ກັບຄືນເຂົ້າມາຮ່ວມ ໃນອັນທີ່ເອີ້ນວ່າ "ລັດຖະບານປັບປຸງ" ແລະ "ສະພາ ຂະຫຍາຍສ່ວນ" ຂອງຝ່າຍພວກທ່ານ. ອັນນັ້ນ ບໍ່ແມ່ນອັນອື່ນໃດ ນອກຈາກກົນອຸບາຍຫວັງກົບບັນດາກຳລັງຮັກຊາດລາວ ດ້ານການເມືອງ ເຊິ່ງພວກທ່ານ ປະຕິບັດບໍ່ໄດ້ ດ້ວຍການໃຊ້ກຳລັງທະຫານ ໃນບໍ່ຈັກວ່າ ເທົ່າໃດປີມານີ້. ພວກຂ້າພະເຈົ້າ ຢືນຢັນອີກເທື່ອໜຶ່ງວ່າ ບັນດາຂໍ້ສະເໜີ ຂອງພວກທ່ານດັ່ງກ່າວນັ້ນ, ມັນເປັນພຽງແຕ່ ຄວາມໃຝ່ຝັນ, ບໍ່ຕິດຈິງ ແລະ ບໍ່ມີການສ້າງ ເຊິ່ງໄດ້ຖືກປະຕິເສດ ມາແຕ່ດົນແລ້ວ.

<u>ດ້ານສາມ:</u> <u>ຝ່າຍພວກທ່ານ ມີກົນອຸບາຍ ແຍກບັນຫາການທະຫານ ອອກຈາກບັນຫາການເມືອງ ໃນການແກ້ໄຂບັນຫາລາວ.</u>

ໃນບົດຄຳເຫັນຕ່າງໆ ຂອງພວກທ່ານ ທີ່ຜ່ານມານັ້ນ, ພວກທ່ານ ໄດ້ເນັ້ນວ່າ ຕ້ອງເປີກສາຫາລື ແລະ ແກ້ໄຂບັນຫາຢຸດຍິງ ແລະ ບາງບັນຫາ ທາງດ້ານການທະຫານກ່ອນ ແລ້ວຈຶ່ງເປີກສາບັນດາບັນຫາ ການເມືອງຕາມຫລັງ. ພວກຂ້າພະເຈົ້າ ຖືວ່າ ວິທີແກ້ໄຂແບບນັ້ນ ລ້ວນແຕ່ບໍ່ຖືກກັບຕົວຈິງ, ບໍ່ມີພື້ນຖານ, ເຮັດແນວນັ້ນ ພຽງແຕ່ ເປັນການແກ້ໄຂທາງປາຍ, ບໍ່ແມ່ນການແກ້ໄຂ ກົກຮາກຂອງມັນ. ການທີ່ພວກທ່ານ ເຮັດໄປແນວນັ້ນ ສະແດງໃຫ້ເຫັນວ່າ ພວກທ່ານ ບໍ່ມີຄວາມຈິງໃຈ ໃນການແກ້ໄຂ ບັນຫາລາວ, ພຽງແຕ່ ຢາກຍາດເວລາ ເພີ່ມທະວີ ປັບປຸງກຳລັງ, ໂດຍສະເພາະແມ່ນກຳລັງທະຫານ ເພື່ອສືບຕໍ່ ຕ້ານກັບ ບັນດາກຳລັງຮັກຊາດລາວ, ອັນເປັນການຂັດຂວາງ ແລະ ໜ່ວງໜ່ຽວ ການສ້າງຄວາມຖືກຕ້ອງ ປອງດອງ ແລະ ເອກະພາບແຫ່ງຊາດ, ແລະ ເປັນການເຮັດໃຫ້ ສະຖານະການ ບ້ານເມືອງ ກັບເຂົ້າສູ່ ຄວາມສະຫງົບນັ້ນ ຍືດເຍື້ອໄປຕື່ມ.

ຫລັກຫມັ້ນ ຂອງພວກທ່ານ ທີ່ວາງອອກ ໃນສາມດ້ານ ດັ່ງກ່າວນັ້ນ ໄດ້ກໍ່ອຸປະສັກ ອັນໃຫຍ່ຫລວງທີ່ສຸດ ໃຫ້ແກ່ການແກ້ໄຂ ບັນຫາລາວ, ເຮັດໃຫ້ການ ເຈລະຈາ ບໍ່ຄືບຫນ້າໄປໄດ້. ເພື່ອເຮັດໃຫ້ການ ເຈລະຈາ ຄືບຫນ້າ ກ້າວໄປເຖິງ ຜົນສຳເລັດ ຕົວຈິງໄດ້ນັ້ນ, ຝ່າຍພວກທ່ານ ຈຶ່ງປະລະ ຫລັກຫມັ້ນ ອັນດື້ດ້ານ ດັ່ງກ່າວນັ້ນເສັຽ, ແລ້ວພ້ອມກັບ ພວກຂ້າພະເຈົ້າ ດຳເນີນການ ເຈລະຈາ ປຶກສາຫາລືກັນ ດ້ວຍເຈດຕະນາດີ, ມີການກໍ່ສ້າງ ແລະຖືກແທດກັບຕົວຈິງ. ເພື່ອເຮັດໃຫ້ ຂໍ້ສະເຫນີຕ່າງໆ ຂອງພວກຂ້າພະເຈົ້າ ທີ່ໄດ້ນຳອອກ ໃນວາລະປະຊຸມ ເທື່ອທີ ໘ ແລ້ວນີ້ ກະຈ່າງແຈ້ງຂຶ້ນ, ຝ່າຍບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ ເຫັນມີຄວາມຈຳເປັນ ຕ້ອງເນັ້ນຕື່ມ ບາງຈຸດ ດັ່ງຕໍ່ໄປນີ້:

໑/. ບັນຫາລາວ ຕ້ອງໄດ້ຮັບການແກ້ໄຂ ບົນພື້ນຖານ ສັນຍາເຈນີວປີ ໑໙໖໒ ກ່ຽວກັບ ລາວ ແລະ ສະພາບການຕົວຈິງຢູ່ລາວ ໃນປະຈຸບັນ.

ຫລັກຫມັ້ນ ຂອງພວກຂ້າພະເຈົ້າ ດັ່ງກ່າວນັ້ນ ໄດ້ອະທິບາຍ ມາຫລາຍເທື່ອແລ້ວ ໃນວາລະປະຊຸມ ຄັ້ງຕ່າງໆ, ແຕ່ ຍ້ອນພວກເຮົາ ມີທັດສະນະບໍ່ຄືກັນ ກ່ຽວກັບບັນຫານີ້, ສະນັ້ນ ຈຶ່ງຍັງບໍ່ທັນແກ້ໄຂບັນຫາ ທີ່ໄດ້ວາງອອກ ໃຫ້ຖືກຕ້ອງໄດ້.

ພວກຂ້າພະເຈົ້າ ຖືວ່າ ຈຸດພິເສດສີ່ຢ່າງ ທີ່ພວກຂ້າພະເຈົ້າ ໄດ້ອະທິບາຍ ໃນວາລະປະຊຸມ ເທື່ອທີ ໘ ນັ້ນ, ໄດ້ສ່ອງແສງ ເຖິງສະພາບການ ຕົວຈິງຢູ່ລາວ ໃນປະຈຸບັນ ຢ່າງຖືກຕ້ອງທີ່ສຸດ. ໃນຈຸດພິເສດສີ່ຢ່າງນັ້ນ, ບັນຫາ ອາເມລິກາ ຮຸກຮານລາວ ແມ່ນ ຈຸດພິເສດ ພື້ນຖານທີ່ສຸດ. ເພາະສະນັ້ນ ຖ້າຢາກແກ້ໄຂ ບັນຫາລາວ ໃຫ້ຖືກຕ້ອງ ແລະ ເດັດຂາດນັ້ນ, ມັນບໍ່ສະເພາະແຕ່ ອາເມລິກາ ຕ້ອງຢຸດເຊົາ ການຖິ້ມລະເບີດ ແລະທຸກການເຄື່ອນໄຫວດ້ານການທະຫານຢູ່ລາວໃນປະຈຸບັນເທົ່ານັ້ນ, ແຕ່ຍັງຕ້ອງຢຸດເຊົາທຸກການຕິດພັນ ທາງທະຫານຂອງ ອາເມລິກາຢູ່ລາວໃນອານາຄົດຢ່າງ ສະຫລອດການອີກດ້ວຍ, ຕ້ອງເຄົາລົບ ເອກະລາດ, ອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງລາວ ກໍຄືສິດຕັດສິນດ້ວຍຕົນເອງ ຂອງປະຊາຊົນລາວ.

ຍ້ອນການຮຸກຮານ ຂອງອາເມລິການັ້ນເອງ ຈຶ່ງມີການຕໍ່ສູ້ກູ້ຊາດ ຕ້ານອາເມລິກາ ຂອງປະຊາຊົນລາວ. ຈາກການຕໍ່ສູ້ດັ່ງກ່າວນັ້ນ, ມັນໄດ້ເຮັດໃຫ້ລາວເຮົາເກີດມີສອງເຂດ, ມີສອງອຳນາດການປົກຄອງ, ສາມກຳລັງການເມືອງ ແລະ ກຳລັງປະກອບອາວຸດຕ່າງກັນ. ການປະກົດຕົວຂອງສອງເຂດດັ່ງກ່າວນັ້ນ ແມ່ນຕົວຈິງອັນຫນຶ່ງໃນສັງຄົມ ແລະ ປະຫວັດສາດທາງພາວະວິໄສ ເຊິ່ງບໍ່ມີໃຜຈະປະຕິເສດໄດ້. ການຮັບຮູ້ຄວາມຈິງດັ່ງກ່າວນັ້ນ ແມ່ນມີຄວາມຈຳເປັນ ແລະ ບໍ່ເປັນການຢືນຕໍ່ລັດຖະທຳມະນູນ ແລະ ຄວາມເປັນອັນຫນຶ່ງອັນດຽວຂອງປະເທດຊາດຄືດັ່ງ ຄຳໂຄສະນາບິດເບືອນຂອງຝ່າຍພວກທ່ານ. ການສ້າງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ແມ່ນເລີ່ມມາຈາກຄວາມຈິງດັ່ງກ່າວ, ສະນັ້ນຈຳຕ້ອງສ້າງບັນດາພື້ນຖານ ດ້ານການເມືອງ ອັນຈຳເປັນທີ່ເຄີຍມີມາ ເພື່ອເຮັດໃຫ້ປະເທດຊາດເປັນເອກະພາບ ໂດຍຜ່ານການເຈລະຈາຢ່າງສະເຫມີພາບ ລະຫວ່າງສອງຝ່າຍ, ສອງເຂດ ໂດຍບໍ່ໃຫ້ຝ່າຍໃດກືນຝ່າຍໃດ ຫຼື ບີບບັງຄັບຝ່າຍໃດ.

ຍ້ອນອາເມລິກາ ແລະ ລູກມືຂວາຈັດໄດ້ທຳລາຍ ແລະ ໂຄ່ນລົ້ມລັດຖະບານປະສົມແຫ່ງຊາດຊົ່ວຄາວ ທີ່ສ້າງຕັ້ງຂຶ້ນໃນປີ ໑໙໖໒ ຢ່າງສົບເຊີງນັ້ນ, ຢູ່ໃນສອງເຂດຈຶ່ງໄດ້ປະກົດມີສອງອຳ

ນາດການປົກຄອງຕ່າງກັນ. ເພາະສະນັ້ນຢູ່ລາວໃນປະຈຸບັນ ຈຶ່ງບໍ່ມີລັດຖະບານໃດທີ່ຖືກຕ້ອງຕາມລັດຖະທຳມະນູນ, ຖືກຕ້ອງຕາມກົດໝາຍ ແລະ ຕາງໜ້າໃຫ້ທົ່ວປະເທດໄດ້. ອັນທີ່ພວກທ່ານເອີ້ນວ່າ ລັດຖະບານ ແລະ ສະພາທີ່ຖືກຕ້ອງຕາມກົດໝາຍ ລັດຖະທຳມະນູນນັ້ນ, ມັນພຽງແຕ່ເປັນອົງການກຳອຳນາດ ສະເພາະແຕ່ຂອງຝ່າຍວຽງຈັນ ແລະ ມີຄຸນຄ່າ ສະເພາະແຕ່ໃນເຂດທີ່ຝ່າຍພວກທ່ານກວດກາເທົ່ານັ້ນ. ສະນັ້ນ ໃນເວລາລໍຖ້າ ດຳເນີນການເລືອກຕັ້ງຢ່າງມີເສລີພາບ ປະຊາທິປະໄຕແທ້ຈິງ ເພື່ອເລືອກຕັ້ງລັດຖະສະພາ ແລະ ລັດຖະບານປະສົມແຫ່ງຊາດເປັນທາງການນັ້ນ, ທັງສອງຝ່າຍຕ້ອງເຈລະຈາກັນ ຈັດຕັ້ງສະພາປະສົມການເມືອງ ແລະ ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃໝ່ ໃນທັນທີ, ບໍ່ອາດຈະນິ່ງນັ່ງຄັ້ນ ໃຫ້ພວກຂ້າພະເຈົ້າຮັບເອົາ ແລະ ເຂົ້າສ່ວນໃນອຳນາດການປົກຄອງຂອງພວກທ່ານຢ່າງເດັດຂາດ.

໒/. <u>ວິທີການແກ້ໄຂບັນຫາລາວ ແມ່ນວິທີການແກ້ໄຂກວມລວມ, ລວມທັງດ້ານທະຫານ ແລະ ການເມືອງໄປພ້ອມກັນ.</u>

ບັນຫາລາວມີສອງດ້ານພື້ນຖານຄື: ບັນຫາອານາເຂດຈັກກະພັດລາວ ແລະ ບັນຫາພາຍໃນຂອງລາວ, ບັນຫາການທະຫານ ແລະ ບັນຫາການເມືອງຂອງລາວ. ສອງດ້ານດັ່ງກ່າວ ມີການພົວພັນກັນຢ່າງສະໜິດແໜ້ນ, ແກ້ໄຂດ້ານໜຶ່ງ ແມ່ນສ້າງເງື່ອນໄຂພື້ນຖານໃນການ ອັນຈຳເປັນໃຫ້ແກ່ການແກ້ໄຂດ້ານທີ່ສອງ, ແກ້ໄຂດ້ານທີ່ສອງໄດ້ດີ ຈຶ່ງຈະຮັບປະກັນໃຫ້ແກ່ ການແກ້ໄຂດ້ານທີ່ໜຶ່ງຢ່າງເດັດຂາດ. ສະນັ້ນບໍ່ວ່າ ແຕ່ວິທີການແກ້ໄຂໃດໆ ກ່ຽວກັບລາວກໍລ້ວນແຕ່ຕ້ອງແກ້ໄຂໄປພ້ອມໆກັນ ທັງສອງດ້ານ ດ້ານທະຫານ ແລະ ການເມືອງ. ໃນເວລາທີ່ພວກເຮົາຕົກລົງກັນໄດ້ ກ່ຽວກັບ ບັນຫາຢຸດຊົງສົງຄາມ ຟື້ນຟູສັນຕິພາບ, ພວກເຮົາກໍຕ້ອງຈັດຕັ້ງ ອົງການການເມືອງໃໝ່ຂຶ້ນທັນທີ ເພື່ອປະຕິບັດບັນດາຂໍ້ທີ່ໄດ້ເຊັນກັນ, ຮັບປະກັນການປົກປັກຮັກສາ ສັນຕິພາບຢ່າງຍາວນານ, ບໍລິຫານວຽກງານຂອງປະເທດ ນັບແຕ່ເວລາສັນຕິພາບກັບຄືນມາ ຈົນເຖິງເວລາມີການເລືອກຕັ້ງລັດຖະສະພາ ແລະ ຈັດຕັ້ງລັດຖະບານປະສົມແຫ່ງຊາດເປັນທາງການຂຶ້ນໄດ້. ສະພາປະສົມການເມືອງທີ່ແມ່ນອົງການສູງສຸດ ແຫ່ງຄວາມປອງດອງຊາດ, ຢ່າງນັ້ນນັ້ນ ຕ້ອງໄດ້ຮັບການຈັດຕັ້ງຂຶ້ນ ແລະ ເລີ່ມຕົ້ນເຄື່ອນໄຫວໃນທັນທີ ພາຍຫຼັງທີ່ການຢຸດຍິງມີຄວາມສັກສິດ ເພື່ອປະຕິບັດບັນດາຂໍ້ຄວາມທີ່ໄດ້ເຊັນກັນ, ສືບຕໍ່ປຶກສາຫາລື ການຈັດຕັ້ງລັດຖະບານປະສົມແຫ່ງຊາດຊຸດໃໝ່ ໃຫ້ໄວເທົ່າໃດຍິ່ງດີເທົ່ານັ້ນ ແລະ ແກ້ໄຂບັນຫາຕ່າງໆທີ່ພົວພັນ ແລະ ຄົງຄ້າງ ລະຫວ່າງສອງຝ່າຍ. ບໍ່ຄວນ ແລະ ບໍ່ອາດຈະແຍກບັນຫາທະຫານອອກນອກ ບັນຫາການເມືອງຢ່າງເດັດຂາດ.

ພວກຂ້າພະເຈົ້າ ຫວັງວ່າຝ່າຍພວກທ່ານຈະຄົ້ນຄວ້າລະອຽດ ກ່ຽວກັບຄຳເຫັນຕ່າງໆ ຂອງພວກຂ້າພະເຈົ້າ ແລະ ມີການ ຕອບສະໜອງຢ່າງຕັ້ງໜ້າ ເພື່ອເປີດຊ່ອງທາງໃຫ້ແກ່ການເຈລະຈາຂອງພວກເຮົາ ມີການຄືບໜ້າໄປໂດຍດີ.

---

11ème séance

26.12.72
26 DEC 1972

# ບົດປະກອບຄຳເຫັນ

ຂອງ ທ່ານ ພູນ ສີປະເສີດ, ຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະປະຊຸມ ເທື່ອທີ ໑໑, (ໃນວັນທີ ໒໖/໑໒/໑໙໗໒).

---

ບັນດາທ່ານ,

ມາຮອດນັ້ນ, ກອງປະຊຸມ ເຈລະຈາ ລະຫວ່າງ ຄະນະຜູ້ແທນທັງສອງ ຂອງພວກເຮົາ ໄດ້ດຳເນີນ ມາເປັນວາລະທີ ໑໑, ແລະ ກິນເວລາ ສອງເດືອນກວ່າແລ້ວ. ຕະຫລອດໄລຍະດັ່ງກ່າວ, ພວກທ່ານ ບໍ່ໄດ້ຕອບສະໜອງ ຄຳສະເໜີ ແລະ ຮ່າງ ຂໍ້ຕົກລົງ ທີ່ເປັນໄປດ້ວຍ ເຈດຕະນາດີ ຂອງບັນດາກຳລັງຮັກຊາດ ຢ່າງຖືກຕ້ອງ, ຍິ່ງກວ່ານັ້ນ, ພວກທ່ານ ຍັງບໍ່ຢຸດເຊົາ ໃນການໃຊ້ກົນອຸບາຍ ອັນເລິກແລບ ປີ້ນໄປປີ້ນມາ ກໍ່ອຸປະສັກ ເພື່ອໜ່ວງໜ່ຽວ ກອງປະຊຸມ ແລະ ເຮັດໃຫ້ການແກ້ໄຂ ບັນຫາຕ່າງໆ ຂອງຊາດ ຊັກຊ້າໄປ.

ທ່າທີ ອັນດື້ດ້ານ ຂອງພວກທ່ານ ຢູ່ໃນກອງປະຊຸມ, ກໍ່ຄື ການກະທຳ ລ່ຽງໄພ ທາງການທະຫານ ຂອງພວກທ່ານ ຕໍ່ເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ ຕະຫລອດໄລຍະ ໒ ເດືອນ ທີ່ຜ່ານມາ ໄດ້ສະແດງໃຫ້ເຫັນ ຢ່າງຈະແຈ້ງ ເຖິງການຂາດເຈດຕະນາດີ ຂອງຝ່າຍພວກທ່ານ. ດັ່ງແຕ່ກອງປະຊຸມ ໄດ້ເລີ່ມຕົ້ນ ມາເຖິງປະຈຸບັນ, ບັນຫາຕ່າງໆ ກ່ຽວກັບ ລະບຽບການ ທີ່ທັງສອງຝ່າຍ ຍັງບໍ່ທັນໄດ້ ຕົກລົງກັນ, ເຊັ່ນ ພວກທ່ານ ອຸປະໂລກ ຕົງຕົນເອງ ເປັນ "ຄະນະຜູ້ແທນ ລັດຖະບານປະສົມ ຊົ່ວຄາວສາມຝ່າຍ" ທີ່ໄດ້ຖືກໂຄ່ນລົ້ມໄປແລ້ວ, ເອົາທຸງ ມາປັກໄວ້ ໃນຫ້ອງປະຊຸມ, ເອົາຜູ້ສັງເກດການ ຂອງອັນທີ່ເອີ້ນວ່າ "ສະພາ" ຂອງຝ່າຍ ວຽງຈັນ ເຂົ້າມາຮ່ວມ ກອງປະຊຸມ ຕາມລຳພັງໃຈ ຂອງພວກທ່ານ ແຕ່ຝ່າຍດຽວ, ໂດຍວາງທ່າທີ ເປັນເຈົ້າໃຫຍ່ ນາຍໂຕນັ້ນ, ແມ່ນເປັນການລະເມີດ ຫລັກການສະເໝີພາບ ແລະ ຫລັກການຕົກລົງກັນ ລະຫວ່າງ ຝ່າຍທີ່ກ່ຽວຂ້ອງ. ທ່າທີ ແລະ ການກະທຳ ຂອງພວກທ່ານ ດັ່ງກ່າວນັ້ນ ໄດ້ກໍ່ໃຫ້ມີ ບັນຍາກາດ ອັນບໍ່ມີດີ ແລະ ເປັນອຸປະສັກ ໃຫ້ແກ່ກອງປະຊຸມ ນັບແຕ່ຕົ້ນ ຈົນເຖິງປະຈຸບັນ.

ພວກທ່ານ ມີເຈດຈຳນົງ ຈະໜີບ ພວກຂ້າພະເຈົ້າ ໃຫ້ຮັບຮູ້ ອຳນາດການປົກຄອງ ຂອງຝ່າຍວຽງຈັນ ປະຈຸບັນ ວ່າເປັນ ລັດຖະບານປະສົມ ຊົ່ວຄາວແຫ່ງຊາດສາມຝ່າຍ ຫລື ເປັນ ລັດຖະບານ ຂອງໝົດປະເທດ, ກໍ່ຄື ໃຫ້ຮັບຮູ້ "ສະພາ" ຂອງຝ່າຍວຽງຈັນ ເປັນອົງການ ຖືກຕ້ອງຕາມກົດໝາຍ, ໂດຍຫວັງຈະເຮັດໃຫ້ ກອງປະຊຸມ ເຈລະຈານີ້ ເປັນກອງປະຊຸມ ທີ່ບໍ່ສະເໝີພາບ ລະຫວ່າງ ອັນທີ່ເອີ້ນວ່າ ລັດຖະບານ ກັບອີກຝ່າຍໜຶ່ງ. ມັນເປັນອັນຈະແຈ້ງວ່າ, ພວກທ່ານ ໄດ້ສວຍໃຊ້ ບັນຫາ ລະບຽບການ ເພື່ອຮັບໃຊ້ ເຈດຈຳນົງ ອັນມືດມົນດັ່ງກ່າວ ຂອງພວກທ່ານ. ສະນັ້ນ, ພວກຂ້າພະເຈົ້າ, ບໍ່ພຽງແຕ່ ໄດ້ປະຕິເສດ ແລະ ຄັດຄ້ານ ການກະທຳ ອັນຜິດພາດ ຕາມລຳພັງໃຈ ຂອງພວກທ່ານເທົ່ານັ້ນ, ຕົ້ນຕໍ ພວກຂ້າພະເຈົ້າ ແມ່ນໄດ້ປະຕິເສດ ແລະ ຄັດຄ້ານ ເລ່ຫລ່ຽມ ອັນເລິກແລບ ດັ່ງກ່າວ ຂອງພວກທ່ານ.

ຍ້ອນ ທ່າທີຄັດຄ້ານ ອັນເດັດຂາດ ຂອງພວກຂ້າພະເຈົ້າ ແລະ ສຽງວິພາກວິຈານ ອັນກວ້າງຂວາງ ຂອງພາຍໃນ ແລະ ຕ່າງປະເທດ, ພວກທ່ານ ຈຳຕ້ອງຖອນ "ຜູ້ສັງເກດການ", ຖອນເຄື່ອງອັດສຽງ ອອກຈາກກອງປະຊຸມ, ຍອມໃຫ້ມີການ ຜັດປ່ຽນກັນ ອ່ານບົດປະກອບຄຳເຫັນ ໃນກອງປະຊຸມ, ແຕ່

ພວກທ່ານ ຍັງດື້ດ້ານ ຮັກສາຊື່ "ຄະນະຜູ້ແທນ ຂອງລັດຖະບານ", ຍັງສືບຕໍ່ ປັກທຸງ ໃນຫ້ອງປະຊຸມຢູ່.

ສະເພາະ ຊື່ ແລະ ຖານະ ຂອງຄະນະຜູ້ແທນ ພວກທ່ານນັ້ນ, ພວກທ່ານ ກໍ່ບໍ່ຄວນ ຈະຢືນເອົາ ຊື່ ແລະ ຖານະ ຂອງລັດຖະບານ ທີ່ຖືກລົບຫາຍໄປແລ້ວ ມາບົ່ງເຈລະຈາກັບ ພວກຂ້າພະເຈົ້າ. ບັນດາ ກຳລັງຮັກຊາດ ບໍ່ຮັບຮູ້ ຜູ້ທີ່ໃສ່ຊື່ ຄະນະຜູ້ແທນ ຂອງຕົນເອງວ່າ ເປັນຕົວແທນ ຂອງອັນທີ່ເອີ້ນວ່າ ລັດຖະບານ ດັ່ງກ່າວນັ້ນ ມາບົ່ງເຈລະຈາ ກັບຕົນຢ່າງເດັດຂາດ, ເພາະ ມັນຈະບໍ່ແກ້ໄຂຫຍັງໄດ້. ຖ້າຝ່າຍ ພວກທ່ານຫາກຍັງດື້ດ້ານ ເອົາຊື່ປອມແປງແນວນັ້ນມາ ເຈລະຈາກັບພວກຂ້າພະເຈົ້າຕໍ່ໄປ, ກໍໝາຍຄວາມ ວ່າ ຝ່າຍພວກທ່ານຕັ້ງແກ້ງ ຂັດຂວາງບໍ່ໃຫ້ກອງປະຊຸມ ເຈລະຈາບັນລຸເຖິງ ຜົນສຳເລັດໄດ້. ການກະທຳ ດັ່ງກ່າວນັ້ນ ດັ່ງແມ່ນມີເຈດຕະນາຢາກຫນ່ວງຫນ່ຽວ ການເຈລະຈາ, ສະນັ້ນ ຝ່າຍພວກທ່ານຕ້ອງເປັນຜູ້ ຮັບຜິດຊອບຕໍ່ປະຫວັດສາດ ແລະ ຕໍ່ຊາດ ແຕ່ຝ່າຍດຽວຢ່າງສິ້ນເຊີງ.

ການທີ່ພວກທ່ານເອົາທຸງມາປັກໃສ່ໃນຫ້ອງປະຊຸມ ຕາມລຳພັງໃຈນັ້ນ, ພວກທ່ານໄດ້ອ້າງເຫດ ຜົນອັນບໍ່ຊອບທຳຫຼາຍຢ່າງ, ເຊິ່ງຂັດກັບຫຼັກການທີ່ທັງສອງຝ່າຍຕ້ອງໄດ້ຕົກລົງກັນ ຕາມລະບຽບການ ຂອງ ກອງປະຊຸມ. ພວກທ່ານ ເອົາທຸງມາປັກໃສ່ໃນຫ້ອງປະຊຸມ ຕາມລຳພັງໃຈ ໂດຍອ້າງວ່າ ແມ່ນທຸງ ຊາດນັ້ນ, ແມ່ນມີເລ່ກົນອັນເລິກລັບ ຢາກສວຍໃຊ້ ສິດອຳນາດຂອງທຸງນັ້ນ ຕໍ່ພວກຂ້າພະເຈົ້າ, ນັ້ນແມ່ນ ບໍ່ໄດ້ຢ່າງເດັດຂາດ. ດັ່ງນັ້ນ, ພວກຂ້າພະເຈົ້າຄັດຄ້ານ ການກະທຳຕາມລຳພັງໃຈ ຂອງພວກທ່ານແຕ່ຝ່າຍ ດຽວ, ຄັດຄ້ານກົນອຸບາຍສໍ້ໂກງ ຂອງຝ່າຍພວກທ່ານ ທີ່ເອົາທຸງມາປະດັບປະດາ ເສີມສີ, ເສີມຊີງໃຫ້ຊື່ ແລະ ຖານະອັນບໍ່ຖືກຕ້ອງ ຂອງພວກທ່ານ ທີ່ເອີ້ນຕົນວ່າ ຄະນະຜູ້ແທນ ລັດຖະບານປະສົມຊົ່ວຄາວ ແຫ່ງ ຊາດ, ເພື່ອຢາກບີບບັງຄັບໃຫ້ພວກຂ້າພະເຈົ້າຮັບຮູ້ ອຳນາດການປົກຄອງ ເຊິ່ງແມ່ນ ຈັກກະພັດອາເມລິ ກາ ເປັນຜູ້ປັ້ນແຕ່ງຂຶ້ນ.

ພວກທ່ານຄວນເຂົ້າໃຈວ່າ ການແກ້ໄຂບັນຫາບ້ານເມືອງນັ້ນແມ່ນການເຈລະຈາ ລະຫວ່າງບັນດາ ຝ່າຍທີ່ກ່ຽວຂ້ອງຢ່າງສະເໝີພາບ, ດັ່ງນັ້ນ ຝ່າຍດຽງຈັບ ຕ້ອງປະລະທ່າທີເອົາປຽບເອົາລັດກັນ ແລະ ເລ່ຫຼ່ຽມສໍ້ໂກງ ດັ່ງກ່າວນັ້ນ ໂດຍທັນທີ. ຖ້າຝ່າຍພວກທ່ານຫາກຍັງຕັ້ງແກ້ງ ເອີ້ນຕົນວ່າ ເປັນ ຄະນະຜູ້ແທນ ລັດຖະບານປະສົມ ຊົ່ວຄາວແຫ່ງຊາດສາມຝ່າຍ ຫລື ລັດຖະບານ ຂອງທີ່ວ ພະລາຊະອານາຈັກ, ແລະ ຍັງ ຄົງປັກທຸງ ໃສ່ໃນຫ້ອງປະຊຸມຕໍ່ໄປນັ້ນ, ກໍ່ແມ່ນພວກທ່ານ ຕັ້ງມີເຈດຕະນາ ຫນ່ວງຫນ່ຽວ ການເຈລະຈາ ແກ້ ໄຂບັນຫາລາວ ໂດຍສັນຕິວິທີ. ດັ່ງນັ້ນ, ພວກທ່ານ ຕ້ອງເປັນຜູ້ຫາບແບກ ຜົນເສຍຫາຍທັງຫມົດ ທີ່ເກີດ ມາຈາກການກະທຳ ຂອງພວກທ່ານ ແຕ່ຝ່າຍດຽວ.

ກ່ຽວກັບເນື້ອໃນ ແກ້ໄຂບັນຫາລາວນັ້ນ, ພວກທ່ານ ໄດ້ຮັບເອົາວິທີການການເມືອງ ໕ ຂໍ້ຂອງ ບັນດາກຳລັງຮັກຊາດ ເປັນພື້ນຖານໃນການປຶກສາຫາລື ແລ້ວກໍ່ຕາມ, ແຕ່ວ່າບໍ່ມີອັນໃດ ທີ່ສະແດງວ່າ ພວກທ່ານຈິງໃຈປຶກສາຫາລືຢ່າງ ຖືກຕ້ອງຕາມ ວິທີການແກ້ໄຂ ໕ ຂໍ້ຂອງພວກຂ້າພະເຈົ້າ; ກົງກັນຂ້າມ, ພວກທ່ານ ຍັງໄດ້ຫຼີກລ່ຽງ ໂດຍໃຊ້ເລ່ຫຼ່ຽມອັນເລິກແລບ, ກ່ຽວໄປວຽນມາ ເພື່ອຫຼອກລວງ ແລະ ຕ້ານ ກັບຂໍ້ສະເຫນີ ອັນສົມເຫດສົມຜົນ ຂອງພວກຂ້າພະເຈົ້າ ຕະຫຼອດມາ.

ຫຼັງຈາກພວກທ່ານໄດ້ສະເຫນີ ໗ ຂໍ້ອັນມີເນື້ອໃນ ກົງກັນຂ້າມກັບ ໕ ຂໍ້ ຂອງພວກຂ້າພະເຈົ້າ ແລະ ໄດ້ຖືກທາງສຽງວິພາກວິຈານ ໂຈມຕີ ຢ່າງຫນັກຫນ່ວງແລ້ວ, ພວກທ່ານຊ້ຳພັດກັບປັ້ນມາ ສະເຫນີ ໕ ຂໍ້ໃຫມ່ອີກ, ເຊິ່ງເນື້ອແທ້ ແມ່ນປະຕິເສດ ໕ ຂໍ້ ຂອງພວກຂ້າພະເຈົ້າ, ອັນນັ້ນແມ່ນ ແນໃສ່ຫຼອກ

ລອງທາງສຽງວິພາກວິຈານ ພາຍໃນ ແລະ ຕ່າງປະເທດ. ຄວາມຈິງ ການທີ່ພວກທ່ານໄດ້ສະເໜີຮັບ "ລັດຖະບານປັບປຸງໃໝ່" ແລະ "ສະພາຂະໜາດລົດ" ນັ້ນ, ແມ່ນເປັນການປະຕິເສດຂໍ້ສະເໜີ ກ່ຽວກັບການຈັດຕັ້ງສະພາປະສົມການເມືອງ ແລະ ລັດຖະບານປະສົມຊົ່ວຄາວ ແຫ່ງຊາດຊຸດໃໝ່ ຂອງພວກຂ້າພະເຈົ້າ. ຄືດັ່ງທຸກຄົນໄດ້ຮູ້ແລ້ວ, ຮ່າງຂໍ້ຕົກລົງຂອງບັນດາກຳລັງຮັກຊາດ ທີ່ໄດ້ສະເໜີອອກໃນວາລະປະຊຸມຄັ້ງທີ ໙ ນັ້ນແມ່ນສົມເຫດສົມຜົນ. ແຕ່ມາໃນວາລະປະຊຸມຄັ້ງທີ ໑໐, ພວກທ່ານຊ້ຳພັດໄດ້ສະເໜີຮ່າງຂໍ້ຕົກລົງອອກ, ອັນເປັນການປະຕິເສດຮ່າງຂໍ້ຕົກລົງຂອງພວກຂ້າພະເຈົ້າໂດຍກົງ. ຮ່າງຂໍ້ຕົກລົງຂອງພວກທ່ານນັ້ນ ແມ່ນໄດ້ກ່າຍເອົາຄຳສັບ ແລະ ຖ້ອຍສຳນວນ ຂອງຮ່າງ ຂໍ້ຕົກລົງ ຂອງບັນດາກຳລັງຮັກຊາດ, ແຕ່ດ້ານເນື້ອໃນພື້ນຖານແລ້ວ ແມ່ນພວກທ່ານ ຍັງຮັກສາ ຫຼັກໝັ້ນອັນດື້ດ້ານ ທີ່ແນໃສ່ບີບບັງຄັບໃຫ້ ບັນດາກຳລັງຮັກຊາດ ເຂົ້າໃນວົງການ ການເມືອງທີ່ອາເມລິກາປັ້ນແຕ່ງຂຶ້ນ ເພື່ອຈະກືນບັນດາກຳລັງຮັກຊາດ ທາງການເມືອງ ໃນຂັ້ນຕໍ່ໄປ. ການທີ່ພວກທ່ານ ຢາກເອົາກົງຈັກປົກຄອງ ຂອງຝ່າຍວຽງຈັນ ປະຈຸບັນເຂົ້າຢູ່ໃນ ວິທີການແກ້ໄຂ ບັນຫາລາວ ໃນເທື່ອນີ້, ແມ່ນມີກົນອຸບາຍ ເພື່ອຮັກສາເຄື່ອງມື ລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ຢູ່ໃນປະເທດເຮົາ. ຍ້ອນແນວນັ້ນ, ພວກທ່ານ ຈຶ່ງຊຸຊີ ກ່າວຫາ ຮັກສາຊື່ລັດຖະບານປະສົມ ແລະ ວາງທ່າທີ ບໍ່ສຸພາບຮຽບຮ້ອຍ ແລະ ທ່າທີ ບໍ່ສະເໝີພາບ ຢູ່ກອງປະຊຸມ ຕະຫຼອດມາ.

ໂດຍມີເຈດຕະນາ ຢາກເຈລະຈາ ໃນທ່າແຮງ, ພວກທ່ານ ຈຶ່ງເພີ່ມທະວີ ການເຄື່ອນໄຫວທາງການທະຫານຢ່າງເນື່ອງນິດ ລຽນຕິດ, ເປັນຕົ້ນ, ໃນ ໖ ເດືອນຜ່ານມານີ້, ຈັກກະພັດອາເມລິກາ ແລະ ລູກມື ໄດ້ອອກແຮງ ເຕົ້າໂຮມເພີ່ມກຳລັງ ຊຸກຍູ້ການເຄື່ອນໄຫວ ບຸກໂຈມຕີບຽດເບືອດ ເຂດກວດກາ ຂອງບັນດາກຳລັງຮັກຊາດ ຢ່າງຂະຫຍາຍໃຫຍ່ຢູ່ຫຼາຍບ່ອນ, ໂດຍມີການເພີ່ມທະວີການຄຸ້ມກັນ ຢ່າງຮ້າຍແຮງ ຂອງກຳລັງທັບອາກາດ ອາເມລິກາ ເຊິ່ງຮວມມີ ຍົນຍຸດທະສາດ ເບ-໕໒ ແລະ ເບ-໖໖.

ນັບແຕ່ເສັ້ນທາງໄປ ສະຫະລັດອາເມລິກາ ຫວ່າງແລ້ວນີ້, ສະເດັດເຈົ້າ ສຸວັນນະພູມາ ໄດ້ແວະບາງກອກ ແລະ ໄດ້ປຶກສາຫາລືທາງລັບ ກັບພວກ ຖະໜອມ-ປະພາດ ເພື່ອ ນຳເອົາກອງທະຫານປະຈຳການ ຂອງໄທຫລາຍກອງພັນ ເຂົ້າມາລາວຕື່ມອີກ. ໃນໂອກາດ ໄປສະຫະລັດອາເມລິກາເທື່ອນີ້, ສະເດັດເຈົ້າ ສຸວັນນະພູມາ ໄດ້ຂໍການຊ່ວຍເຫຼືອ ທາງທະຫານ ຈາກອາເມລິກາຕື່ມ, ແລະ ໃນນາງນີ້ ເພິ່ນເອງ ກໍໄດ້ເປັນຜູ້ເປີດເຜີຍ ຕໍ່ໜັງສືພິມວ່າ ອາເມລິກາ ໄດ້ໃຫ້ຄຳໝັ້ນສັນຍາ ຈະສືບຕໍ່ ໃຫ້ການຊ່ວຍເຫຼືອແກ່ລາວ, ແລະ ເພິ່ນ ຍັງໄດ້ເວົ້າ ຢ່າງບໍ່ປິດບັງວ່າ, ຖ້າຍັງບໍ່ທັນມີການ ຢຸດຍິງຢູ່ລາວ, ອາເມລິກາ ຍັງຈະຖິ້ມລະເບີດ ໃສ່ລາວຕໍ່ໄປອີກ.

ຮ້າຍແຮງ ໄປກວ່ານັ້ນ, ໃນຂະນະທີ່ ຈັກກະພັດອາເມລິກາ ບໍ່ຍອມລົງນາມ ໃນສັນຍາສະຫງົບເສິກ ກ່ຽວກັບຫວຽດນາມ, ເພີ່ມທະວີສົງຄາມຮຸກຮານ ຕ້ານກັບ ປະເທດສາທາລະນະລັດ ປະຊາທິປະໄຕຫວຽດນາມ ແລະ ໃນທົ່ວອິນດູຈີນ ຢ່າງບ້າອາດເປີດເຜີຍນັ້ນ, ໃນວັນທີ ໑໐/໑໑/໗໒ ນີ້, ນັກຂຽນຈອນກະຫາຍສົງຄາມ ກໍໄດ້ສົ່ງ ນາຍພົນ ແຮກ ມາວຽງຈັນ ຢ່າງຮີບດ່ວນ, ອັນນັ້ນ ຕັ້ງແມ່ນມາຊຸກຍູ້ ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ ໃຫ້ຮ້າຍແຮງຂຶ້ນ. ພ້ອມກັນນັ້ນ, ໜັງສືພິມ ບາງສະບັບທີ່ຈຳໜ່າຍ ຢູ່ວຽງຈັນ ເມື່ອສອງສາມມື້ມານີ້ ກໍໄດ້ຮ້ອງໂຮວ່າ ຫວຽດນາມເໜືອ ອາດຈະບຸກໂຈມຕີລາວ, ການປ່າວຮ້ອງແນວນີ້ ເປັນການປົກປິດໂທດກຳ ແລະ ສ້າງເງື່ອນໄຂ ໃຫ້ຈັກກະພັດອາເມລິກາ ແລະ ລູກມື

ເພີ່ມທະວີສົງຄາມ ຢູ່ລາວ ສືບຕໍ່ ຕາມແຜນການ ຂອງພວກເຂົາ.

ສະພາບການທັງໝົດ ດັ່ງກ່າວຂ້າງເທິງນີ້ ໄດ້ພິສູດຢັ້ງຢືນໃຫ້ເຫັນວ່າ ອາເມລິກາ ແລະ ຝ່າຍພວກທ່ານ ຍັງຄົງມີແນວຄິດທາງທະຫານ ແລະ ຮຸກຮານສົງຄາມ, ຍັງບໍ່ທັນຈິງໃຈ ຢາກແກ້ໄຂ ບັນຫາລາວ ໂດຍສັນຕິ ແຕ່ປະການໃດ. ພວກທ່ານ ຍັງພວມປະຕິບັດ ຕາມແຜນການ ທີ່ໄດ້ຄິດໄລ່ໄວ້ລ່ວງໜ້າ, ແນໃສ່ໜ່ວງໜ່ຽວ ກອງປະຊຸມ ແກ້ໄຂບັນຫາຂອງຊາດ ໃນປະຈຸບັນ ໃຫ້ຊັກຊ້າໄປ.

ເພື່ອຖົມຄວາມຮັບຜິດຊອບ ໃຫ້ຜູ້ອື່ນ, ຫວ່າງແລ້ວນີ້ ສະເດັດເຈົ້າ ສຸວັນນະພູມາ ຊີ້ພັດໄດ້ ຖະແຫລງ ຕໍ່ໜ້າສິ່ງພິມວ່າ: "ຕາບໃດ ບັນຫາຫວຽດນາມ ບໍ່ໄດ້ຮັບການແກ້ໄຂ, ກອງປະຊຸມ ເຈລະຈາ ຢູ່ລາວ ບໍ່ມີຫວັງ ທີ່ຈະໄດ້ຮັບຜົນ, ຍ້ອນວ່າ ປະເທດລາວ ເຮັດຕາມຄຳສັ່ງ ຂອງພາກເໜືອຫວຽດນາມ, ມັນສະແດງອອກຢູ່ບ່ອນວ່າ ຕົວສະເໜີ ສັນຕິພາບ ຂອງພວກເຂົາ ຄ້າຍຄືກັບຂອງ ຮ່າໂນ້ຍ". ອັນນີ້ສະແດງໃຫ້ເຫັນແຈ້ງອີກວ່າ, ຝ່າຍວຽງຈັນ ໄດ້ຂຶ້ນກັບອາເມລິກາໂດຍກົງ, ມັນແມ່ນການ ໃສ່ຮ້າຍປ້າຍສີ ຢ່າງຊື່ໆ ຕໍ່ບັນດາກຳລັງຮັກຊາດ, ມັນແມ່ນການ ບິດເບືອນ ຢ່າງເປີດເຜີຍ ສະພາບການຕົວຈິງ ຂອງລາວ ແລະ ຮ່າງ ຂໍ້ຕົກລົງ ອັນສົມເຫດສົມຜົນ ຂອງພວກຂ້າພະເຈົ້າ, ແລະ ມັນກໍ່ຢືນຢັນຕື່ມອີກວ່າ ພວກທ່ານ ຍັງຮັກສາ ຫລັກໝັ້ນ ອັນດື້ດ້ານ ແລະ ບໍ່ມີຄວາມຈິງໃຈ ຢາກແກ້ໄຂ ບັນຫາຂອງຊາດ, ເຊິ່ງໄດ້ສະແດງອອກຫລາຍດ້ານ ດັ່ງຕໍ່ໄປນີ້:

ເມື່ອເວົ້າເຖິງ ຄຸນຄ່າ ຂອງສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ, ພວກທ່ານ ບໍ່ໄດ້ເວົ້າເຖິງ ບັນຫາຈັກກະພັດອາເມລິກາ ລ່ວງລະເມີດ ສັນຍາດັ່ງກ່າວ, ແລະ ກໍ່ສົງຄາມຮຸກຮານລາວ ໃນ ໑໐ ກວ່າປີມານີ້. ຈາກນັ້ນ ພວກທ່ານຈຶ່ງບໍ່ກ້າເວົ້າອອກຢ່າງຈະແຈ້ງວ່າ ຈັກກະພັດອາເມລິກາ ຕ້ອງຢຸດເຊົາສົງຄາມຮຸກຮານລາວ, ພຽງແຕ່ເວົ້າລວມໆ ວ່າຝ່າຍປະເທດເທົ່ານັ້ນ, ໂດຍສະເພາະພວກທ່ານບໍ່ໄດ້ເວົ້າຢ່າງຈະແຈ້ງວ່າ ໃຫ້ຈັກກະພັດອາເມລິກາ ຢຸດເຊົາການຖິ້ມລະເບີດໃສ່ດິນແດນລາວ, ຢຸດເຊົາທຸກການຕິດພັນ ທາງທະຫານ ຂອງອາເມລິກາ ແລະ ປະເທດບໍລິວານ ຂອງອາເມລິກາ ຢູ່ລາວຢ່າງສິ້ນເຊີງ, ຕະຫລອດການ ແລະ ອື່ນໆ.

ທຸກຄົນລ້ວນແຕ່ໄດ້ຮູ້ ຄວາມຈິງມາແລ້ວວ່າ ຫລັງຈາກສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວໄດ້ເຊັນກັນ ນ້ຳໝຶກຍັງບໍ່ທັນແຫ້ງ, ຈັກກະພັດອາເມລິກາ ກໍ່ໄດ້ລົງມືທຳລາຍ ສັນຍາດັ່ງກ່າວໂດຍທັນທີ. ໄປພ້ອມໆກັບການທຳລາຍ ລັດຖະບານປະສົມ ແຫ່ງຊາດສາມຝ່າຍ, ຈັກກະພັດອາເມລິກາ ກໍ່ໄດ້ໃຊ້ທະຫານຝ່າຍຂວາ ດຳເນີນການບຸກໂຈມຕີ ບັນດາກຳລັງຮັກຊາດ; ການທຳລາຍດັ່ງກ່າວ ຂອງຈັກກະພັດອາເມລິກາ ໄດ້ກ້າວເຖິງຂັ້ນ ໂຄ່ນລົ້ມ ລັດຖະບານປະສົມ ແຫ່ງຊາດສາມຝ່າຍ ໃນເດືອນ ໔/໑໙໖໔, ສົງຄາມພິເສດ ຂອງຈັກກະພັດອາເມລິກາຢູ່ລາວ ເຊິ່ງລວມທັງ ສົງຄາມດ້ວຍທັບອາກາດ ກໍ່ໄດ້ປະກົດຕົວຂຶ້ນ ຢ່າງອ້າງແອ່ງ ແລະ ເປີດເຜີຍ. ແຕ່ນັ້ນມາ ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ ກໍ່ຍິ່ງທະວີຄວາມຮຸນແຮງຂຶ້ນ ເປັນລຳດັບ ເຖິງປະຈຸບັນ.

ແຕ່ປານນັ້ນ, ພວກທ່ານຍັງໄດ້ປະຕິເສດຢ່າງໜ້າດ້ານໆ, ຜູ້ເປັນຕົວການກໍ່ສົງຄາມຮຸກຮານລາວ ແລະ ລະເມີດສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ. ເມື່ອເປັນແນວນັ້ນ, ເຮັດແນວໃດ ຈຶ່ງຈະເຮັດໃຫ້ສົງຄາມ ທີ່ເກີດຂຶ້ນ ໃນປະເທດເຮົາ ສິ້ນສຸດລົງໄດ້. ກົງກັນຂ້າມ, ພວກທ່ານ ຊີ້ພັດປັ້ນມາໃສ່ຮ້າຍປ້າຍສີບັນດາກຳລັງຮັກຊາດ ແລະ ປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ຢ່າງບໍ່ມີມູນຄວາມ

ຈິງ, ອັນນັ້ນ ແມ່ນເພື່ອປົກປິດໂທດກຳຮຸກຮານ ອັນປ່າເຖື່ອນ ຂອງຈັກກະພັດອາເມລິກາຢູ່ລາວ.

ກ່ຽວກັບສະພາບການຕົວຈິງຢູ່ລາວ ໃນປະຈຸບັນ ທີ່ມີສອງເຂດ, ສອງອຳນາດການປົກຄອງ, ສາມກຳລັງການເມືອງ ແລະ ກຳລັງປະກອບອາວຸດນັ້ນ, ພວກຂ້າພະເຈົ້າ ກໍໄດ້ຊີ້ແຈງ ຢ່າງຈະແຈ້ງມາແລ້ວ, ແຕ່ພວກທ່ານ ບໍ່ພຽງແຕ່ບໍ່ຍອມຮັບຮູ້ສະພາບການເປັນຈິງດັ່ງກ່າວເທົ່ານັ້ນ, ພວກທ່ານຊ້ຳພັດປັ້ນມາໃສ່ຮ້າຍປ້າຍສີ ພວກຂ້າພະເຈົ້າວ່າ ຢາກແບ່ງແຍກປະເທດຊາດ, ວ່າລະເມີດລັດຖະທຳມະນູນ ຢ່າງນັ້ນຢ່າງນີ້, ນັ້ນ ແມ່ນຄຳໃສ່ຮ້າຍປ້າຍສີ ແບບຕ່ຳຊ້າທີ່ສຸດ ແລະ ກໍບໍ່ສາມາດຈະຫຼອກລວງໃຜໄດ້.

ດັ່ງທຸກຄົນຮູ້ແລ້ວ, ຍ້ອນການແຊກແຊງ ຮຸກຮານ ຂອງຈັກກະພັດອາເມລິການັ້ນເອງ ບ້ານເມືອງຂອງພວກເຮົາຈຶ່ງມີການແຕກແຍກດັ່ງເປັນຢູ່ໃນປະຈຸບັນນີ້, ຈັກກະພັດອາເມລິກາ ໄດ້ກໍ່ສ້າງກົງຈັກປົກຄອງລູກມື, ລ້ຽງເກືອ ແລະ ບັງຄັບບັນຊາ ກອງທະຫານ ແລະ ອຳນາດການປົກຄອງລູກມື ເພື່ອດຳເນີນລັດທິລ່າເມືອງຂຶ້ນແບບໃໝ່, ໃຊ້ພວກນີ້ ດຳເນີນສົງຄາມພິເສດ ທີ່ຕົ້ນໄປດ້ວຍໂທດກຳ ແລະ ກໍ່ຄວາມວິນາດ ເຂົ້າຫາປະເທດຊາດ ອັນແສນຮັກຂອງພວກເຮົາ. ຕໍ່ໜ້າສະພາບການທີ່ປະເທດຊາດຖືກຮຸກຮານ ຄືແນວນັ້ນ, ມັນເປັນທຳມະດາຢູ່ວ່າ ບັນດາກຳລັງຮັກຊາດ ແລະ ປະຊາຊົນເຮົາ ຈຳເປັນຕ້ອງໄດ້ລຸກຂຶ້ນຕໍ່ສູ້ກູ້ຊາດ ຕ້ານຈັກກະພັດອາເມລິກາຜູ້ຮຸກຮານ ແລະ ລູກມືຢ່າງພິລະອາດຫານ ເພື່ອເອກະລາດ, ອຳນາດອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນ ອັນຄົບຖ້ວນຂອງປະເທດຊາດ. ຈາກການຕໍ່ສູ້ ອັນເປັນທຳ ແລະ ທໍລະຫົດອົດທົນດັ່ງກ່າວນັ້ນ, ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ຈຶ່ງໄດ້ຮັບໄຊຊະນະ ຢ່າງໃຫຍ່ຫຼວງ, ປົດປ່ອຍປະຊາຊົນ ໄດ້ເຄິ່ງໜຶ່ງ ແລະ ດິນແດນ ໔/໕ (ສີ່ສ່ວນຫ້າ) ຂອງໝົດປະເທດ ອອກຈາກແອກຄອບຄອງ ຂອງຈັກກະພັດອາເມລິກາ ແລະລູກມື. ປະຊາຊົນໃນເຂດປົດປ່ອຍ ໄດ້ສ້າງຕັ້ງ ອຳນາດການປົກຄອງ ຂອງຕົນຂຶ້ນ ເພື່ອບໍລິຫານ ວຽກງານ, ສູ້ຮົບ, ຜະລິດຕົນ, ຄຸ້ມຄອງເສດຖະກິດ, ຟື້ນຟູວັດທະນະທຳ, ສ້າງຊີວິດໃໝ່, ແລະ ປົກປັກຮັກສາ ຄວາມສະຫງົບ ໃນທ້ອງຖິ່ນດິນນາຂອງຕົນ.

ສະນັ້ນ ມັນເປັນອັນຈະແຈ້ງແລ້ວວ່າ ການແຊກແຊງ ຮຸກຮານ ຂອງຈັກກະພັດອາເມລິກາ ແມ່ນຕົ້ນເຫດ ທີ່ພາໃຫ້ ປະເທດເຮົາ ເກີດມີສອງເຂດ, ສອງອຳນາດການປົກຄອງ, ສາມກຳລັງການເມືອງ ແລະ ກຳລັງປະກອບອາວຸດ. ນັ້ນແມ່ນຄວາມຈິງ ພາວະວິໄສ, ແມ່ນຈຸດພິເສດ ພື້ນຖານອັນໜຶ່ງ ທີ່ສ່ອງແສງໃຫ້ເຫັນ ເຖິງການປ່ຽນແປງ ອັນໃຫຍ່ຫຼວງ ແລະ ສຳຄັນ ຂອງສະພາບການຢູ່ ປະເທດເຮົາໃນ ໑໐ ກວ່າປີທີ່ຜ່ານມາ. ເມື່ອຄວາມຈິງ ເປັນແນວນັ້ນ, ພວກທ່ານກໍ່ຕ້ອງຮັບຮູ້ມັນ, ແລະ ວາງວິທີການແກ້ໄຂ ໃຫ້ຖືກຕ້ອງ ກັບສະພາບການເປັນຈິງ.

ພວກເຮົາ ຕ້ອງຮັບຮູ້ວ່າ ຄວາມແຕກແຍກ ຢູ່ພາຍໃນປະເທດເຮົາ ຊຶ່ງແມ່ນຈັກກະພັດອາເມລິກາ ເປັນຜູ້ກໍ່ຂຶ້ນ ບໍ່ອາດຈະຊຳລະສະສາງ ຫຼື ຈອດຢາມັນໄດ້ ໃນມື້ໜຶ່ງຍາມດຽວ. ດັ່ງນັ້ນ ບັນດາກຳລັງຮັກຊາດ ຈຶ່ງໄດ້ສະເໜີ ວິທີການແກ້ໄຂບັນຫານີ້. ນັ້ນກໍຄືໃຫ້ຕົວແທນ ຂອງສອງເຂດ, ແລະ ສາມກຳລັງການເມືອງ ພ້ອມກັນປຶກສາຫາລືກັນ ຢ່າງສະເໝີພາບ, ແລ້ວວາງວິທີການແກ້ໄຂ ອັນເປັນທີ່ເພິ່ງພໍໃຈ ຂອງທຸກຄົນທຸກຝ່າຍ, ທັງສອດຄ່ອງກັບ ສິດປະໂຫຍດ ພື້ນຖານ ຂອງປະເທດຊາດ, ຄວາມຖືກຕ້ອງປອງ

ດອງ ແລະ ເອກະພາບແຫ່ງຊາດ. ນັ້ນ ແມ່ນວິທີການ ທີ່ຖືກຕ້ອງ ອັນໜຶ່ງອັນດຽວ ແລະ ສົມເຫດສົມຜົນທີ່ສຸດ.

ກ່ຽວກັບ ການຈັດຕັ້ງ ລັດຖະບານປະສົມ ແຫ່ງຊາດຊຸດໃໝ່, ເຊິ່ງ ພວກຂ້າພະເຈົ້າ ເປັນຜູ້ສະເໜີອອກນັ້ນ, ພວກທ່ານ ກໍໄດ້ຊອກທຸກວິທີ ປະຕິເສດ ຕະຫລອດມາ, ໂດຍສະເໜີໃຫ້ ພວກຂ້າພະເຈົ້າ ກັບຄືນເຂົ້າມາຮ່ວມ ໃນອຳນາດການປົກຄອງວຽງຈັນ ທີ່ຕິດປ້າຍ ລັດຖະບານປະສົມແຫ່ງຊາດ, ທີ່ຖືກໂຄ່ນລົ້ມໄປແລ້ວ. ເມື່ອຖືກພວກຂ້າພະເຈົ້າ ຕ້ານຄືນ ແລະ ສຽງວິພາກວິຈານ ຄັດຄ້ານຢ່າງຂັນແຂງແລ້ວ, ພວກທ່ານ ກໍໄດ້ຫັນມາ ສະເໜີຈັດຕັ້ງ ລັດຖະບານປະສົມຊຸດໃໝ່, ແຕ່ເນື້ອແທ້ນັ້ນ ຊ້ຳພັດແມ່ນຮູບ ລັດຖະບານປະສົມເກົ່າ ໃນປີ ໑໙໖໒. ຄຳເວົ້າ ຂອງພວກທ່ານ ດັ່ງກ່າວນັ້ນ ແມ່ນບິດເບືອນຄວາມຈິງ ເພື່ອຫລອກລວງ ຜູ້ຄົນຢ່າງຕື້ນໆ, ເຊິ່ງ ສະແດງອອກ ດັ່ງນີ້:

ອັນທີ່ ພວກທ່ານ ເອີ້ນວ່າ ຝ່າຍກາງ ຂອງສະເດັດເຈົ້າ ສຸວັນນະພູມານັ້ນ, ແມ່ນບໍ່ມີອີກແລ້ວ. ດັ່ງທຸກຄົນໄດ້ຮູ້, ຫລັງຈາກໄດ້ຖິ້ມປະ ນະໂຍບາຍ ສັນຕິພາບເປັນກາງ, ຍອມປະຕິບັດ ນະໂຍບາຍຮຸກຮານ ກໍ່ສົງຄາມ ຂອງຈັກກະພັດອາເມລິກາ ຢູ່ລາວແລ້ວ, ສະເດັດເຈົ້າ ສຸວັນນະພູມາ ໄດ້ເອົາກຳລັງຈຳນວນໜຶ່ງ ທີ່ມານຳເພິ່ນ ໄປເຂົ້າກັບຝ່າຍຂວາ. ໃນຕົວຈິງແລ້ວ, ນາເຖິງດຽວນີ້ ກຳລັງດັ່ງກ່າວ ໄດ້ຖືກຈັກກະພັດອາເມລິກາ ແລະ ຝ່າຍຂວາຄອບຄຸມ ຢ່າງສິ້ນເຊີງ, ແລະ ເພິ່ນເອງ ກໍໄດ້ເປັນຫົວໜ້າຝ່າຍຂວາ ດັ່ງທີ່ເພິ່ນໄດ້ເຄີຍປະກາດ ມາຫລາຍເທື່ອແລ້ວນັ້ນ. ສະນັ້ນ, ພວກທ່ານ ພຽງແຕ່ເປັນ ອຳນາດການປົກຄອງວຽງຈັນ ຝ່າຍດຽວ. ເວົ້າແນວນີ້, ພວກຂ້າພະເຈົ້າ ກໍບໍ່ໄດ້ປະຕິເສດວ່າ ຢູ່ໃນຝ່າຍນີ້ ຈະບໍ່ມີຜູ້ມັກສັນຕິພາບ ແລະ ຄວາມເປັນກາງ.

ການທີ່ພວກທ່ານ ເອີ້ນຝ່າຍ ບັນດາກຳລັງຮັກຊາດ ເປັນພຽງແຕ່ ແນວລາວຮັກຊາດນັ້ນ, ແມ່ນບໍ່ຖືກຕ້ອງກັບຄວາມຈິງ, ກຳລັງຮັກຊາດ ຂອງພວກຂ້າພະເຈົ້າແມ່ນ ປະກອບດ້ວຍ ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ, ເຊິ່ງ ບໍ່ມີຜູ້ໃດ ຈະປະຕິເສດໄດ້.

ກ່ຽວກັບ ກຳລັງເປັນກາງຮັກຊາດນັ້ນ ກໍໄດ້ຄຽງບ່າຄຽງໄຫລ່ກັບ ແນວລາວຮັກຊາດ ດຳເນີນການຕໍ່ສູ້ກູ້ຊາດ ຕ້ານຈັກກະພັດອາເມລິກາ ຜູ້ຮຸກຮານ ແລະ ລູກມືຕະຫລອດມາ ເພື່ອ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເປັນກາງ, ເອກະພາບ ແລະ ວັດທະນາຖາວອນ ຂອງບ້ານເມືອງ.

ໃນວາລະປະຊຸມ ຄັ້ງແລ້ວນີ້, ພວກທ່ານ ກໍຍັງຄົງລື້ນຄືນ ເຖິງຄຳເວົ້າທີ່ວ່າ ໃນເມື່ອຢຸດຍິງແລ້ວ ຕ້ອງຖອນກອງທະຫານ ໄປຢູ່ທີ່ຕັ້ງເກົ່າ ຂອງໃຜລາວ ກ່ອນປີ ໑໙໖໒. ອັນນີ້ ແມ່ນກົນອຸບາຍ ທີ່ດັ້ງດ້ານ ຂອງພວກທ່ານ ທີ່ໃຝ່ຝັນ ຢາກຍຶດເອົາດິນແດນ ຂອງພວກຂ້າພະເຈົ້າ ເຊິ່ງ ພວກທ່ານ ບໍ່ສາມາດ ຍຶດເອົາໄດ້ ດ້ວຍກຳລັງອາວຸດ ໃນຫລາຍປີມາແລ້ວ, ທັງມີເຈດຕະນາ ຕັ້ງແກ້ງ ແກ່ການເຈລະຈາ ໃຫ້ຍືດເຍື້ອຕໍ່ໄປ.

ທັງໝົດນັ້ນ, ລ້ວນແຕ່ແມ່ນ ການປະຕິເສດຄວາມຈິງ ແຫ່ງປະຫວັດສາດ ຢ່າງບໍ່ມີມູນຖານ ຂອງພວກທ່ານ.

ນອກຈາກ ປະຕິເສດ ຄວາມຈິງທັງໝົດເຫລົ່ານັ້ນແລ້ວ, ພວກທ່ານ ຍັງມີກົນອຸບາຍເລິກແລບ ທີ່ຢາກບີບບັງຄັບໃຫ້ ບັນດາກຳລັງຮັກຊາດ ຍອມເຂົ້າຢູ່ໃຕ້ ອຳນາດການປົກຄອງ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ຂອງພວກທ່ານ. ພ້ອມກັນນັ້ນ, ພວກທ່ານ ກໍໄດ້ປະຕິເສດ ການຈັດຕັ້ງ ສະພາປະສົມການເມືອງ ທີ່ພວກຂ້າພະເຈົ້າ ໄດ້ສະເໜີອອກ.

ໃນວາລະປະຊຸມ ເທື່ອທີ ໙, ພວກຂ້າພະເຈົ້າ ກໍໄດ້ສະເໜີ ຢ່າງແຈ່ມແຈ້ງແລ້ວວ່າ ສະພາປະສົມການເມືອງ ແມ່ນອົງການສູງສຸດ ແຫ່ງຄວາມຖືກຕ້ອງ ປອງດອງຊາດ ເຊິ່ງ ປະກອບດ້ວຍ ຜູ້ແທນອັນກວ້າງຂວາງ ຂອງຝ່າຍທັງສອງ ແລະ ຊັ້ນຄົນ, ມີໜ້າທີ່ ຊ່ວຍຊຸກຍູ້ຫນູນ ປະກອບຄຳຄິດຄຳເຫັນໃຫ້ລັດຖະບານປະສົມ ແຫ່ງຊາດຊົ່ວຄາວຊຸດໃໝ່ ປະຕິບັດ ຂໍ້ຄວາມ ທີ່ໄດ້ຕົກລົງກັນ ລະຫວ່າງຝ່າຍ, ສືບຕໍ່ ເຈລະຈາ ແກ້ໄຂບັນຫາ ທີ່ຍັງຄົງຄ້າງ ເຊິ່ງ ພົວພັນເຖິງ ທັງສອງຝ່າຍ ແລະ ສອງເຂດ, ອັນປະກັນ ການປະຕິບັດ ນະໂຍບາຍ ພາຍໃນ ແລະ ຕ່າງປະເທດ ສັນຕິພາບ ເປັນກາງ ແລະ ອື່ນໆ. ນັ້ນ ແມ່ນມີຄວາມຈຳເປັນ ທີ່ຫລີກບໍ່ໄດ້, ໂດຍສະເພາະ ຢ່າງຍິ່ງ ໃນສະພາບການ ທີ່ຈັກກະພັດອາເມລິກາ ໄດ້ເຮັດໃຫ້ຊາດເຮົາ ແຕກແຍກກັນມາເປັນເວລາສິບໆປີແລ້ວນັ້ນ, ແລະ ພວກເຂົາກໍຍັງມີ ເຈຕະນາແບ່ງແຍກ ຊາດເຮົາຕໍ່ໄປ. ເມື່ອເປັນແນວນັ້ນ, ໜ້າທີ່ເຕົ້າໂຮມ ປະຊາຊົນເຮົາ ເຂົ້າຢູ່ໃນວົງສາຄະນາຍາດແຫ່ງຊາດ ແລະ ສ້າງຄວາມຖືກຕ້ອງປອງດອງກັນນັ້ນ, ແມ່ນພາລະກິດ ອັນໃຫຍ່ຫຼວງ ແລະ ໜັກໜ່ວງທີ່ສຸດ. ສະນັ້ນ, ຖ້າບໍ່ມີອົງການຈັດຕັ້ງ ແຫ່ງຄວາມຖືກຕ້ອງປອງດອງ ອັນເໝາະສົມ, ແນ່ນອນວ່າ ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃໝ່ ກໍບໍ່ສາມາດປະຕິບັດໜ້າທີ່ໃຫ້ສຳເລັດໄດ້, ດັ່ງທີ່ບົດຮຽນຕົວຈິງຈາກການຮວມລາວ ໃນສອງຄັ້ງກໍໄດ້ຊີ້ໃຫ້ພວກເຮົາເຫັນມາແລ້ວ. ການຈັດຕັ້ງສະພາປະສົມການເມືອງດັ່ງກ່າວ, ແມ່ນພື້ນຖານອັນໜັກແໜ້ນ ໃຫ້ແກ່ຄວາມປອງດອງ ແລະ ເອກະພາບຂອງຊາດ, ມັນມີແຕ່ຈະນຳປະໂຫຍດມາໃຫ້ບ້ານເມືອງເຮົາເທົ່ານັ້ນ. ເປັນຫຍັງ ພວກທ່ານຈຶ່ງບໍ່ມັກ ? ຈຶ່ງຊອກທຸກວິທີຂັດຂວາງ ການຈັດຕັ້ງສະພາປະສົມການເມືອງ ໂດຍອ້າງວ່າ ບໍ່ໄດ້ບົ່ງໄວ້ໃນລັດຖະທຳມະນູນ ແລະ ອື່ນໆ ? ຫຼືວ່າ ພວກທ່ານ ຍັງຢາກຈົ່ງປະຕູໃຫ້ຈັກກະພັດອາເມລິກາ ກັບເຂົ້າມາມ້າງເພບ້ານເມືອງເຮົາດັ່ງທີ່ເປັນມາແລ້ວນັ້ນບໍ ?

ບັນຫາໜຶ່ງອີກ ທີ່ຄວນເອົາໃຈໃສ່, ເຖິງວ່າພວກຂ້າພະເຈົ້າໄດ້ອະທິບາຍ ຊີ້ແຈງມາຫຼາຍເທື່ອແລ້ວກໍຕາມ, ແຕ່ມາໃນວາລະປະຊຸມຄັ້ງວັນທີ ໑໙/໑໖ ນີ້, ພວກທ່ານ ກໍຍັງບໍ່ປະລະເຈຕະນາຢາກແຍກການທະຫານ ອອກຈາກການເມືອງ, ພວກທ່ານໄດ້ສະເໜີໃຫ້ອອກຄຳສັ່ງຢຸດຍິງຢ່າງຟ້າວຟັ່ງ, ແຕ່ຊົ່ວພັດບໍ່ເວົ້າ ເຖິງການແກ້ໄຂບັນຫາການເມືອງ ໄປພ້ອມກັນ, ຢາກແຍກການແກ້ໄຂບັນຫາລາວອອກແຕ່ລະບັນຫາ. ແຕ່ໃນຂະນະທີ່ທາງປາກພວກທ່ານ ເວົ້າເຖິງການຢຸດຍິງ, ເວົ້າເຖິງການແກ້ໄຂບັນຫາລາວ ໂດຍສັນຕິວິທີນັ້ນ, ຈັກກະພັດອາເມລິກາຊ້ຳພັດໄດ້ເພີ່ມທະວີ ນຳເອົາທະຫານເລວຮັບຈ້າງໄທເຂົ້າມາລາວ, ໃຊ້ກອງທະຫານໄທ, ທະຫານຝ່າຍຂວາ ແລະ ກຳລັງພິເສດ ນັບເປັນຫຼາຍສິບກອງພັນເປີດການບຸກໂຈມຕີເຂົ້າເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດຢ່າງຂະໜານໃຫຍ່, ແຕ່ເໜືອຕະຫຼອດໃຕ້. ຍົນອາເມລິກາທຸກຊະນິດ, ນັບທັງຍົນບຸດທະສາດ ເບ-໕໒ ແລະ ເບ-໖໖ ກໍໄດ້ເພີ່ມທະວີການຖິ້ມລະເບີດ ຍິງທຳລາຍ ເຜົາຜານປະເທດເຮົາຢ່າງຮ້າຍແຮງຂຶ້ນທຸກໃຊ້.

ບົດຮຽນທາງປະຫວັດສາດ ໄດ້ຊີ້ໃຫ້ເຫັນວ່າ ບັນດາການກະທຳມ້າງເພທຳລາຍ ທາງການເມືອງຂອງອາເມລິກາ ແລະ ລູກມືແມ່ນໄປພ້ອມໆກັບ ບັນດາການກະທຳທາງສົງຄາມນັ້ນ ຢູ່ສະເໝີ. ດັ່ງເຫດນັ້ນ, ການແກ້ໄຂບັນຫາລາວ ໃນປະຈຸບັນນີ້ ຈຶ່ງບໍ່ພຽງແຕ່ຈະຕ້ອງຢຸດເຊົາການສູ້ຮົບເທົ່ານັ້ນ, ແຕ່ຍັງຕ້ອງສ້າງບັນດາເງື່ອນໄຂທາງການເມືອງໄປພ້ອມໆກັບ, ອັນແນໃສ່ຮັບປະກັນ ການຮັກສາສັນຕິພາບ ແລະ ຄວາມສະຫງົບ ເພື່ອປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດຢ່າງໝັ້ນຄົງ

ຖາວອນ. ເຖິງວ່າການສູ້ຮົບຈະໄດ້ຢຸດເຊົາລົງ ໃນເບື້ອງຕົ້ນກໍ່ຕາມ, ແຕ່ຖ້າຫາກບໍ່ມີບັນດາເງື່ອນໄຂທາງການເມືອງ ທີ່ຮັບປະກັນການຮັກສາສັນຕິພາບ ແລະ ຄວາມສະຫງົບໄດ້ແລ້ວ, ໄຟອັນຕະລາຍແຫ່ງການຮົບເລືອດກໍ່ຈະລະເບີດຂຶ້ນໄດ້ທຸກເວລາ. ດ້ວຍເຫດນັ້ນ, ຈຶ່ງບໍ່ສາມາດແຍກບັນຫາການທະຫານອອກແກ້ໄຂຕ່າງຫາໄດ້.

ບັນດາທ່ານ,

ຂໍ້ສະເໜີຕ່າງໆ ຂອງບັນດາກຳລັງຮັກຊາດຕັ້ງແຕ່ເລີ່ມຕົ້ນ ເປີດກອງປະຊຸມ ເຖິງປະຈຸບັນ, ເປັນຕົ້ນແມ່ນ ຮ່າງຂໍ້ຕົກລົງ ທີ່ພວກຂ້າພະເຈົ້າໄດ້ສະເໜີອອກ ໃນວາລະປະຊຸມຄັ້ງທີ່ ໔, ລ້ວນແຕ່ແມ່ນຂໍ້ສະເໜີທີ່ຖືກຕ້ອງ, ສົມເຫດສົມຜົນ, ແມ່ນວິທີການອັນດຽວ ທີ່ແນໃສ່ ແກ້ໄຂບັນຫາຂອງປະເທດຊາດໃນປະຈຸບັນ, ນັ້ນ ແມ່ນຫຼັກໝັ້ນອັນຖືກຕ້ອງ ແລະ ເຈຕະນາດີ ຂອງບັນດາກຳລັງຮັກຊາດ. ດັ່ງນັ້ນພວກທ່ານຕ້ອງຕອບສະໜອງຂໍ້ສະເໜີຕ່າງໆ ດັ່ງກ່າວຂອງບັນດາກຳລັງຮັກຊາດ ດ້ວຍຄວາມຈິງໃຈ ແລະ ເຂັ້ມງວດ.

ເຖິງຍາມແລ້ວ ທີ່ຝ່າຍວຽງຈັນ ຈະຕ້ອງເອົາຕົວອອກຈາກການຄອບງຳຂອງ ຈັກກະພັດອາເມລິກາ, ຈະຕ້ອງຄຳນຶງເຖິງຊາດ ຂອງເຮົາ ແລ້ວປະລະການປະຕິບັດນະໂຍບາຍຮຸກຮານ ຂອງຈັກກະພັດອາເມລິກາ, ດຳເນີນການເຈລະຈາດ້ວຍຄວາມຈິງໃຈ ກັບບັນດາກຳລັງຮັກຊາດ, ເຮັດໃຫ້ກອງປະຊຸມ ເຈລະຈາກ້າວໄປເຖິງບ່ອນຕົກລົງກັນໄດ້ ຕາມທີ່ພວກຂ້າພະເຈົ້າໄດ້ສະເໜີແລ້ວນັ້ນ, ກ່ອນອື່ນພວກທ່ານຕ້ອງປະລະການກະທຳແບບຂີ້ໂກງ, ຕ້ອງປະລະຫຼັກໝັ້ນອັນດື້ດ້ານ ແລະ ທ່າທີຂາດເຈຕະນາດີ. ສະເພາະໜ້ານີ້, ພວກທ່ານບໍ່ຄວນແກ່ບັນຫາລະບຽບການ ທີ່ຍັງຄົງຄ້າງຢູ່ນັ້ນ ໃຫ້ຍືດເຍື້ອໄປ, ເຊັ່ນບັນຫາຊື່ ແລະ ຖານະຂອງຄະນະຜູ້ແທນແຕ່ລະຝ່າຍ, ບັນຫາປັກທຸງໃສ່ໃນຫ້ອງປະຊຸມ.

ສ່ວນ ບັນດາກຳລັງຮັກຊາດ, ເຖິງແມ່ນຈັກກະພັດອາເມລິກາ ແລະ ລູກມືຈະອອກແຮງຂັດຂວາງທຳລາຍ ການເຈລະຈາແນວໃດກໍ່ຕາມ, ຝ່າຍຕົນ ກໍ່ຈະໃຊ້ຄວາມບາກບັ່ນ ພະຍາຍາມ ເພື່ອຊຸກຍູ້ກອງປະຊຸມໃຫ້ກ້າວໜ້າໄປ, ຕອບສະໜອງກັບຄວາມຄອງຄອຍ ແລະ ຄວາມມຸ່ງມາດ ປາຖະໜາອັນແຮງກ້າຂອງປະຊາຊົນທັງຊາດ.

---